

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

EDL-Generation Public Company

ປີດລາຍງານ ປະຈຳປີ 2016

ANNUAL REPORT 2016







Registered ISO 14001:2004

UKAS MANAGEMENT SYSTEMS 127

SYSTEM CERTIFICATION BMTRADA ISO 9001 No. 10496

UKAS MANAGEMENT SYSTEMS 012

TRIS RATING BBB+

ສາລະບານ

		ໜ້າ
I.	**ປະຫວັດຂອງ ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ/History of EDL-Generation Public Company……..**	**1-3**
II.	**ເປົ້າໝາຍຫລັກຂອງການດຳເນີນທຸລະກິດ/The Core Business Operation……...**	**3-4**
III.	**ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ/Business Operation and Productivity…….**	**4-5**
1	ການຜະລິດ / Generation.....	5-6
2	ລາຍຮັບ/ Income	6
3	ລາຍຈ່າຍ / Expenses…….	7
4	ການມອບພັນທະໃຫ້ລັດ / Tax……..	7-8
5	ກຳໄລ-ຂາດທຶນ ແລະ ເງິນປັນຜົນ/ Profit-Loss and Dividend……	8
IV.	**ໂຄງສ້າງທຶນ ແລະ ຜູ້ຖືຮຸ້ນ/ Capital Structure and Shareholders……**	**9**
1	ໂຄງສ້າງທຶນ / Capital Structure ……	9
2	ຜູ້ຖືຮຸ້ນ / Shareholders……..……..	9
V.	**ໂຄງຮ່າງການຈັດຕັ້ງ ແລະການບໍລິຫານ/ Organization chart and Management……**	**10-13**
VI.	**ການຄຸ້ມຄອງພາຍໃນ/ Internal Control……**	**14**
1	ຄະນະກຳມະການກວດສອບພາຍໃນ / Internal Audit Committee (IAC)……	14-15
2	ຄະນະກຳການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້ຂາຍໄຟຟ້າ / The Committee on Negotiation of Concession Agreement, Shareholder Agreement, and Power Purchasing Agreement (CASAPPAC)……	15-16
3	ຄະນະກຳມະການຈັດຊື້ ແລະສະໜອງວັດສະດຸອຸປະກອນ/ Purchasing and Equipment Supply Committee (PESC)……	16-17
4	ຄະນະກຳມະການຄົ້ນຄວ້າມະໂຍບາຍຍ້ອງຍໍແລະ ປະຕິບັດວິໄນ (ຄນຍວ)/ Honor and Discipline Committee (HDC)…….	17-18
VII.	**ການຂະຫຍາຍ ແລະພັດທະນາທຸລະກິດ /Business Expansion and Development……...**	**18-20**
VIII.	**ວຽກງານການເຄື່ອນໄຫວດ້ານສິ່ງແລດລ້ອມ, ສັງຄົມ ແລະກິລາ /The Report on Environmental, Social and Sport Activities……..**	**20-21**
1	ວຽກງານສິ່ງແລດລ້ອມ /Environmental Activities.....	20-21
2	ວຽກງານຊ່ວຍເຫລືອສັງຄົມແລະກິລາ / Corporate Social Responsibility (CSR) and sport...	21-22
IX.	**ການພັນທະນາຊັບພະຍາກອນມະນຸດ /Human Resource Development……...**	**22-24**
	ເອກະສານດ້ານການເງິນ /Financial Statements……	**25**

I. ປະຫວັດຄວາມເປັນມາຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ(ຜ-ຟຟລ)

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຖືກສ້າງຕັ້ງຂຶ້ນ ໃນວັນທີ 15 ທັນວາ 2010 ໂດຍ ລັດວິສາຫະກິດ ໄຟຟ້າລາວ (ຟຟລ) ໂອນເອົາບັນດາເຂື່ອນ ແລະ ຊັບສິນທີ່ກ່ຽວຂ້ອງກັບການຜະລິດ ມາໃຫ້ ຜ-ຟຟລ, ຊຶ່ງປະກອບດ້ວຍ: ເຂື່ອນໄຟຟ້ານ້ຳງື່ມ 1, ເຂື່ອນໄຟຟ້ານ້ຳມັງ 3, ເຂື່ອນໄຟຟ້ານ້ຳເລີກ, ເຂື່ອນໄຟຟ້າເຊເສັດ 1 ແລະເຂື່ອນໄຟຟ້າເຊເສັດ 2, ເຂື່ອນໄຟຟ້າເຊລະບໍ ແລະ ເຂື່ອນໄຟຟ້ານ້ຳຊອງ , ລວມມີກຳລັງຕິດຕັ້ງທັງໝົດ 387 MW; ພ້ອມດ້ວຍພະນັກງານທີ່ປະຈຳຢູ່ເຂື່ອນທັງໝົດ ແລະພະນັກງານສຳນັກງານໃຫຍ່ ຈຳນວນໜຶ່ງໃຫ້ແກ່ ຜ-ຟຟລ.

ໃນເບື້ອງຕົ້ນ ຜ-ຟຟລ ມີທຶນຈົດທະບຽນຈຳນວນ 2.605.792.200.000 ກີບ ແລະ ຄິດເປັນຮຸ້ນ 651.448.050 ຮຸ້ນ (ຮຸ້ນລະ 4.000 ກີບ). ຈາກນັ້ນ ບໍລິສັດ ໄດ້ຕົກລົງໃຫ້ມີການເພີ້ມທຶນດ້ວຍການອອກຮຸ້ນຄັ້ງ ທຳອິດ (IPO) ດ້ວຍຈຳນວນຮຸ້ນ 217 .149.000 ຮຸ້ນ ໃຫ້ມະຫາຊົນທົ່ວໄປ, ໃນວັນທີ 07 ມັງກອນ 2011 ບໍລິສັດໄດ້ຈົດທະບຽນດ້ວຍທຶນທັງໝົດ 3.474.388.200.000 ກີບ ແລະ ມີຈຳນວນຮຸ້ນທັງໝົດ 868.597.050 ຮຸ້ນ. ໃນວັນທີ 11 ມັງກອນ 2011, ຜ-ຟຟລ ຈຶ່ງໄດ້ຈົດທະບຽນເຂົ້າໃນ ຕະຫລາດຫລັກຊັບລາວ ເພື່ອຈຳໜ່າຍຮຸ້ນ ໃນຕະຫລາດຂັ້ນ II ໃຫ້ນັກລົງທຶນຢ່າງເປັນທາງການ. ຊັດສ່ວນການຖືຮຸ້ນໃນ ຜ-ຟຟລ ຈຶ່ງມີ ຟຟລ 75% ແລະ ອີກ 25% ແມ່ນຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ.

ໃນກາງ ປີ 2012, ຜ-ຟຟລ ໄດ້ອອກຮຸ້ນສາມັນ ແບບສະເໜີຂາຍໃຫ້ຜູ້ຖືຮຸ້ນ ແລະ ແບບສະເໜີຂາຍຕໍ່ ມວນຊົນທົ່ວໄປ ເພື່ອລະດົມທຶນໄປຊື້ເອົາຮຸ້ນໃນ 4 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຟຟລ ຖືຮຸ້ນຢູ່ ຊຶ່ງປະກອບ ມີ: ເຂື່ອນໄຟຟ້າເທີນຫີນບູນ (60%), ເຂື່ອນໄຟຟ້ານ້ຳງື່ມ 2 (25%), ເຂື່ອນໄຟຟ້າຫ້ວຍເຫາະ (20%) ແລະ ເຂື່ອນ ໄຟຟ້ານ້ຳລີກ 1-2 (10%) ຊຶ່ງມີກຳລັງຕິດຕັ້ງທັງໝົດ 494 MW (ຕາມຊັດສ່ວນການຖືຮຸ້ນ) ເຮັດໃຫ້ກຳລັງຕິດຕັ້ງ ທັງໝົດຂອງ ຜ-ຟຟລ ມີຕົວເລກຢູ່ 881 MW. ດັ່ງນັ້ນໃນທ້າຍປີ 2012 ຜ-ຟຟລ ມີທຶນຈົດທະບຽນເປັນເງິນ 4.904.867.060.000 ກີບ ແລະ ມີຮຸ້ນທັງໝົດ 1.226.216.765 ຮຸ້ນ ຊັດສ່ວນການຖືຮຸ້ນຍັງຮັກສາເໝືອນເດີມ.

ໃນເດືອນ ຕຸລາ 2014, ຜ-ຟຟລ ໄດ້ກາຍເປັນ ບໍລິສັດມະຫາຊົນທຳອິດ ໃນ ສປປ ລາວ ທີ່ໄດ້ຮັບການຈັດ ລຳດັບຄວາມໜ້າເຊື່ອຖື ໂດຍ ບໍລິສັດ TRIS Rating ຈຳກັດ ໃນລະດັບ BBB+, ເຊິ່ງຈັດຢູ່ໃນກຸ່ມ Investment Grade ຫຼື ໃນກຸ່ມລະດັບຄວາມສ່ຽງທີ່ເໝາະສົມ ແລະ ລົງທຶນໄດ້.

ໃນວັນທີ 12 ທັນວາ 2014, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ ແລະ ສາມາດລະດົມທຶນໄດ້ 6.500 ລ້ານ ບາດ. ທຶນຈຳນວນດັ່ງກ່າວນີ້ ແມ່ນຈະຖືກນຳໃຊ້ ເພື່ອຂະຫຍາຍກຳລັງການຜະລິດເພີ່ມຕື່ມ ຈຳນວນ 392 MW, ໃນນັ້ນມີ ໂຄງການຜະລິດໄຟຟ້າຈາກ ຟຟລ ຈຳນວນ 4 ໂຄງການ ລວມກຳລັງຕິດຕັ້ງ 292 MW ແລະ ຊື້ຮຸ້ນທີ່ ຟຟລ ຖືໃນໂຄງການ IPP ອີກ 5 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 100 MW.

ມາຮອດ ວັນທີ 10 ກຸມພາ 2015, ຜ-ຟຟລ ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳງື່ມ 5 (15%) ຕາມຊັດ ສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 18 MW ເຮັດໃຫ້ມີກຳລັງຕິດຕັ້ງເພີ່ມຂຶ້ນເປັນ 899 MW.

ເພື່ອສືບຕໍ່ໃຫ້ບໍລິສັດເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນເດືອນ ກັນຍາ 2015 ຜ-ຟຟລ ໄດ້ອອກຮຸ້ນ ເພີ່ມທຶນຄັ້ງທີ 3, ເຮັດໃຫ້ລະດົມທຶນໄດ້ 2.754 ຕື້ກີບ. ເງິນທຶນທີ່ລະດົມໄດ້ໃນຄັ້ງນີ້ຈະຖືກນຳໃຊ້ເຂົ້າໃນການ ຂະຫຍາຍກຳລັງຕິດຕັ້ງ ຂອງບໍລິສັດ ເພີ່ມຕື່ມຈຳນວນ 386,2 MW, ໃນນັ້ນມີ ໂຄງການຜະລິດໄຟຟ້າທີ່ຈະຮັບໂອນ ຈາກ ຟຟລ ຈຳນວນ 5 ໂຄງການ ລວມ 277,9 MW, ການລົງທຶນໃນຮຸ້ນ ຂອງ ຟຟລ ໃນບັນດາໂຄງການ IPP

ຈຳນວນ 6 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 108,3 MW. ເຮັດໃຫ້ທຶນຈົດທະບຽນເປັນເງິນ 6.717.214.788.000 ກີບ ແລະ ມີຮຸ້ນທັງໝົດ 1.679.303.697 ຮຸ້ນ ຊັດສ່ວນການຖືຮຸ້ນຍັງຮັກສາເໝືອນເດີມ.

ໃນ ວັນທີ 24 ທັນວາ ປີ 2015, ຜ-ຟຟລ ໄດ້ຮັບໂອນ ເຂື່ອນໄຟຟ້ານ້ຳຄານ 2 ກຳລັງຕິດຕັ້ງ 130 MW, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ກຳລັງຕິດຕັ້ງ 88 MW ແລະ ເຂື່ອນໄຟຟ້ານ້ຳສະນາ ກຳລັງຕິດຕັ້ງ 14 MW ເຮັດໃຫ້ ມີກຳລັງຕິດຕັ້ງທັງໝົດເພີ່ມຂຶ້ນເປັນ 1.131 MW.

ໃນວັນທີ 2 ກັນຍາ 2016, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ເປັນເງິນໂດລາສະຫາລັດທີ່ປະເທດໄທ ທຶນຈຳ ນວນດັ່ງກ່າວນີ້ ແມ່ນຈະຖືກນຳໃຊ້ໃນ 10 ໂຄງການປະກອບມີ: ໂຄງການແຊລະບໍ່ພາກຂະຫຍາຍ, ໂຄງການເຊ ເສັດ 2 ພາກຂະຫຍາຍ, ໂຄງການນ້ຳເທີນ 1, ໂຄງການປາກແບ່ງ, ໂຄງການພະລັງງານແສງອາທິດ (Solar), ໂຄງ ການນ້ຳດີກ 1, ໂຄງການສ້ອມແປງໃຫຍ່ເຂື່ອນໄຟຟ້າເຊເສັດ 1-2, ໂຄງການສ້ອມແປງໃຫຍ່ຈັກເບີ 2 ເຂື່ອນໄຟຟ້າ ນ້ຳມັງ 3, ໂຄງການນ້ຳພູນ (Finance Cost), ແລະ ໂຄງການນ້ຳບີ 1, 2, 3 (Finance Cost) ຊຶ່ງວົງເງິນໃນການ ລະດົມທຶນຄັ້ງນີ້ 312 ລ້ານໂດລາສະຫາລັດ.

I. History of EDL-Generation Public Company

The EDL-Generation Public Company (EDL-Gen) was incorporated as a public company with limited liability on 15 December 2010 through a spin off fromElectricité Du Laos (EDL) where EDL's generation assets were transferred to the company including Nam Ngum 1, Nam Mang 3, Nam Leuk, Xeset 1, Xeset 2, Selabam and Nam Song hydropowerplants, with a installedcapacity of 387 MW. The technical staffs, who are working for the hydropower plants and some employees at EDL headquarter, have been transferred to EDL-Gen.

In the beginning, EDL-Gen has a registered capital with the total of 2.605.792.200.000 Kip or 651.448.050 in shares (4.000 Kip per share). EDL-Gen has approved the increase of its capital to 217.149.000 shares for the initial public offering (IPO). On 7 January 2011, the company had the registered capital with the total of 3.474.388.200.000 Kip, which amounts to 868.597.050 shares. On 11 January 2011, EDL-Gen was officially listed on the Lao Securities Exchange (LSX).

In the middle of 2012, EDL-Gen sold successfully Right offering and Public offering in order to purchased shares offour Independence Power Producer (IPPs) from EDL. The four IPPs are 60% of shares in Theun Hinboun, 25% of shares in Nam Ngum 2,20% of shares in Houay Ho and10% of sharesin Nam Lik 1-2 hydropower plants. The total installed capacity of these four IPPsamount 494 MW, increasing EDL-Gen's installed capacity of 881 MW. At the end of 2012, EDL-Gen has registered capital of 4.904.867.060.000 kip and 1.226.216.765 shares.

In October 2014, EDL-Gen became the first public company in Lao PDR to have an investment grade credit rating by TRIS Rating Co., Ltd. at "BBB+".

On 12 December 2014, EDL-Gen officially issued debentures and successfully raised the targeted THB 6.500 million. This financial capital are being invested for an additional 392 MW, comprising of 4 hydropower projects to be transferred from EDL to EDL-Gen with

a combined installed capacity of 292 MW; and the acquisitions of shares from EDL held at 5 IPPs with a total of 100 MW.

On 10 February 2015, EDL-Gen has successfully transferred shares of Nam Ngum 5 Hydropower plant (15%) from EDL which increased the total installed capacity of the company to 899 MW.

To promote continued growth, in September 2015 EDL-Gen issued the third ordinary share under RO and PO, raising 2.754 billion kip. This amount of fund will finance a further 513,1 MW, including 5 wholly-owned projects from EDL with a combined 277,9 MW, shares from EDL in 6 IPPs with equity attributed installed capacity of 108,3 MW. The registered capital of the company increased to 6.717.214.788.000 kip and the total share grew up to 1.679.303.697 shares. The shareholders structure remained the same.

On 24 December 2015, EDL-Gen Completion of asset transferring 3 hydropower plan projects: Nam Khan 2 hydropower plan project with an installed capacity of 130 MW, Houay Lamphan Gnai hydropower plan project with an installed capacity of 88 MW and Nam Sana hydropower plan project with an installed capacity of 14 MW from EDL which increased the total installed capacity of the company to 1.131 MW.

EDL-Gen issued USD Bond valued 312 million USD in Thailand on September 2nd, 2016. The bond was planned to invest in 10 projects which are Selabam Extension Project, Xeset 2 Extension Project, Nam Teun 1 Project, Pak Beng Project, Solar Farm Project Phase 1, Nam Dik 1 Project, Overhaul of Xeset 1-2 and Nam Mung 3 unit 1, Nam Phoun Project (Finance cost), and Nam Bi 1,2,3 Project (Finance cost).

II. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ

1. ຜະລິດໄຟຟ້າຂາຍຍົກໃຫ້ແກ່ ລັດວິສາຫະກິດໄຟຟ້າລາວ, ກໍ່ສ້າງລະບົບສາຍສົ່ງ ແລະ ສະຖານີໄຟຟ້າຖ້າຫາກ ມີຄວາມຈຳເປັນ;
2. ລົງທຶນໃນບັນດາຊັບສິນທີ່ໃຊ້ໃນການຜະລິດໄຟຟ້າຂອງ ຟຟລ ເຊິ່ງກຳລັງໄດ້ຮັບການກໍ່ສ້າງ ແລະ ໄດ້ຂຶ້ນແຜນ ໄວ້ແລ້ວ ຫລື ລົງທຶນດ້ວຍການເຂົ້າຖືຮຸ້ນທັງໝົດ ຫລື ບາງສ່ວນແທນ ຟຟລ ໃນບັນດາໂຄງການຜູ້ຜະລິດ ໄຟຟ້າເອກະລາດ (Independent Power Producer: IPP);
3. ຮັບເໝົາບໍລິການ ການເດີນເຄື່ອງ ແລະບຳລຸງຮັກສາ (Operation & Maintenance Service) ໃຫ້ແກ່ ບັນດາໂຄງການຜະລິດໄຟຟ້າຕ່າງໆ ໃນຂອບເຂດທົ່ວປະເທດ.

II. The Core Business Operation

1. To generate and sell (wholesale) electricity to EDL as well as construct the transmission lines and substations as necessary.
2. To invest in the generation assets, which are constructed and planned by EDL or the shares wholly owned or partially owned by EDL in the EDL's IPPs.
3. To provide operation and maintenance services to other power generation projects in Lao PDR.

ວິໄສທັດ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ມີຄວາມປາດຖະຫນາຢ່າງແຮງກ້າ. (1) ເປັນບໍລິສັດນໍາຫນ້າອັນດັບ ໜຶ່ງ ຂອງ ສປປ ລາວ ໃນການຮັບປະກັນ ແລະ ການຕອບສະຫນອງພະລັງງານໄຟຟ້າຢ່າງພຽງພໍ ແລະ ທັນການໃຫ້ ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ. (2) ເປັນບໍລິສັດທີ່ຈະປະກອບສ່ວນຢ່າງແຂງແຮງສ້າງໃຫ້ ສປປ ລາວ ກາຍເປັນຫມໍ້ໄຟຂອງອາຊຽນ ແລະ ປະກອບສ່ວນຢ່າງເຕັມກໍາລັງ ເພື່ອເຮັດໃຫ້ຂົງເຂດອາຊຽນມີ ຄວາມຫມັ້ນຄົງທາງດ້ານພະລັງງານໄຟຟ້າຢ່າງຍືນຍົງ.

Vision

EDL-Gen has strong desire: (1) to be a number one leading company in Lao PDR in ensuring a reliable electric power supplier for the socio-economic development of Lao PDR. (2) To be a company which strongly contributes to the realization of Lao PDR's vision of being a battery of ASEAN in order to contribute and ensure sustainable and reliable power supplier to ASEAN community.

ພາລະກິດ

1. ເປັນບໍລິສັດນໍາຫນ້າອັນດັບຫນຶ່ງໃນການດໍາເນີນທຸລະກິດຜະລິດໄຟຟ້າ ເພື່ອຮັບໃຊ້ພາຍໃນປະເທດ ແລະພາຍ ໃນຂົງເຂດພາກພື້ນດ້ວຍລາຄາທີ່ສົມເຫດສົມຜົນ ແລະ ສ້າງມູນຄ່າໃຫ້ແກ່ຜູ້ຖືຮຸ້ນ.
2. ຢືນຄຽງຄູ່ ແລະ ສົມທົບຢ່າງສະຫນິດແຫນ້ນກັບ ລັດວິສາຫະກິດໄຟຟ້າລາວ ຮ່ວມຮັກສາຄວາມຫມັ້ນຄົງທາງ ດ້ານພະລັງງານບໍ່ວ່າທາງດ້ານປະລິມານກໍຄືຄຸນນະພາບ ເພື່ອສະຫນອງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ໃນຂອບເຂດທົ່ວປະເທດ ແລະໃນຂົງເຂດອາຊຽນ.
3. ຕັ້ງຫນ້າຍົກສູງ ແລະພັດທະນາຄຸນສົມບັດ ແລະຄວາມສາມາດຂອງພະນັກງານ ຂອງ ບໍລິສັດ ໃນທຸກລະດັບ ໃຫ້ມີຄວາມກ້າວຫນ້າ ແລະມີສ່ວນຮ່ວມໃນການຂະຫຍາຍ ແລະພັດທະນາບໍລິສັດດ້ວຍຄວາມຮູ້ສຶກທີ່ ພາກພູມໃຈ, ມີຄວາມຮັບຜິດຊອບ ແລະເປັນເຈົ້າຂອງ.

Mission

1. To be a number one leading company in electricity generating business to provide Lao PDR and neighboring nations, with sustainable power at a reasonable prices and to create the shareholder's value.
2. To stand side by side with EDL and coordinate closely with EDL in order to maintain power reliability and effectively respond to the needs of the social and economic development of Lao PDR as well as the ASEAN nations.
3. To upgrade and train its staff, so that they can actively participate in the development of the company with pride, responsibility and ownership.

III. ການດໍາເນີນທຸລະກິດ ແລະ ຜົນການດໍາເນີນງານ

ຜ-ຟຟລ ໄດ້ດໍາເນີນທຸລະກິດໃນການຜະລິດກະແສໄຟຟ້າ ເພື່ອຂາຍຍົກໃຫ້ ຟຟລ ຕະຫລອດປີ, ໃນ ຂະນະດຽວກັນຕ້ອງໄດ້ປັບປຸງການຄຸ້ມຄອງບໍລິຫານພາຍໃນໃຫ້ສອດຄ່ອງກັບລະບຽບ ແລະ ກົດໝາຍຕ່າງໆ ທີ່ ກ່ຽວກັບ ບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດຫລັກຊັບລາວ ເຊິ່ງຜົນການດໍາເນີນທຸລະກິດສາມາດສັງ ລວມໄດ້ດັ່ງນີ້:

III. Business Operation and Productivity

EDL-Gen has significantly operated the business by generating electricity to sell to EDL. Meanwhile, the company had to improve the overall management to suit the regulations and laws of public company, registered in Lao Securities Exchange. The outcomes of our business operation this whole year are as follows:

1. ການຜະລິດ

ຜ-ຟຟລ ມີເຂື່ອນທີ່ດຳເນີນການຜະລິດກະແສໄຟຟ້າ ທັງໝົດ 10 ເຂື່ອນ (ພາຍໃຕ້ການຄຸ້ມຄອງ 100%) ມີກຳລັງຕິດຕັ້ງ ທັງໝົດ 1.131 MW. ໃນປີ 2016 ຜ່ານມານີ້, ເນື່ອງຈາກທຳມະຊາດບໍ່ເອື້ອອຳນວຍ ໃນການຜະລິດກະແສໄຟຟ້າ, ເຮັດໃຫ້ການຜະລິດກະແສໄຟຟ້າໄດ້ 2.628 ,67 GWh, ຫຼຸດແຜນປີທີ່ຂຶ້ນໄວ້ 9 ,71% ແລະ ການຜະລິດຈາກ 5 ເຂື່ອນຜູ້ຜະລິດໄຟຟ້າເອກະລາດ ຕາມຊັດສ່ວນການຖືຮຸ້ນຂອງ ຜ-ຟຟລ ສາມາດຜະລິດໄດ້ 1.988,86 GWh, ຫລຸດແຜນການ 14,07%, ລວມການຜະລິດທັງໝົດໃນ ປີ 2016 ຈຳນວນ 4.617,53 GWh. ດັ່ງຕາຕະລາງລຸ່ນນີ້:

1. Generation

The company currently owns 10 hydropower plants, with a combined installed capacity of 1.131 MW. Since the weather condition in 2016 was not supportive, leading company's generation equaled 2.628,67 GWh, (9,71% surpasses the annual plan). The generation of 5 IPPs (Independent Power Producer) hydropower plants reached 1.988,86 GWh, (14,07% below the annual plan). Therefore, the total generation of EDL-Gen in 2016 was 4.617,53 GWh.

ການຜະລິດພະລັງງານຂອງ10 ເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ/ Power generation of EDL-Gen

ຫົວໜ່ວຍ / Unit: GWh

ຊື່ເຂື່ອນ	Name of HPP	ລາຍການ/Detail			
		ແຜນການ	ປະຕິບັດໄດ້	ທຽບໃສ່ແຜນ	ທຽບໃສ່ການຜະລິດລວມ
		Planed	Actual	Comparison of planed	Comparison of total
ນ້ຳງື່ມ 1	Nam Ngum1 HPP	1.085,00	1.115,29	102,79%	42,43%
ເຊເສັດ 2	Xe Set2 HPP	243,02	245,51	101,02%	9,34%
ນ້ຳເລີກ	Nam Leuk HPP	216,00	213,24	98,72%	8,11%
ນ້ຳມັງ 3	Nam Mang3 HPP	187,00	140,57	75,17%	5,35%
ເຊເສັດ 1	Xe Set1 HPP	150,10	161,76	107,77%	6,15%
ນ້ຳຊອງ	Nam Song HPP	12,00	9,70	80,83%	0,37%
ແຊລະບຳ	Se Labam HPP	24,06	25,00	103,91%	0,95%
ນ້ຳຄານ 2	Nam Khan HPP	478,65	282,77	59,08%	10,76%
ຫ້ວຍລຳພັນໃຫ່ຍ	Houay Lam Phan Ngai HPP	470,60	390,62	83,00%	14,86%
ນ້ຳສະນາ	Nam SaNa	45,00	44,21	98,24%	1,68%
ລວມ	**Total**	**2.911,43**	**2.628,67**	**90,29%**	**100%**

ການຜະລິດຂອງ 5 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຜ-ຟຟລ ເຂົ້າຖືຮຸ້ນ						
Power generation of 5 IPPs						
						ຫົວໜ່ວຍ/Unit: GWh
ຊື່ເຂື່ອນ **Name of HPP**	**ເທີນຫີນບຸນ** **Theun Hinboun**	**ນ້ຳງື່ມ2** **Nam Ngum2**	**ຫ້ວຍເຫາະ** **Houay Ho**	**ນ້ຳງື່ມ5** **Nam Ngum5**	**ນ້ຳລິກ 1-2** **Nam Lik 1-2**	**ລວມ/Total**
ລາຍການ / Detail	ຕາມຊັດສ່ວນ 60%	ຕາມຊັດສ່ວນ 25%	ຕາມຊັດສ່ວນ 20%	ຕາມຊັດສ່ວນ 15%	ຕາມຊັດສ່ວນ 10%	
ແຜນການ / Planed	1.530,88	554,50	79,93	99,18	50,00	**2.314,49**
ປະຕິບັດໄດ້ / Actual	1.288,86	507,89	70,08	68,27	53,76	**1.988,86**
ທຽບໃສ່ແຜນ Comparison of planed	84,19%	91,59%	87,68%	68,84%	107,51%	**85,93%**
ທຽບໃສ່ການຜະລິດລວມ Comparison of total	**64,80%**	**25,54%**	**3,52%**	**3,43%**	**2,70%**	**100%**

2. ລາຍຮັບ

ຜ-ຟຟລ ມີລາຍຮັບທັງໝົດ 1.252.246 ລ້ານກີບ, ຄິດເປັນ 93,09% ທຽບໃສ່ແຜນການ ໃນນັ້ນລາຍຮັບສ່ວນໃຫຍ່ ແມ່ນມາຈາກການຈຳໜ່າຍກະແສໄຟຟ້າ ຂອງ 10 ເຂື່ອນ ຜ-ຟຟລ ໃຫ້ແກ່ ຟຟລ, ເຊິ່ງມູນຄ່າທັງໝົດ 1.241.181 ລ້ານກີບ, ກວມເອົາ 99,12% ຂອງລາຍຮັບທັງໝົດ.

2. Income

The total revenue of EDL-Gen was 1.252.246 million Kip, and equaled to 93,09% of the plan. EDL-Gen's revenue came mainly from sales of electricity of ten hydropower plantsand it was 1.241.181 million Kip and equaled to 99,12% of total revenue.

ລາຍຮັບຈາກການຂາຍພະລັງງານໄຟຟ້າ Income from selling energy					
					ຫົວໜ່ວຍ: ລ້ານກີບ/Unit: Million kip
ຊື່ເຂື່ອນ	**Name of HPP**	**ລາຍການ/Detail**			
		ແຜນການ	**ປະຕິບັດໄດ້**	**ທຽບໃສ່ແຜນ**	**ທຽບໃສ່ການຜະລິດລວມ**
		Planed	**Actual**	**Comparison of planed**	**Comparison of total**
ນ້ຳງື່ມ 1	Nam Ngum1 HPP	469.049	480.805	102,51%	38,74%
ເຊເສັດ 2	Xe Set2 HPP	103.831	105.147	101,27%	8,47%
ນ້ຳເລິກ	Nam Leuk HPP	91.541	91.378	99,82%	7,36%
ນ້ຳມັ໋ງ 3	Nam Mang3 HPP	79.771	60.087	75,32%	4,84%
ເຊເສັດ 1	Xe Set1 HPP	63.614	68.946	108,38%	5,55%
ນ້ຳຊອງ	Nam Song HPP	5.063	4.061	80,22%	0,33%
ແຊລະບ໋ຳ	Se Labam HPP	12.327	10.628	86,22%	0,86%
ນ້ຳຄານ 2	Nam Khan HPP	248.093	158.326	63,82%	12,76%
ຫ້ວຍລຳພັນໃຫ່ຍ	Houay Lam Phan Ngai HPP	245.327	221.549	90,31%	17,85%
ນ້ຳສະນາ	Nam SaNa	23.582	40.255	170,70%	3,24%
ລວມ	**Total**	**1.342.197**	**1.241.181**	**92,47%**	**100%**

3. ລາຍຈ່າຍ

ຜ-ຟຟລ ມີລາຍຈ່າຍທັງໝົດໃນການດຳເນີນທຸລະກິດ ຈຳນວນ 875.948 ລ້ານກີບ, ເຊິ່ງກວມເອົາປະມານ 69,95% ຂອງລາຍຮັບທັງໝົດ, ໃນນັ້ນລາຍຈ່າຍຫຼັກແມ່ນມາຈາກຕົ້ນທຶນການຂາຍເຊິ່ງເທົ່າ 486.391 ລ້ານກີບ ຫຼື ຄິດເປັນ 38,84% ຂອງລາຍຮັບທັງໝົດ, ລາຍຈ່າຍການດຳເນີນງານ 120.729 ລ້ານກີບ ຫຼື ຄິດເປັນ 9,64% ຂອງ ລາຍຮັບທັງໝົດ ແລະ ສ່ວນທີ່ເຫລືອເປັນລາຍຈ່າຍທາງການເງິນອື່ນໆ.

3. Expenses

Total expenses of EDL-Gen were 875.948 million Kip or 69,95% of the total revenue, in which the majority expenses were cost of sales amounted to 486.391million Kipor38,84% of the total revenue, and operating cost amounted to 120.729million Kip or 9,64% of the total revenue. The remaining expenses were financial expenses.

ລາຍຈ່າຍ / Expenses			
ລ/ດ No.	ລາຍການລະອຽດ Description	ຈຳນວນ (ລ້ານກີບ) Amount (Million Kip)	% ທຽບໃສ່ລາຍຮັບ % of Revenue
1	ຕົ້ນທຶນການຂາຍ / Cost of Sales	486.391	38,84%
2	ດອກເບ້ຍ / Interest	154.918	12,37%
3	ລາຍຈ່າຍໃນການດຳເນີນງານ Operating and administrative expenses	120.729	9,64%
4	ຂາດທຶນຈາກອັດຕາແລກປ່ຽນສຸດທິ/Foreign Exchange Loss, net	64.800	5,17%
5	ອາກອນ / Tax	49.110	3,92%
ລວມທັງໝົດ / Total		**875.948**	**69,95%**

4. ການມອບພັນທະໃຫ້ລັດ

ຜ-ຟຟລ ແມ່ນ ບໍລິສັດມະຫາຊົນ ທີ່ໄດ້ຈົດທະບຽນໃນຕະຫລາດຫລັກຊັບລາວ, ໂດຍທາງດ້ານນິຕິກຳ, ຜ-ຟຟລ ກໍ່ແມ່ນ ບໍລິສັດໜຶ່ງທີ່ດຳເນີນທຸລະກິດພາຍໃຕ້ກົດໝາຍຂອງ ສປປ ລາວ; ດັ່ງນັ້ນ, ການມອບພັນທະກໍ່ເປັນ ອີກວຽກໜຶ່ງທີ່ ຜ-ຟຟລ ໄດ້ເອົາໃຈໃສ່ປະຕິບັດຢ່າງຕັ້ງໜ້າ. ພັນທະທີ່ ຜ-ຟຟລ ມອບໃຫ້ລັດ, ປະກອບດ້ວຍ ຄ່າພາກ ຫຼວງ 1% ຂອງ ລາຍຮັບຈາກການຂາຍກະແສໄຟຟ້າ, ອາກອນກຳໄລ 10% ຂອງກຳໄລ, ອາກອນເງິນປັນຜົນ 10% ແລະ ອາກອນລາຍໄດ້ຂອງບຸກຄົນ ຊຶ່ງໃນ ປີ 2016 ໄດ້ມອບທັງໝົດ 185.534 ລ້ານກີບ ໃນນັ້ນມີ:

4. Tax

EDL-GEN is the public company and lists in LSX, and operates its business under Lao PDR Law. EDL-GEN obligates to pay tax to the Government of Laos including Advance Income Tax, Royalty Fee (1% of energy production's revenue), Income Tax, Value Added Tax (10% of net profit), Incentive Tax and Meeting Premium Tax. The total amount of tax2016 was 185.534 million kip and represents as below:

ການມອບພັນທະໃຫ້ລັດ/ Tax		
ລຳດັບ / No	**ລາຍການລະອຽດ / Detail**	**ຫົວໜ່ວຍ/Unit: ລ້ານກີບ/Million Kip**
1	ອາກອນມູນຄ່າເພີ້ມ / Value Added Tax	112.094
2	ອາກອນກຳໄລ / Profit Tax	45.071
3	ອາກອນເງິນປັນຜົນ / Dividend Tax	14.841
4	ຄ່າພາກຫລວງ / Royalty Fee	8.391
5	ອາກອນເງິນເດືອນ-ບຳເນັດ / Income Tax	4.817
6	ອາກອນເບ້ຍປະຊຸມ / Meeting Premium Tax	321
	ລວມທັງໝົດ / Total	**185.534**

5. ກຳໄລ-ຂາດທຶນ ແລະ ເງິນປັນຜົນ

ຈາກຜົນການດຳເນີນທຸລະກິດ ເຮັດໃຫ້ ຜ-ຟຟລ ມີກຳໄລສຸດທິທັງໝົດ 554.349 ລ້ານກີບ, ໃນນັ້ນ ປະກອບດ້ວຍກຳໄລຈາກການດຳເນີນງານຂອງ ຜ-ຟຟລ ເອງ ຈຳນວນ 376.298 ລ້ານກີບ ຄິດເປັນ 30,05% ຂອງ ລາຍຮັບທັງໝົດ ແລະ ກຳໄລຈາກການລົງທຶນໃນ 5 ໂຄງການຜູ້ຜະລິດໄຟຟ້າເອກະລາດ (5IPPs) ຈຳນວນ 178.051 ລ້ານກີບ.

5. Profit-Loss and Dividend

Regarding to the result of operation for the year 2016, EDL-Gen's net profit added up to 554.349 million Kip. The net profit consisted of a profit from EDL-Gen's operation in amount of 376.298 million Kip equaled to 30,05% of total revenue, and the share profit from investment in 5 IPPs amounted to 178.051 million Kip.

ກຳໄລ-ຂາດທຶນແລະເງິນປັນຜົນ / Profit-Loss and Dividend		
ລາຍລະອຽດ Description	2015 ລ້ານກີບ/ Million Kip	2016 ລ້ານກີບ / Million Kip
ກຳໄລຈາກການດຳເນີນງານຂອງ ຜ-ຟຟລ EDL-Gen's Operating Profit	354.621	376.298
ກຳໄລຈາກບໍລິສັດຂາຮຸ້ນ ແລະ ວິສາຫະກິດຮຸ້ນສ່ວນ Share profit of Associates and Joint Ventures	286.218	178.051
ກຳໄລສຸດທິ / Net Profit for the Year	640.839	554.349
ຈ່າຍເງິນປັນຜົນ / Dividend paid	513.349	470.204

IV. ໂຄງສ້າງທຶນ ແລະ ຜູ້ຖືຮຸ້ນ / Capital Structure and Shareholders

1. ໂຄງສ້າງທຶນ / Capital Structure

ໂຄງສ້າງທຶນ / Capital Structure			
ລ/ດ No.	ລາຍການລະອຽດ Description	ຈຳນວນ (ລ້ານກີບ) Amount (Million Kip)	%
1	ທຶນ / Equity	9.189.150	49,04%
2	ໜີ້ສິນບໍ່ໝຸນວຽນ / Non-Current Liabilities	4.975.911	26,56%
3	ໜີ້ສິນໝຸນວຽນ / Current Liabilities	4.572.115	24,40%
ລວມທັງໝົດ / Total		18.737.176	100%

2. ຜູ້ຖືຮຸ້ນ / Shareholders

ຜູ້ຖືຮຸ້ນທີ່ຖືຮຸ້ນ ຂອງ ຜ-ຟຟລ 10 ອັນດັບທຳອິດ, ເຊິ່ງເປັນຂໍ້ມູນໃນວັນປິດປຶ້ມທະບຽນພັກການຊື້ຂາຍ ຮຸ້ນວັນທີ 15 ກັນຍາ 2016 ໄດ້ແກ່:


EDL-Gen's top 10 major shareholders recorded on the book-closing date on September 15th, 2016 were as follows:

ອັນດັບ Rank	ລາຍຊື່ຜູ້ຖືຮຸ້ນສູງສຸດ 10 ອັນດັບ Top 10 Major Shareholders	ຈຳນວນຮຸ້ນ Number of shares	ສັດສ່ວນການຖືຮຸ້ນ Shareholding Percentage
1	ລັດວິສາຫະກິດໄຟຟ້າລາວ / (Electricite du Laos)	1.259.477.773	75,00%
2	ບໍລິສັດ ລາຊ-ລາວ ຈຳກັດ RATCH-LAO SERVICES COMPANY LIMITED	94.848.324	5,65%
3	RH International (Singapore) Corporation Pte.,Ltd.	74.929.210	4,46%
4	ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO	38.350.000	2,28%
5	ທະນາຄານກຸງໄທ Krung Thai Bank Public Company Limited	25.839.533	1,54%
6	DRAGON CAPITAL CLEAN DEVELOPMENT LTD	12.232.608	0,73%
7	SENGLATY SAVANHKHAM	11.528.200	0,69%
8	MEKONG HOLDING INS	8.283.598	0,49%
9	GULF INTERNATIONAL INVESTMENT HONG KONG LIMITED	7.766.666	0,46%
10	NT ASIAN DISCOVERY MASTER FUND	7.210.538	0,43%
ລວມຈຳນວນຮຸ້ນຂອງຜູ້ຖືຮຸ້ນ 10 ອັນດັບທຳອິດ Total shares of top 10 shareholders		**1.540.466.450**	**91,73%**
ຈຳນວນຮຸ້ນລວມທັງໝົດ / Total Shares		**1.679.303.697**	**100%**

V. ໂຄງຮ່າງການຈັດຕັ້ງແລະ ການບໍລິຫານ

ໂຄງສ້າງຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ປະກອບດ້ວຍ.

1. ກອງປະຊຸມຜູ້ຖືຮຸ້ນປະຈຸບັນມີຮຸ້ນທັງໝົດ 1.679.303.697 ຮຸ້ນ ແລະ ມີຜູ້ຖືຮຸ້ນທັງໝົດ 3.406 ລາຍ (15/09/2016).
2. ສະພາບໍລິຫານປະກອບດ້ວຍຜູ້ອຳນວຍການ 09 ທ່ານ (ໃນນີ້ຜູ້ອຳນວຍການອິດສະຫລະ 3 ທ່ານ).
3. ໂຄງຮ່າງການຈັດຕັ້ງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ປະກອບດ້ວຍຄະນະຜູ້ອຳນວຍການໃຫຍ່ 4 ທ່ານ ມີ 5 ຝ່າຍ, 15 ພະແນກການ ແລະ 10 ເຂື່ອນ.



ຈຳນວນພົນ


ຈຳນວນພົນຂອງ ຜ-ຟຟລ ມີທັງໝົດ 538 ຄົນ, ໃນນີ້ຍິງ 93 ຄົນ; ແບ່ງອອກເປັນ:

ລາຍລະອຽດ	ພະນັກງານຖາວອນ				
ສຳນັກງານໃຫຍ່	85	ຄົນ,	ຍິງ	29	ຄົນ
ເຂື່ອນໄຟຟ້ານ້ຳງື່ມ-1	126	ຄົນ,	ຍິງ	30	ຄົນ
ເຂື່ອນໄຟຟ້ານ້ຳຄານ 2	30	ຄົນ,	ຍິງ	3	ຄົນ
ເຂື່ອນໄຟຟ້າເຊເສັດ 1-2	79	ຄົນ,	ຍິງ	17	ຄົນ
ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່	33	ຄົນ,	ຍິງ	1	ຄົນ
ເຂື່ອນໄຟຟ້ານ້ຳເລົ	52	ຄົນ,	ຍິງ	4	ຄົນ
ເຂື່ອນໄຟຟ້ານ້ຳມັ-3	52	ຄົນ,	ຍິງ	4	ຄົນ
ເຂື່ອນໄຟຟ້ານ້ຳສະນ	20	ຄົນ,	ຍິງ	0	ຄົນ
ເຂື່ອນໄຟຟ້ານ້ຳຊອ	22	ຄົນ,	ຍິງ	1	ຄົນ
ເຂື່ອນໄຟຟ້າເຊລະບ	39	ຄົນ,	ຍິງ	4	ຄົນ

V. Organization chart and Management

The organizational chart of the EDL-Generation Public Company consists of:

1. General meeting of shareholders with 1.679.303.697 shares and 3,406 shareholders (15/09/2016).
2. The board of directors consisting of 09 directors (herein are 3 independent directors).
3. The organization of the EDL-Generation Public Company consists of 4 Managing Directors, 5 departments, 15 offices, and 10 hydro power plants.



EDL-Gen Staffs

EDL-GEN has 538 staffs, of whom 93 are females

Details	Permanent staff				
Head office	85	staff	Female	29	staff
Nam Ngum 1	126	staff	Female	30	staff
Nam Kham 2	30	staff	Female	3	staff
Xe set 1-2	79	staff	Female	17	staff
Houay Lamphan	33	staff	Female	1	staff
Num Leuk	52	staff	Female	4	staff
Num Mung 3	52	staff	Female	4	staff
Nam Song	20	staff	Female	0	staff
Nam Sana	22	staff	Female	1	staff
Selabam	39	staff	Female	4	staff

ສະພາບໍລິຫານ ຜ-ຟຟລ
Board of Directors of EDL-Gen



ທ່ານ ປອ ຄຳມະນີ ອິນທິລາດ
ປະທານສະພາບໍລິຫານ
Dr. Khammany INTHIRATH
Chairman



ທ່ານ ບຸນອູ້ມ ສີວັນເພັ້ງ
ຮອງປະທານສະພາບໍລິຫານ
Mr. Boun Oum SYVANPHENG
Vice Chairman



ທ່ານ ນ.ລັດຕະນາ ປະທຸມວັນ
ຜູ້ອຳນວຍການ
Mrs. Rattana PRATHOUMVANH
Member



ທ່ານ ບຸນມາ ມະນີວົງ
ຜູ້ອຳນວຍການ
Mr. Bounma MANIVONG
Member



ທ່ານ ນ.ວະນິດາ ສະຫວັດດີ
ຜູ້ອຳນວຍການ
Mrs. Vanida SAVADDY
Member



ທ່ານ ສີຈາດ ບຸດຊາກິດຕິລາດ
ຜູ້ອຳນວຍການ
Mr. Sychath BOUTSAKITIRATH
Member



ຮສ.ປອ ກອງສີ ແສງມະນີ
ຜູ້ອຳນວຍການອິດສະຫລະ
Assoc. Prof Dr. Kongsy SENGMANY
Independent Member



ສຈ.ປອ ຄຳລືຊາ ນວນສະຫວັນ
ຜູ້ອຳນວຍການອິດສະຫລະ
Prof Dr. Khamlusa NOUANSAVANH
Independent Member



ຮສ. ຄຳເພີຍ ພົມມະຈັນ
ຜູ້ອຳນວຍການອິດສະຫລະ
Assoc. Prof. Khampheui PHOMACHANH
Independent Member

ຄະນະຜູ້ອຳນວຍການໃຫຍ່ ຜ-ຟຟລ
Managing Directors of EDL-Gen



ທ່ານ ນ.ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
Mrs. Rattana PRATHOUMVANH
Managing Director (CEO)



ທ່ານ ທອງເພັດ ດ້ວງເງິນ
ຮອງຜູ້ອຳນວຍການໃຫຍ່
ສາຍງານພັດທະນາທຸລະກິດ
Mr. Thongphet DOUANGNGEUNE
Deputy Managing Director (CBDO)



ທ່ານ ປອ ບຸນສະຫລອງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່
ສາຍການເງິນ
Dr. Bounsalong SOUTHIDARA
Deputy Managing Director (CFO)



ທ່ານ ພູມມີ ເນຕິບັນດິດ
ຮອງຜູ້ອຳນວຍການໃຫຍ່
ສາຍງານຜະລິດ
Mr. Phoummy NETIBANEDITH
Deputy Managing Director (COO)



ທ່ານ ວິຣະຖາ ພອນແກ້ວ
ຜູ້ຊ່ວຍ ຜູ້ອຳນວຍການໃຫຍ່
ຜູ້ອຳນວຍການ ຝ່າຍ ພັດທະນາທຸລະກິດ
Mr. Viratha PHONEKEO
Assistant Managing Director
Director of Business Development



ທ່ານ ນາງ ສຸກສັນ ພົງພິລາ
ຜູ້ຊ່ວຍ ຜູ້ອຳນວຍການໃຫຍ່
ຜູ້ອຳນວຍການ ຝ່າຍ ແຜນການ
Mrs. Souksanh PHONGPHILA
Assistant Managing Director
Director of Planning Department

VI. ການຄຸ້ມຄອງພາຍໃນ

ນອກຈາກການບໍລິຫານງານຕາມໂຄງສ້າງວິຊາການຂອງບໍລິສັດແລ້ວ, ຜ-ຟຟລ ຍັງແຕ່ງຕັ້ງຄະນະກຳມະການຕ່າງໆເພື່ອຄົ້ນຄ້ວາ ແລະ ສຶກສາບັນຫາຕ່າງໆໃຫ້ຖີ່ຖ້ວນ ແລະ ຊັດເຈນ, ຊຶ່ງປະກອບດ້ວຍ.

VI. Internal Control

Apart from operating based on the managerial management, the company has also appointed several committees, in order to clearly understand its researching under EDL-GEN including:

1. ຄະນະກຳມະການກວດສອບພາຍໃນ

ຄະນະກຳມະການກວດສອບພາຍໃນໄດ້ຖືກແຕ່ງຕັ້ງຂຶ້ນໂດຍສະພາຜູ້ອຳນວຍການ ຜ-ຟຟລ ຕາມຂໍ້ຕົກລົງ ເລກທີ 0 15/ຜ-ຟຟລ.ສພບ ລົງວັນທີ: 2 7/05/2015, ມີໜ້າທີ່ໃນການຕິດຕາມກວດສອບລາຍຮັບ-ລາຍຈ່າຍ, ບັນດາວຽກງານຕ່າງໆທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຂອງບໍລິສັດ ເພື່ອຕີລາຄາ ແລະໃຫ້ການແນະນຳ, ແກ້ໄຂຢ່າງສົມເຫດສົມຜົນ ແລະ ທັນການ ກັບບັນດາປະກົດການທີ່ມີຄວາມສ່ຽງອາດຈະມີຜົນສະທ້ອນໃຫ້ ຜ-ຟຟລ ແລະ ລາຍງານສະພາຜູ້ອຳນວຍການ ເພື່ອຂໍການຊີ້ນຳໂດຍມີພະແນກກວດສອບພາຍໃນເປັນຜູ້ດຳເນີນການ ແລະ ເປັນກອງເລຂາ.

ໃນປີ 2016 ຄະນະກຳມະການກວດສອບພາຍໃນ ໄດ້ມີການປະຊຸມຄະນະກຳມະການ ລວມທັງໝົດ 5 ຄັ້ງຄື: ເປີດກອງປະຊຸມສາມັນ 3 ຄັ້ງ ແລະ ກອງປະຊຸມວິສາມັນ 2 ຄັ້ງ. ໂດຍໄດ້ປຶກສາຫາລື ແລະ ທົບທວນ ພິຈາລະນາເລື່ອງທີ່ສຳຄັນຕ່າງໆ ໂດຍສະເພາະບົດລາຍງານການເງິນ ແລະ ການຄຸ້ມຄອງບໍລິຫານ ຈັດການຕ່າງໆ ຂອງ ບໍລິສັດ ຄືດັ່ງລຸ່ມນີ້:

1. ວັນທີ 08 ກຸມພາ 2016 ໄດ້ປະຊຸມວິສາມັນ ຄັ້ງທີ I ເພື່ອປຶກສາຫາລືກ່ຽວກັບການປະຕິບັດວຽກງານ ຂອງ ພະແນກກວດສອບພາຍໃນ, ສະຫລຸບຜົນການດຳເນີນງານ ຂອງ ຄະນະກຳມະການ ປະຈຳປີ 2015 ແລະ ຜ່ານແຜນການປະຈຳປີ 2016.
2. ວັນທີ 18 ມີນາ 2016 ໄດ້ປະຊຸມສາມັນ ຄັ້ງທີ I ເພື່ອປຶກສາຫາລືກ່ຽວກັບ ຮ່າງບົດລາຍງານການເງິນ ຂອງ ຜ-ຟຟລ ປະຈຳປີ 2015 ຊຶ່ງໄດ້ຜ່ານການກວດສອບຈາກຜູ້ກວດສອບພາຍນອກ ບໍລິສັດ ພຣາຍສ໌ວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ (PwC) (ຜູ່ເກົ່າ) ຈາກນັ້ນໄດ້ມີຄຳເຫັນຕໍ່ ຮ່າງບົດລາຍງານການເງິນດັ່ງກ່າວ ແລະ ໄດ້ເຮັດ ສະໂນດນຳສິ່ງໃຫ້ກອງເລຂາສະພາບໍລິຫານ ເພື່ອຮັບຮອງໃນກອງປະຊຸມກ່ອນທີ່ຈະອອກເປີດເຜີຍຂໍ້ມູນ ຢູ່ສຳນັກ ງານຕະຫລາດຫລັກຊັບລາວ.
3. ວັນທີ 05 ພຶດສະພາ 2016 ໄດ້ປະຊຸມສາມັນ ຄັ້ງທີ II ເພື່ອປຶກສາຫາລືກ່ຽວກັບ ຮ່າງບົດລາຍງານການເງິນ ຂອງ ຜ-ຟຟລ ປະຈຳໄຕມາດ 1 ປີ 2016.
4. ວັນທີ 17 ສິງຫາ 2016 ໄດ້ປະຊຸມສາມັນ ຄັ້ງທີ III ເພື່ອປຶກສາຫາລືກ່ຽວກັບ ຮ່າງບົດລາຍງານການເງິນຂອງ ຜ-ຟຟລ ປະຈຳ 6 ເດືອນຕົ້ນປີ 2016 ຊຶ່ງໄດ້ຜ່ານການທົບທວນ ຈາກຜູ້ກວດສອບພາຍນອກ ບໍລິສັດ ເຄພີເອັມຈີລາວ ຈຳກັດ (KPMG) (ຜູ່ໃໝ່) ແລະ ໄດ້ມີຄຳເຫັນຕໍ່ຮ່າງບົດລາຍງານການເງິນດັ່ງກ່າວ ຈາກນັ້ນໄດ້ ເຮັດສະໂນດນຳສິ່ງໃຫ້ກອງເລຂາສະພາບໍລິຫານ ເພື່ອຮັບຮອງໃນກອງປະຊຸມກ່ອນທີ່ຈະອອກເປີດເຜີຍຂໍ້ມູນ ຢູ່ສຳນັກງານຕະຫຼາດຫຼັກຊັບລາວ.
5. ວັນທີ 01 ພະຈິກ 2016 ໄດ້ປະຊຸມວິສາມັນ ຄັ້ງທີ II ເພື່ອປຶກສາຫາລືກ່ຽວກັບຮ່າງບົດລາຍງານການເງິນ ຂອງ ຜ-ຟຟລ ປະຈຳໄຕມາດ 3 ປີ 2016.

1. Internal Audit Committee (IAC)

Subject to the Board of Directors of EDL-Gen approval, No. 015/EDL-Gen dated 27/05/2015. IAC has been designated in order to inspection and monitoring the income and expense, including the evaluation, suggestion and resolution any of business risks of its reporting to the Board of Directs, connection with these actions though the Internal Audit Division.

The IAC convened 5 meetings in 2016 including 3 ordinary meetings and 2 extraordinary meetings to discuss and consider a number of significant issues especially financial reports. The issues could be summarized as follows:

(1) On February 8th, hold the first extraordinary meeting regarding on implementation of Internal Audit Division and IAC for year 2015, and approved work plan for year 2016.

(2) On March 18th, hold the first ordinary meeting. AIC commented on the financial report for year 2015 audited by the external auditor, namely PWC and submitted the report to secretary of EDL-Gen Board of Directors.

(3) On May 5th, hold the second ordinary meeting. The main topic of the meeting is discussing on a first quarter financial report for year 2016

(4) On August 17th, hold the third extraordinary meeting. AIC commented on the first semi-annual financial report for year 2016 audited by the external auditor, namely KPMG and submitted the report to secretary of EDL-Gen Board of Directors.

(5) On November 1st, hold the second extraordinary meeting. The main topic of the meeting is discussing on a third quarter financial report for year 2016.

2. ຄະນະກຳມະການເຈລະຈາສັນຍາສຳປະທານ ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້ຂາຍໄຟຟ້າ

ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້ຂາຍໄຟຟ້າໄດ້ຖືກແຕ່ງຕັ້ງຂຶ້ນໃນວັນທີ 21 ມັງກອນ 2011 ເພື່ອເຮັດໜ້າທີ່ເຈລະຈາຕໍ່ລອງດ້ານວຽກງານສັນຍາຕ່າງໆ ເພື່ອຜົນປະໂຫຍດທາງດ້ານທຸລະກິດຂອງບໍລິສັດໃນແຕ່ລະໂຄງການ ຮ່ວມກັບບັນດາຕາງໜ້າລັດຖະບານແຫ່ງ ສປປ ລາວ ແລະ ຟຟລ ກໍຄືບັນດາໂຄງການຜູ້ຜະລິດໄຟຟ້າເອກະລາດອື່ນໆ ທີ່ ຟຟລ ເຂົ້າຖືຮຸ້ນໃນໂຄງການດັ່ງກ່າວ ເຊິ່ງໃນປີ 2016 ຄະນະກຳມະການດັ່ງກ່າວໄດ້ສຳເລັດໃນການປະຕິບັດວຽກເຈລະຈາ ດັ່ງລຸ່ມນີ້:

1. ສຳເລັດການລົງນາມສັນຍາຊື້ຂາຍໄຟຟ້າຂອງ 3 ໂຄງການເຂື່ອນໄຟຟ້ານ້ຳສະນາ, ນ້ຳຄານ 2 ແລະ ຫ້ວຍລຳພັນໃຫ່ຍ ໃນວັນທີ 07/11/2016.
2. ໄດ້ເຈລະຈາຮ່າງສັນຍາຄຸ້ມຄອງໂຄງການເຂື່ອນໄຟຟ້ານ້ຳສະນາກັບພະແນກພະລັງງານແລະບໍ່ແຮ່ແຂວງວຽງຈັນຄັ້ງ ວັນທີ 04/08/2016 ແລະ 19/08/2016.
3. ໄດ້ເຈລະຈາສັນຍາເຊົ່າທີ່ດິນ ກັບພະແນກພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງວຽງຈັນ, ຄັ້ງວັນທີ 15/07/2016.
4. ໄດ້ສຳເລັດການເຊັນບົດບັນທຶກຄວາມເຂົ້າໃຈ 8 ໂຄງການລະຫວ່າງ EDL-Gen ແລະ VASE ຄັ້ງວັນທີ 05/10/2016.
5. ໄດ້ສຳເລັດການລົງນາມສັນຍາຮ່ວມຮຸ້ນ ໂຄງການນ້ຳດິກ 1 ລະຫວ່າງ EDL-Gen ແລະ NCG, ຄັ້ງວັນທີ 14/09/2016.

6. ໄດ້ສຳເລັດການລົງນາມ FRAME WORK AGREEMENT ໂຄງການເຂື່ອນໄຟຟ້ານ້ຳດິກ 1 ລະຫວ່າງ AVIC ແລະ EDL-Gen, NCG ຄັ້ງວັນທີ 05/09/2016.
7. ໄດ້ສຳເລັດການລົງນາມສັນຍາຮ່ວມມື ໂຄງການປາກແບ່ງລະຫວ່າງ EDL-Gen ແລະ DATANG ຄັ້ງວັນທີ 7/09/2016.
8. ໄດ້ສຳເລັດການລົງນາມ ບົດບັນທຶກຄວາມເຂົ້າໃຈໂຄງການເຊກອງ 5 ລະຫວ່າງ EDL-Gen ແລະ INTER RAO – ENGINEERING, RUSSIA ແລະ A-RKSENA LIMITED LIABILITY COMPANY, RUSSIA ຄັ້ງວັນທີ 08/09/2016.

2. The Committee on Negotiation of Concession Agreement, Shareholder Agreement, and Power Purchasing Agreement (CASAPPAC)

On 21 January 2011, the CASAPPAC was appointed to take responsibilities on agreements negotiation in order to benefit in each project of company with representatives of the Government of Lao PDR and Electricite Du Laos (EDL) as well as the Independent Power Producers (IPPs) that EDL has taken stake. In 2016, the committee completed negotiation on some missions as follows:

1. Signed Tariff MOU with EDL for Nam Sana HPP, Nam Khan 2 HPP and Houay Lam PhanhGnai HPP on November 7th, 2016.
2. Negotiated some principle concept of Project Operating Agreement Of Nam Sana with Vientiane provincial authority, division of Energy and mine dated August 4th and August 19th, 2016.
3. Negotiated land agreement with Vientiane provincial authority, division of Natural Resource and Enviroment on July 15th, 2016.
4. Signed MOU of 8 projects with VASE on October 5th, 2016.
5. Signed shareholder agreement of Nam Dik 1 Hydropower Projectwith National Consulting Group (NCG) on September 14th, 2016.
6. Signed Framework Agreement for Nam Dik 1 Hydropower Project with AVIC and NCG on September 5th, 2016.
7. Signed Cooperation Agreement for Pak Beng Hydropower Project with Datang on September 7th, 2016.
8. Signed MOU of Sekong 5 projects with Inter RAO-Engineering (Russia) and A-RKSENA Limited Liability Company (Russia) on September 8th, 2016.

3. ຄະນະກຳມະການຈັດຊື້ແລະ ສະໜອງວັດສະດຸອຸປະກອນ

ຄະນະກຳມະການຈັດຊື້ ແລະ ສະໜອງວັດສະດຸອຸປະກອນ (ຄຈຊ) ໄດ້ຖືກແຕ່ງຕັ້ງໂດຍຜູ້ອຳນວຍການໃຫຍ່ ຜ-ຟຟລ ໃນວັນທີ 07/01/2011 ໂດຍມີໜ້າທີ່ກວດກາເອກະສານປະມູນ, ປະເມີນການປະມູນຕາມລະບຽບຫຼັກການ ແລ້ວລາຍງານຜູ້ອຳນາຍການໃຫຍ່ເພື່ອຂໍອະນຸມັດ ໂດຍມີພະແນກຈັດຊື້ ຝ່າຍວາງແຜນຍຸດທະສາດ ແລະ ພັດທະນາທຸລະກິດ ເປັນກອງເລຂາ ແລະ ດຳເນີນການ. ໃນປີ 2016 ຄະນະກຳມະການຈັດຊື້ ໄດ້ເປີດກອງປະຊຸມວຽກງານຈັດຊື້-ວ່າຈ້າງ 3 ຄັ້ງ ແລະ ເປີດກອງປະຊຸມເຈລະຈາ-ປຶກສາຫາລືກັບຜູ້ສະໜອງ/ຜູ້ຮັບເໝົາ ຈົນກ້າວໄປສູ່ການເຊັນສັນຍາຈຳນວນ 25 ສະບັບ ໂດຍແບ່ງອອກເປັນ 3 ໝວດດັ່ງນີ້:

1. ສັນຍາ ການປະຕິບັດວຽກ (Works) ມີ 13 ສັນຍາ

2. ສັນຍາຈັດຊື້ສິນຄ້າ (Goods) ມີ 04 ສັນຍາ
3. ສັນຍາ ສະໜອງການບໍລິການ (Service) ມີ 08 ສັນຍາ

3. Purchasing and Equipment Supply Committee (PESC)

Procurement Committee has been established by CEO of EDL-Gen, according to the letter no. 011/EDL-Gen on 7th January 2011, the role of this committee are: to inspect the bid documents, to evaluate bid document according to the regulations. In 2016, Procurement Committee had held 03 internal meetings, also negotiation meeting with partner, which led to sign 25 contract agreements. The agreement can be summarized as follow:

1. 13 Contracts of Works
2. 04 Contracts of Goods
3. 08 Contracts of Service

4. ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍແລະ ປະຕິບັດວິໄນ (ຄນຍວ)

ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ ໄດ້ຖືກແຕ່ງຕັ້ງໂດຍຜູ້ອຳນວຍການໃຫຍ່ ຜ-ຟຟລ ຕາມຂໍ້ຕົກລົງເລກທີ 402/ຜ-ຟຟລ ລົງວັນທີ 19/4/2011, ມີໜ້າທີ່ຄົ້ນຄວ້າພິຈາລະນາປັບປຸງຂໍ້ກຳນົດກົດ ລະບຽບພາຍໃນ ຜ-ຟຟລ, ຂໍ້ສະເໜີຕ່າງໆຂອງພະນັກງານ, ນະໂຍບາຍການໃຫ້ບຳເນັດ ແລະ ຍ້ອງຍໍ, ບັນດາຄະດີ ຕ່າງໆ. ພ້ອມດຽວກັນນັ້ນ, ກໍ່ມີໜ້າທີ່ກວດກາຈັດຕັ້ງການປະຕິບັດຂໍ້ກຳນົດ, ລະບຽບການຕ່າງໆຂອງ ຜ-ຟຟລ, ໂດຍມີພະແນກຊັບພະຍາກອນບຸກຄົນເປັນກອງເລຂາ ແລະ ດຳເນີນການ.

ໃນປີ 2016 ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນໄດ້ເປີດກອງປະຊຸມຂຶ້ນ 4 ຄັ້ງ ຊຶ່ງກອງປະຊຸມໄດ້ຮັບຮອງເອົາຫລາຍເອກະສານທີ່ສຳຄັນ ເພື່ອນຳສະເໜີຕໍ່ຂັ້ນເທິງພິຈາລະນາ, ດັ່ງລຸ່ມນີ້:

1. ຂໍ້ກຳນົດຂອງ ຜ-ຟຟລ ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການເພື່ອສອບຄັດເລືອກ ລະດັບຄວາມ ສາມາດດ້ານວິຊາການ
2. ຂໍ້ກຳນົດຂອງ ຜ-ຟຟລ ວ່າດ້ວຍລະບຽບ ແລະ ນະໂບບາຍຕໍ່ພະນັກງານ ສະບັບປັບປຸງ ຄັ້ງທີ 2
3. ຂໍ້ກຳນົດຂອງ ຜ-ຟຟລ ວ່າດ້ວຍນະໂຍບາຍ ແລະ ລະບຽບການຕໍ່ພະນັກງານ ແລະ ກຳມະກອນຜູ່ທີ່ ເຈັບເປັນ ຫຼື ເສຍຊີວິດ ສະບັບປັບປຸງຄັ້ງທີ 1 ມາດຕາ 15 ຂໍ້ 3
4. ຂໍ້ກຳນົດຂອງ ຜ-ຟຟລ ວ່າດ້ວຍ ພະນັກງານສັນຍາຈ້າງ ສະບັບປັບປຸງຄັ້ງທີ 1 ມາດຕາທີ 7
5. ຂໍ້ກຳນົດຂອງ ຜ-ຟຟລ ວ່າດ້ວຍ ການນຳໃຊ້ເງິນແຮຄັງຂອງຝ່າຍຕ່າງໆທີ່ຂຶ້ນກັບ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
6. ຂໍ້ກຳນົດຂອງ ຜ-ຟຟລ ວ່າດ້ວຍ ການປະກອບມູນຄ່າໂທໃຫ້ພະນັກງານຂັ້ນນຳພາ
7. ຂໍ້ກຳນົດຂອງ ຜ-ຟຟລ ວ່າດ້ວຍ ການປະກອບພາຫະນະ ແລະ ນ້ຳມັນເຊື້ອໄຟ ໃຫ້ແກ່ພະນັກງານ ແລະ ກຳມະກອນ ເພື່ອເຄື່ອນໄຫວວຽກງານການດຳເນີນທຸລະກິດ (ສະບັບປັບປຸງຄັ້ງທີ 1)

4. Honor and Discipline Committee (HDC)

HDC were approved by managing director of EDL-Gen, according to the letter No. 402/EDL-Gen dated 19/04/2011. HDC's role is to improve the rules and regulations, under EDL-Gen, to consider the requirement of the employees, the retirement and commendation policy, among others.

HDC acts as a secretariat and implemented by Human Resource Development Division. In 2016the HDC hosted four meetings to endorse some important documents in order to propose to menagement for consideration as follows:

1. Reviewed regulation regarding on an appointment of committee who evaluate the technical skills of the staff
2. Reviewed regulation regarding principles and policies for staff
3. Reviewed regulation regarding on policy and principle of injured or dead staff.
4. Reviewed EDL-Gen regulation for contractual employee
5. Considered EDL-Gen regulation regarding on petty cash expanse of EDL-Gen department
6. Reviewed regulation on policy of telephone budget for management
7. Reviewed regulation on policy of vehicle and fuel for staff.

VII. ການຂະຫຍາຍ ແລະ ພັດທະນາທຸລະກິດ

ໃນປີ 2016 ຜ-ຟຟລ ດຳເນີນການເພີ່ມກຳລັງການຜະລິດ ເຂື່ອນໄຟຟ້າເຊລະບໍ ຕື່ມອີກ ຈາກ 5 MW ມາເປັນ 13 MW, ເພີ່ມກຳລັງການຜະລິດ ເຂື່ອນໄຟຟ້າ ເຊເສັດ 2 ຈາກ 76 MW ມາເປັນ 86 MW, ເພີ່ມກຳລັງການຜະລິດ ເຂື່ອນໄຟຟ້ານ້ຳງື່ມ 1 ດ້ວຍການຕິດຕັ້ງໜ່ວຍປັ່ນກະແສໄຟ ໜ່ວຍທີ 6, 7 ແລະ 8 ຊຶ່ງມີກຳລັງຕິດຕັ້ງ ໜ່ວຍລະ 40 MW ແລະ ເຮັດໃຫ້ກຳລັງການຜະລິດຂອງເຂື່ອນໄຟຟ້ານ້ຳງື່ມ 1 ເພີ່ມຈາກ 155 MW ເປັນ 275 MW ໂຄງການດັ່ງກ່າວຢູ່ໃນຊ່ວງກໍ່ສ້າງ.

ຜ-ຟຟລ ມີແຜນຈະລົງທຶນໃນໂຄງການເປົ້າໝາຍທີ່ ຟຟລ ລົງທຶນ 100% ເຊັ່ນ: ເຂື່ອນໄຟຟ້ານ້ຳຫີນບູນ ມີກຳລັງຕິດຕັ້ງ 30 MW, ເຂື່ອນໄຟຟ້ານ້ຳຄານ 3 ມີກຳລັງຕິດຕັ້ງ 60 MW, ເຂື່ອນໄຟຟ້າເຊເສັດ 3 ມີກຳລັງຕິດຕັ້ງ 23 MW ແລະ ເຂື່ອນໄຟຟ້ານ້ຳຈຽນ 1 ມີກຳລັງຕິດຕັ້ງ 104 MW.

ຜ-ຟຟລ ຍັງມີແຜນຈະໂອນຊື້ຮຸ້ນຂອງ ຟຟລ ທີ່ຖືຮຸ້ນຢູ່ໃນເຂື່ອນຜູ້ຜະລິດໄຟຟ້າເອກະລາດ ແລະ ລົງທຶນ ເຊັ່ນ: ໂຄງການເຂື່ອນໄຟຟ້ານ້ຳງຽບ 2 (ກຳລັງຕິດຕັ້ງທັງໝົດ 180 MW) ໃນຊັດສ່ວນ 10% ຄິດເປັນ 18 MW, ໂຄງການເຂື່ອນ ໄຟຟ້ານ້ຳອູ 2 (ກຳລັງຕິດຕັ້ງທັງໝົດ 120 MW) ໃນຊັດສ່ວນ 15% ຄິດເປັນ 18 MW, ໂຄງການເຂື່ອນໄຟຟ້ານ້ຳອູ 5 (ກຳລັງຕິດຕັ້ງທັງໝົດ 240 MW) ໃນຊັດສ່ວນ 15% ຄິດເປັນ 36 MW, ໂຄງການເຂື່ອນໄຟຟ້ານ້ຳອູ 6 (ກຳລັງຕິດຕັ້ງທັງໝົດ 180 MW) ໃນຊັດສ່ວນ 15% ຄິດເປັນ 27 MW, ເຂື່ອນໄຟຟ້ານ້ຳລອງ (ກຳລັງຕິດຕັ້ງທັງໝົດ 5 MW) ໃນຊັດສ່ວນ 20% ຄິດເປັນ 1 MW, ເຂື່ອນໄຟຟ້ານ້ຳແບ່ງ (ກຳລັງຕິດຕັ້ງທັງໝົດ 36 MW) ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 20% ຄິດເປັນ 7,2 MW, ເຂື່ອນໄຟຟ້ານ້ຳມັງ 1 (ກຳລັງຕິດຕັ້ງທັງໝົດ 64 MW) ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 10% ຄິດເປັນ 6,4 MW, ເຂື່ອນໄຟຟ້ານ້ຳທາ 1 (ກຳລັງຕິດຕັ້ງທັງໝົດ 168 MW) ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 20% ຄິດເປັນ 33,6 MW, ເຂື່ອນໄຟຟ້ານ້ຳລີກ 1 (ກຳລັງຕິດຕັ້ງທັງໝົດ 60 MW) ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 10% ຄິດເປັນ 6 MW ແລະ ເຂື່ອນໄຟຟ້າເຊຂະໜານ 3 (ກຳລັງຕິດຕັ້ງທັງໝົດ 250 MW) ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 15% ຄິດເປັນ 37,5 MW.

ຜ-ຟຟລ ຍັງມີແຜນການຈະລົງທຶນເອງ ແລະ ເຂົ້າຮ່ວມຮຸ້ນກັບບັນດາບໍລິສັດເອກະຊົນ ເຊັ່ນ: ເຂື່ອນໄຟຟ້າຫ້ວຍລຳພັນຕອນລຸ່ມ (ກຳລັງຕິດຕັ້ງທັງໝົດ 15 MW) ໃນຊັດສ່ວນ 60% ຄິດເປັນ 9 MW, ເຂື່ອນໄຟຟ້ານ້ຳບີ 1, 2 ແລະ 3 (ກຳລັງຕິດຕັ້ງທັງໝົດ 135 MW) ໃນຊັດສ່ວນ 80% ຄິດເປັນ 108 MW, ເຂື່ອນໄຟຟ້ານ້ຳດີກ 1, 2 ແລະ 3 (ກຳລັງຕິດຕັ້ງທັງໝົດ 40 MW) ໃນຊັດສ່ວນ 70% ຄິດເປັນ 28 MW, ເຂື່ອນໄຟຟ້ານ້ຳພູນ (ກຳລັງຕິດຕັ້ງທັງໝົດ 45 MW) ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 51% ຄິດເປັນ 22,95 MW, ເຂື່ອນໄຟຟ້ານ້ຳເທີນ 1 (ກຳລັງຕິດຕັ້ງທັງໝົດ 650 MW) ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 15% ຄິດເປັນ 97,5 MW, ເຂື່ອນໄຟຟ້າ ປາກແບ່ງ

(ກຳລັງຕິດຕັ້ງທັງໝົດ 912 MW) ໃນຊັດສ່ວນ 19% ຄິດເປັນ 173,3 MW, ເຂື່ອນໄຟຟ້ານ້ຳເນີນ 1 (ກຳລັງຕິດຕັ້ງທັງໝົດ 124 MW) ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 10% ຄິດເປັນ 12,4 MW, ເຂື່ອນໄຟຟ້ານ້ຳເນີນ 3 (ກຳລັງຕິດຕັ້ງທັງໝົດ 60 MW) ໃນຊັດສ່ວນ 10% ຄິດເປັນ 6 MW, ເຂື່ອນຕາດສະໂຄ່ຍ (ກຳລັງຕິດຕັ້ງທັງໝົດ 30 MW) ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 15% ຄິດເປັນ 4,5 MW, ແລະ ໂຮງໄຟຟ້າພະລັງງານແສງອາທິດ ໄລຍະທີ 1 (ກຳລັງຕິດຕັ້ງທັງໝົດ 32 MW) ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 60% ຄິດເປັນ 19,2 MW.

ນອກຈາກລົງທຶນໃນແຫລ່ງສະໜອງພະລັງງານແລ້ວ, ຜ-ຟຟລ ຍັງສຶບຕໍ່ພັດທະນາການໃຫ້ການບໍລິການຄຸ້ມຄອງເຂື່ອນໄຟຟ້າ, ການບໍລິການແກ້ໄຂສ້ອມແປງພາກອຸປະກອນທີ່ຢູ່ໃຕ້ນ້ຳດ້ວຍມະນຸດກົບ (ນັກດຳນ້ຳ), ວຽກງານບໍລິການສະໂມສອນ ແລະ ວຽກງານອື່ນໆທີ່ມີຢູ່.

VII. Business Expansion and Development

In 2016, EDL-Gen has been expanding installed capacity of its hydropower plants including Selabam from 5 MW to 13 MW, Xeset 2 from 76 to 86 MW and Nam Ngum 1 from 155 MW to 275 MW. Those projectsare under the construction.

In addition, EDL-Gen planned to invest other targeted projects, in which EDL has invested itself and under construction namely: Nam Hinboun (30MW), Namkhan 3 (60 MW), Xeset 3 (23 MW) and Nam Jien (104 MW).

EDL-Gen also aimed to purchase shares and invest in other IPPs, in which EDL holds the shares. The plan can be summarized as follows: Nam Ngiep 2 Project (installed capacity of 180 MW) as a 10% share of the project or equal to 18 MW, Nam Ou 2 Project (installed capacity of 120 MW) as a 15% share of the project or equal to 18 MW, Nam Ou 5 Project (installed capacity of 240 MW) as a 15% share of the project or equal to 36 MW, Nam Ou 6 Project (installed capacity of 180 MW) as a 15% share of the project or equal to 27 MW, Nam Long Project (installed capacity of 5 MW) as a 20% share of the project or equal to 1 MW, Nam beng Project (installed capacity of 36MW) as a 20% share of the project or equal to 7,2 MW, Nam Mang 1 Project (installed capacity of 64 MW) as a 10% share of the project or equal to 6,4 MW, Nam Tha 1 Project (installed capacity of 168 MW) as a 20% share of the project or equal to 33,6 MW, Nam Lik 1 Project (installed capacity of 60MW) as a 10% share of the project or equal to 6 MW and Xekaman 3 Project (installed capacity of 250 MW) as a 15% share of the project or equal to 37,5 MW.

EDL-Gen also planned to invest individually in projects and join projects with IPPs. The projects are namely: Lower Huay Lamphan Project (installed capacity of 15 MW) as a 60% share of the project or equal to 9 MW, Nam Bi 1, 2, 3 Project (installed capacity of 135MW) as a 80% share of the project or equal to 108 MW, Nam Dik 1, 2, 3 Project (installed capacity of 40MW) as a 70% share of the project or equal to 28 MW, Nam Phoun Project (installed capacity of 45MW) as a 51% share of the project or equal to 22,95 MW, Nam Theun 1 Project (installed capacity of 650 MW) as a 15% share of the project or equal to 97,5 MW, Mekong Pak Beng Project (installed capacity of 912MW) as a 19% share of the project or equal to 173,3 MW, Nam Neun 1 Project (installed capacity of 124MW) as a 10% share of the project or equal to 12,4 MW, Nam Neun3 Project (installed capacity of 60MW) as a 10% share of the project or equal to 6 MW, Thadsakoi Project (installed capacity of 30MW) as a 15% share of the project or equal to 4,5 MW and Solar Farm Project Phase One (installed capacity of 32MW) as a 60% share of the project or equal to 19,2 MW.

Apart from investment on energy generation project, EDL-Gen provided services on the operation management of hydropower plants, maintenances of equipment under water by diving team, canteen renting service and others.

VIII. ວຽກງານການເຄື່ອນໄຫວດ້ານສິ່ງແລດລ້ອມ ສັງຄົມ ແລະ ກິລາ

1. ວຽກງານສິ່ງແລດລ້ອມ

1. ໃນວັນທີ 04 ມິຖຸນາ 2016, ຜ-ຟຟລ ໄດ້ຈັດກິດຈະກຳປູກຕົ້ນໄມ້ ແລະ ປ່ອຍປາເນື່ອງໃນງານວັນປູກຕົ້ນໄມ້ແຫ່ງຊາດ, ເຊິ່ງໄດ້ຈັດຂຶ້ນທີ່ເຂື່ອນໄຟຟ້ານ້ຳຊອງ ເມືອງຫີນເຫີບ ແຂວງວຽງຈັນ.ໄດ້ຈັດສັນເບ້ຍໄມ້ຈຳນວນ 2.000 ເບ້ຍ ປູກໃນພື້ນທີ່ 4 ເຮັກຕາ ເພື່ອເປັນການສົ່ງເສີມການປູກປ່າ ແລະ ປົກປັກຮັກສາສິ່ງແວດລ້ອມ, ໄດ້ປ່ອຍປາພັນພື້ນເມືອງ ເປັນຈຳນວນ 20.000 ໂຕ ລົງສູ່ບໍລິເວນໂຮງຈັກຂອງເຂື່ອນໄຟຟ້ານ້ຳຊອງ ເພື່ອເປັນການເພີ່ມຄວາມອຸດົມສົມບູນຂອງລະບົບນິເວດໃຫ້ມີຄວາມຍືນຍົງ ແລະ ໄດ້ມອບອຸປະກອນ ການສຶກສາ ແລະ ກິລາລວມເປັນມູນຄ່າກວ່າ 30 ລ້ານກີບ ມອບໃຫ້ແກ່ໂຮງຮຽນປະຖົມສົມບູນ 4 ແຫ່ງ ໃນເມືອງຫີນເຫີບ ແຂວງວຽງຈັນ.
2. ບໍລິສັດ ຜະລິດ-ໄຟຟ້າລາວມະຫາຊົນ ໄດ້ຮ່ວມກັບກະຊວງພະລັງງານ ແລະ ບໍ່ແຮ, ລັດວິສະຫະກິດໄຟຟ້າລາວ ແລະ ການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ ຈັດງານປ່ອຍປາ ເນື່ອງໃນໂອກາດວັນປ່ອຍປາ ແລະ ອະນຸລັກສັດນ້ຳ-ສັດປ່າແຫ່ງຊາດ ວັນທີ 13 ກໍລະກົດ ທີ່ວັງສະຫງ່ວນຂອງເຂື່ອນໄຟຟ້ານ້ຳງື່ມ 1 ເມືອງແກ້ວອຸດົມ ແຂວງວຽງຈັນ. ໄດ້ປ່ອຍປາທັງໝົດ 100.000 ໂຕ ໃນນັ້ນມີປະກອບມີພັນປາບຶກ ທີ່ເຂື່ອນໄຟຟ້າສີຣິກິດ ກ່ຳຄືການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ ເປັນຜູ້ສະໜັບສະໜູນ ຈຳນວນ 1.045 ໂຕ.
3. ໃນວັນທີ 22-25 ສິງຫາ 2016, ຜ-ຟຟລ ຈັດຝຶກອົບຮົມທອນຄືນກ່ຽວກັບວຽກງານສິ່ງແວດລ້ອມ-ສັງຄົມ ແລະ ວຽກງານປະຊາສຳພັນໃຫ້ກັບພະນັກງານທີ່ຮັບຜິດຊອບວຽກງານດັ່ງກ່າວປະຈຳຢູ່ແຕ່ລະເຂື່ອນໄດ້ຈັດຂຶ້ນທີ່ເຂື່ອນໄຟຟ້ານ້ຳງື່ມ 1.
4. ໃນວັນທີ 29 ກັນຍາ 2016, ຜ-ຟຟລ ໄດ້ສົມທົບທຶນ ຈຳນວນ 165 ລ້ານກີບ ເຂົ້າໃນໂຄງການ (ຊື່ຫຍໍ້ “ໂຄງການເພື່ອສິ່ງແວດລ້ອມ ແລະ ສັງຄົມ”).

VIII. The Report on Environmental, Social and Sport Activities

1. Environmental Activities

EDL-Gen has launched several activities concerning the environment as follows.

1. EDL-Gen annually held biodiversity conservation and promotion activities by planting trees and releasing fingerlings to the surrounding environment of Nam Song HPP which is located in Hinherb district, Vientiane province dated June 4th, EDL-Gen provided 2.000 infants and 20.000 local fish to the environment in order to enhance ecosystem. In addition, EDL-Gen donated equipment for education and sport totally over 30 million kip to 4 primary schools.
2. Ministry of Energy and Mines, EDL, EGAT and EDL-Gen celebrated the national free fishing day at Nam Ngum 1 HPP on July 13th. 100.000 fishes were released including 1.045 catfish supported by EGAT.
3. EDL-Gen held a workshop on a implementation and promotion of social environment at Nam Ngum 1 HPP on August 22nd-25th, 2016.
4. EDL-Gen donated 165 million kip for social environment support project on September 29th, 2016.

2. ວຽກງານຊ່ວຍເຫລືອສັງຄົມແລະ ກິລາ

ຜ-ຟຟລ ເປັນບໍລິສັດຜະລິດພະລັງງານແຫ່ງທຳອິດ ຂອງ ສປປ ລາວ ພາຍໃຕ້ຮູບແບບ ບໍລິສັດ ມະຫາຊົນ, ເພື່ອເປັນການຍົກສູງບົດບາດ ຂອງ ຜ-ຟຟລ ຄຽງຄູ່ກັບການດຳເນີນທຸລະກິດ, ຜ-ຟຟລ ໄດ້ເອົາໃຈໃສ່ໃນວຽກງານ ຊ່ວຍເຫລືອ ແລະ ພັດທະນາສັງຄົມກ່ຶຄຸມຊຶ່ນອ້ອມຂ້າງເຂື່ອນໄຟຟ້າ ຕະຫລອດໄລຍະ 6 ປີ ທີ່ມີການສ້າງຕັ້ງ ບໍລິສັດ ຕາມແນວທາງການພັດທະນາພະລັງງານໄຟຟ້າແບບຍືນຍົງ ແລະ ໃຫ້ສັງຄົມມີສ່ວນຮ່ວມ, ຊຶ່ງ ໃນປີ 2016 ຜ-ຟຟລ ໄດ້ຈັດຕັ້ງປະຕິບັດດັ່ງນີ້:

1. ໃນວັນທີ 07 ກັນຍາ 2016 ທີ່ເມືອງຊຽງເງິນ, ແຂວງຫລວງພະບາງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຮ່ວມກັບ ລັດວິສາຫະກິດໄຟຟ້າລາວ ໄດ້ມອບເຄື່ອງອຸປະກອນການແພດ ພ້ອມດ້ວຍຢາປົວພະຍາດຈຳນວນໜຶ່ງ ແລະ ເຄື່ອງ ຈັກປັ່ນໄຟຟ້າ ໃຫ້ສຸກສາລາ ບ້ານພູຊ້າງ ເມືອງຊຽງເງິນ ແຂວງຫລວງພະບາງ ຊຶ່ງເປັນບ້ານຈັດສັນຂອງ ເຂື່ອນໄຟຟ້າ ນ້ຳຄານ 2.
2. ໃນວັນທີ 27 ຕຸລາ 2016, ຜ-ຟຟລ ໄດ້ຈັດພິທີມອບຮັບອາຄານຮຽນຫລັງໃໝ່ເຊິ່ງ ຜ-ຟຟລ ໄດ້ໃຫ້ການສະໜັບ ສະໜຸນທຶນມູນຄ່າ 100 ລ້ານກີບ ໃນການກໍ່ສ້າງອາຄານຮຽນໃຫ້ ໂຮງຮຽນປະຖົມບ້ານນາຊູ ເມືອງກາສີ ແຂວງວຽງຈັນ.
3. ໃນວັນທີ 07 ພະຈິກ 2016, ຜ-ຟຟລ ໄດ້ສົມທົບທຶນເຂົ້າໃນການບູລະນະປະຕິສັງຂອນ ພິພິດທະພັນພະທາດຫຼວງ ວຽງຈັນ ເປັນເງິນມູນຄ່າ 20 ລ້ານກີບ.
4. ໃນວັນທີ 15 ພະຈິກ 2016, ຜ-ຟຟລ ໄດ້ມອບເງິນສະໜັບສະໜຸນ ຈຳນວນ 8 ລ້ານກີບ ໃຫ້ແກ່ສະມາຄົມຄົນຫູ ໜວກ ເພື່ອປະກອບສ່ວນເຂົ້າໃນໂຄງການ ເຂົ້າຮ່ວມການແຂ່ງຂັນກິລາບານເຕະຄົນຫູໜວກ ຊິງແຊ້ມອາຊຽນ ຄັ້ງທີ I ທີ່ປະເທດມາເລເຊຍ ໃນລະຫວ່າງ ວັນທີ 04-10 ທັນວາ 2016.
5. ວັນທີ 07 ທັນວາ 2016, ຜ-ຟຟລໄດ້ມອບອຸປະກອນການສຶກສາ ແລະ ອຸປະກອນກິລາໃຫ້ໂຮງຮຽນບ້ານພູຊ້າງ ເມືອງຊຽງເງິນ ແຂວງຫລວງພະບາງ.
6. ໃນ ວັນທີ 26 ທັນວາ 2016, ຜ-ຟຟລ ຮ່ວມກັບ ທ່ານ ສົມບູນ ເນຕິບັນດິດ ແລະ ທ່ານ ວັນໄຊ ເນຕິບັນດິດ ໄດ້ຈັດ ພິທີມອບ-ຮັບ ອາຄານຮຽນຫຼັງໃໝ່ໂຮງຮຽນປະຖົມສົມບູນສຶກສາແສງສະຫວ່າງ ເມືອງແກ້ວອຸດົມ ແຂວງວຽງຈັນ, ໃຫ້ກັບອຳນາດການປົກຄອງ ແຂວງວຽງຈັນ ລວມມູນຄ່າທັງໝົດ 477,98 ລ້ານກີບ.

2. Social Development

EDL-Gen is the first public company for energy producer in Lao P.D.R. and aims to promote the other company roles along with energy business, therefore EDL-Gen focus on social work and social development. EDL-Gen have been established for 6 years and the concept of the company is sustainable energy development and social involvement in 2016 EDL-Gen completed on some significant missions as follows.

1. On September 7th, EDL-Gen provided some medical equipment, medicine and electric generation to healthcare center at Phouchang Village which is one of housing development program of Nam Khan 2 HPP.
2. On October 27, EDL-Gen donated 100 million kip to support a new school at Nasou villages, kasi district, Vientiane province.
3. EDL-Gen supported the renovation of Thatluangstupa totally 20 million kip on November 7th, 2016.
4. On November15th, EDL-Gen donated 8 million kip to a deaf society for supporting the First ASEAN Deaf Football Championship in Malaysia during December 4th – 10th, 2016.

5. EDL-Gen donated sport and education equipment to Phouchang Village, Xiengngerndictrict, Luangprabang province on December 7th, 2016.
6. On 26th December 2016, EDL-Gen together with Mr. Somboun Nethibandith and Mr. Vanxay Nethibandith organized Handover Ceremony of New School Building to Sengsavang Primary School at Keoudom district Vientiane Province to Vientiane Provincial authority. The new school building is funded totally 477,98 million kip.

IX. ການພັດທະນາຊັບພະຍາກອນມະນຸດ

ຜ-ຟຟລ ຍັງສືບຕໍ່ເຮັດໜ້າທີ່ຂອງຕົນເອງໃນການກຳນົດນະໂຍບາຍການວາງແຜນພັດທະນາຊັບພະຍາກອນມະນຸດ ຂອງ ອົງກອນ ເພື່ອຍົກລະດັບປະສິບການ ແລະ ເພີ່ມທັກສະຄວາມຮູ້, ຄວາມສາມາດໃໝ່ໃນຫຼາຍສາຂາວິຊາທີ່ກ່ຽວຂ້ອງກັບວຽກງານວິຊາສະເພາະຂອງບໍລິສັດ.

ໃນສົກປີ 2016 ມີຈຳນວນພະນັກງານທີ່ໄດ້ຖືກຮັບການຝຶກອົບຮົມ ແລະ ພັດທະນາແລ້ວທັງພາຍໃນ ແລະ ຕ່າງປະເທດມີທັງໝົດ 190 ທ່ານ, ໃນນີ້ ລະດັບຄະນະບໍລິຫານ ຈຳນວນ 13 ທ່ານ ຊຶ່ງມີລາຍລະອຽດຂ້າງລຸ່ມນີ້:

- **ລະດັບຄະນະບໍລິຫານ ຈຳນວນ 8 ເທື່ອຄົນ**

1 Management of Metering and Billing System
2 Project Management ການກໍ່ສ້າງສາຍສົ່ງ
3 ເຄື່ອງມືທາງການເງິນໃນຕະຫຼາດແລກປ່ຽນເງິນຕາຕ່າງປະເທດ ແລະ ການສຶບເນື່ອງ
4 ສັນຍາຊື້-ຂາຍໄຟຟ້າ, ສັນຍາສຳປະທານ, ສັນຍາກູ້ຢືມ ແລະ ສັນຍາຮ່ວມຮຸ້ນ
5 ORNL/DOE Hydropower Technical Training

- **ຝຶກອົບຮົມນອກສະຖານທີ່ 77 ເທື່ອຄົນ**

1 (ການຕິດຕາມ ແລະ ກວດກາຄວາມປອດໄພຂອງເຂື່ອນ) Dam Safety Inspections and Dam Safety Monitoring
2 ການວິເຄາະຕະກອນແບບລະອຽດໃນສາຍນ້ຳ ແລະ ອ່າງເກັບນ້ຳ
3 ກົດຈັນຍາບັນ, ການແຈ້ງອາກອນ ແລະ ຫຼັກການຖືບັນຊີ
4 ພະລັງງານ Energy
5 ການພັດທະນາທັກສະການເປັນຜູ້ນຳ
6 The 4th Program - Lao Professional Investment Banking I
7 ການຄຸ້ມຄອງມະຫາພາກ ນະໂຍບາຍເງິນຕາຂອງທະນາຄານແຫ່ງ ສ.ປ.ປ. ລາວ
8 ORNL/DOE Hydropower Technical Training

- **ຝຶກອົບຮົມຕ່າງປະເທດ 61 ເທື່ອຄົນ**

1 ASEAN Residential School in Human Resource Management
2 the 56th IATSS Forum
3 Fidic Contract Module 1, Practical Used of Fidic Contracts
4 Seminar on "ການບຳລຸງຮັກສາເຂື່ອນໄຟຟ້າພະລັງງານນ້ຳ ໃນປະເທດໄທ ແລະ ສປປ. ລາວ"
5 Adaptive Assessment Test, New Employee Boarding Program and Electronic Learning Need Analysis
6 Study Trip
7 Hydropower Operational and Planning
8 ການຈັດການລະບົບຄຸນະພາບ SQA

9 OJT on Operation for Hydropower Plant

10 Company Secretary Program

11 ການປະຕິບັດວຽກງານການກວດສອບ ສຳລັບຜູ້ກວດສອບມືໃໝ່

12 5th Annual Meeting of HAPUA WG No. 5 on Human Resources

13 OJT on Major Overhaul

14 OJT on Minor Inspection

15 Financial Reporting Update 2016

16 Best Practice Talent Management in Power Plant

17 ການກວດສອບລະບົບໄຟຟ້າດ້ວຍອັນຕະໂຊນິກ

- **ຝຶກອົບຮົມຢູ່ສູນຝຶກ 13 ເທື່ອຄົນ**

1 Project Management ການກໍ່ສ້າງສາຍສົ່ງ

IX. Human resource development

EDL-GEN continued to implement the policy on human resource development plan in order to improve ability and got more knowledge skill and new experiences in variety areas.

Numbers of staffs were trained in 2016 total of 190 staffs which is trained in local and abroad.

- **The programs for management team are shown as follows.**
  1. Management of Metering and Billing System
  2. Project Management: Construction of transmission line
  3. A financial tool in the market for currency exchange and derivative
  4. Power Purchase Agreement, Concession Agreement, Loan agreement and Shareholder agreement
  5. ORNL/DOE Hydropower Technical Training

- **77 EDL-Gen staffs participated outdoor training programs and the details of programs are shown as follows.**
  1. Dam Safety Inspections and Dam Safety Monitoring
  2. Analysis of Residues in River and Reservoir
  3. Ethic, Tax Declaration and Accounting Standard
  4. Energy
  5. Development of Leading skills
  6. The 4th Program – Lao Professional Investment Banking I
  7. Policy of Currency and macro management of Bank of Laos
  8. ORNL/DOE Hydropower Technical Training

- **61 EDL-Gen staffs participated training programs abroad and the detailed of programs are shown as follows.**
  1. ASEAN Residential School in Human Resource Management
  2. The 56th IATSS Forum
  3. Fidic Contract Module 1, Practical Used of Fidic Contracts
  4. Seminar on Maintenance of Hydropower plants in Thailand and Laos

5. Adaptive Assessment Test, New Employee Boarding Program and Electronic Learning Need Analysis
6. Study Trip
7. Hydropower Operational and Planning
8. SQA
9. On The Job Training on Operation for Hydropower Plant
10. Company Secretary Program
11. Audit work for Beginning Auditor
12. 5th Annual Meeting of HAPUA Working Group No. 5 on Human Resources
13. On The Job Training on Major Overhaul
14. On The Job Training on Minor Inspection
15. Financial Reporting Update 2016
16. Best Practice Talent Management in Power Plant
17. Electric Measurement with Ultrasonic

- **13 EDL-Gen staffs participated training courses in EDL Training Center and the details of the courses are shown as follows.**
    1. Project Management: Construction of transmission line

ເອກະສານລາຍງານການເງິນ 31 ທັນວາ 2016

Financial Statement December 31st, 2016

ບໍລິສັດ ເຫະລິດ-ໄຟຟ້າລາວ ມະຫາຊົນ

ເອກະສານລາຍງານການເງິນສຳລັບປີສິ້ນສຸດ
31 ທັນວາ 2016
ແລະ
ບົດລາຍງານຂອງຜູ້ກວດສອບອິດສະຫຼະ

ເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບບັນຊີສະບັບນີ້ແມ່ນຖືກລາຍງານເປັນພາສາອັງກິດ. ສ່ວນສະບັບພາສາລາວ ແມ່ນເປັນພຽງຕົວສົມທຽບເທົ່ານັ້ນ, ໃນກໍລະນີທີ່ບໍ່ສອດຄ່ອງ ແມ່ນຈະຍຶດຖືພາກສ່ວນພາສາອັງກິດເປັນຕົວຫຼັກ.

The Financial Statement and Report of Independent Auditor have been prepared in English. The Lao version is reference only; in case of discrepancies the English version shall prevail.

KPMG Lao Co.,Ltd.
3rd - 4th Floor, 37 K.P. Tower
23 Singha Road, Ban Phonexay,
Saysettha District, P.O. Box 6978
Vientiane Capital, Lao PDR
Tel +856 (21) 454240-7

ບໍລິສັດ ເຄພີເອັມຈີລາວ ຈຳກັດ
ຊັ້ນ 3-4, 37 ຕຶກ ເຄພີທາວເວີ
ຖະໜົນ 23 ສິງຫາ, ບ້ານໂພນໄຊ,
ເມືອງໄຊເສດຖາ, ຕູ້ ປ.ນ. 6978,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ : +856 (21) 454240-7

ບົດລາຍງານຂອງຜູ້ກວດສອບອິດສະຫຼະ

ເຖິງ ສະພາຜູ້ບໍລິຫານ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ຄວາມຄິດເຫັນ

ພວກຂ້າພະເຈົ້າໄດ້ກວດສອບເອກະສານລາຍງານການເງິນຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ"), ເຊິ່ງປະກອບມີ ໃບສະຫຼຸບຊັບສິນບັດໃນວັນທີ 31 ທັນວາ 2016, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງຂອງທຶນ ແລະ ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດ, ແລະ ໝາຍເຫດປະກອບເອກະສານລາຍງານການເງິນ, ພ້ອມທັງສັງລວມນະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍຂໍ້ມູນອື່ນໆ.

ໃນຄວາມຄິດເຫັນຂອງພວກຂ້າພະເຈົ້າ, ອີງຕາມເອກະສານລາຍງານການເງິນທີ່ຖືກກະກຽມ, ໃນທຸກສາລະສຳຄັນ ແມ່ນສອດຄ່ອງກັບນະໂຍບາຍການບັນຊີທີ່ລະບຸໄວ້ໃນໝາຍເຫດ 2 ແລະ 3 ຂອງເອກະສານລາຍງານການເງິນ.

ພື້ນຖານການສະແດງຄວາມເຫັນ

ພວກຂ້າພະເຈົ້າດຳເນີນການກວດສອບບັນຊີແມ່ນໄດ້ອີງຕາມມາດຕະຖານການກວດສອບບັນຊີ (ISAs). ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນຢູ່ພາຍໃຕ້ມາດຕະຖານການກວດສອບບັນຊີເຫຼົ່ານັ້ນ ຖືກອະທິບາຍເພີ່ມເຕີມຢູ່ໃນ *ຄວາມຮັບຜິດຊອບຂອງຜູ້ກວດບັນຊີອິດສະຫຼະ* ຂອງເອກະສານລາຍງານການເງິນໃນບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າມີຄວາມເປັນອິດສະຫຼະຈາກບໍລິສັດ ອີງຕາມຂໍ້ກຳນົດດ້ານຈັນຍາບັນທີ່ພົວພັນເຖິງການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າຊ່ວຍໃນການຕັດສິນໃຈ ແລະ ພວກຂ້າພະເຈົ້າໄດ້ປະຕິບັດຄວາມຮັບຜິດຊອບທາງດ້ານຈັນຍາບັນ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການເຫຼົ່ານັ້ນ. ພວກຂ້າພະເຈົ້າເຊື່ອວ່າຫຼັກຖານໃນການກວດສອບນັ້ນພວກຂ້າພະເຈົ້າໄດ້ຮັບຢ່າງພຽງພໍ ແລະ ເໝາະສົມໃນການໃຫ້ຄວາມຄິດເຫັນພື້ນຖານຂອງພວກຂ້າພະເຈົ້າ.

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບຄືເລື່ອງຕ່າງໆ ທີ່ມີຄວາມສຳຄັນ ຕາມການພິຈາລະນາຂອງຜູ້ປະກອບວິຊາຊີບຂອງພວກຂ້າພະເຈົ້າ ໃນການກວດສອບເອກະສານລາຍງານການເງິນໃນງວດປະຈຸບັນ. ພວກຂ້າພະເຈົ້າໄດ້ນຳເລື່ອງເຫຼົ່ານີ້ມາພິຈາລະນາ ໃນການກວດສອບເອກະສານລາຍງານການເງິນ ແລະ ສະແດງຄວາມເຫັນຂອງ ພວກຂ້າພະເຈົ້າ ທັງນີ້ພວກຂ້າພະເຈົ້າບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

KPMG Lao Co., Ltd. a Company licensed under the Foreign Investment Law of Lao PDR, is a member of KPMG International, a Swiss cooperative

ຄວາມຄົບຖ້ວນຂອງເງິນແຮ ແລະ ໜີ້ສິນ	
ເລື່ອງສຳຄັນໃນການກວດສອບ	**ວິທີການແກ້ໄຂໃນການກວດສອບເລື່ອງດັ່ງກ່າວ**
ເງິນແຮສຳລັບການຊຳລະສະສາງຄ່າບຳລຸງຮັກສາສ່ວນໃຫຍ່ກ່ຽວຂ້ອງກັບຊັບສິນຢູ່ພາຍໃຕ້ສັນຍາສຳປະທານແມ່ນມີຄວາມຊັບຊ້ອນ ເນື່ອງຈາກສະຖານທີ່ຕັ້ງໂຮງງານຜະລິດໄຟຟ້າຕ່າງໆ, ຂະບວນການຈັດຊື້ຈັດຈ້າງແບບກະແຈກກະຈ່າຍ ແລະ ລະບົບການບັນຊີທີ່ແຕກຕ່າງກັນ. ຜູ້ບໍລິຫານພິຈາລະນາຄວາມໝ້າຈະເປັນໄປໄດ້ ແລະ ໄດ້ຄາດກະຈຳນວນເງິນແຮທີ່ຈະໄດ້ຮັບຈາກແຜນທຸລະກິດ, ການບັນທຶກຂໍ້ຕົກລົງການບຳລຸງຮັກສາ ແລະ ຂໍ້ມູນການຊຳລະບັນຊີຂອງບຸກຄົນທີສາມເພື່ອພິຈາລະນາຄົບຖ້ວນຂອງເງິນແຮ ແລະ ໜີ້ສິນ ໃນວັນທີ 31 ທັນວາ 2016. ຄວາມຄົບຖ້ວນຂອງເງິນແຮ ແລະ ໜີ້ສິນເປັນພາກສ່ວນສຳຄັນ ແລະ ເປັນເລື່ອງທີ່ສຳຄັນໃນການກວດສອບເນື່ອງຈາກວ່າມີຄວາມສຳຄັນໃນການເຮັດທຸລະກຳ ແລະ ຄວາມຊັບຊ້ອນທີ່ມີເນື້ອໃນທີ່ສຳຄັນໃນກຳນົດ ແລະ ການໄດ້ຮັບຫຼັກຖານອ້າງອີງ.	ວິທີການກວດສອບຂອງພວກຂ້າພະເຈົ້າໃນເລື່ອງດັ່ງກ່າວລວມທັງ: - ການທຳຄວາມເຂົ້າໃຈ ແລະ ການປະເມີນຄວາມສ່ຽງຂອງຂະບວນການຈັດຊື້ ແລະ ການບັນຊີ ລວມເຖິງການຄວບຄຸມພາຍໃນ ແລະ ຕິດຕາມທີ່ຢູ່ໃນພື້ນທີ່; - ການປະເມີນນະໂຍບາຍການບັນຊີກ່ຽວຂ້ອງກັບເງິນແຮ ແລະ ໜີ້ສິນ; - ກວດສອບເອກະສານການຊຳລະເງິນພາຍຫຼັງໄລຍະເວລາການລາຍງານຈົນເຖິງມື້ລາຍງານຂອງຜູ້ກວດສອບບັນຊີ; - ສົມທຽບຍອດລະຫວ່າງແຜນງົບປະມານຂອງທຸລະກິດທີ່ໄດ້ຮັບອະນຸມັດຈາກຜູ້ບໍລິຫານ, ບັນທຶກສັນຍາໃນການບຳລຸງຮັກສາ ແລະ ໂຄງການທີ່ເກີດຂຶ້ນພາຍໃນປີ; - ສົ່ງໜັງສືຢືນຢັນ ແລະ ກວດສອບໃບແຈ້ງໜີ້ຕົ້ນສະບັບທີ່ຮຽກເກັບຈາກຜູ້ຂາຍ ຫຼື ຜູ້ຮັບເໝົາ.

ເລື່ອງທີ່ຄວນໃສ່ໃຈ

ໂດຍທີ່ພວກຂ້າພະເຈົ້າບໍ່ໄດ້ມີເງື່ອນໄຂໃນການອອກຄວາມເຫັນ, ພວກຂ້າພະເຈົ້າໄດ້ອະທິບາຍໄວ້ໃນໝາຍເຫດ 3 ຂອງເອກະສານລາຍງານການເງິນສະບັບນີ້, ເຊິ່ງໄດ້ອະທິບາຍພື້ນຖານການບັນຊີ. ຫຼັກການການບັນຊີທີ່ຖືກນຳໃຊ້ໃນການກະກຽມເອກະສານລາຍງານການເງິນສະບັບນີ້ ອາດແຕກຕ່າງກັບນະໂຍບາຍບັນຊີ ທີ່ຖືກຮັບຮອງ ໂດຍທົ່ວໄປຂອງມາດຕະຖານການບັນຊີຂອງປະເທດອື່ນ. ດັ່ງນັ້ນຜູ້ນຳໃຊ້ເອກະສານລາຍງານການສະບັບນີ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອທີ່ສະແດງ ໃນສະຫຼຸບຊັບສິນບັດ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດ ໃນປະເທດອື່ນ ນອກເໜືອຈາກ ສປປ ລາວ. ການສະແດງຄວາມຄິດຂອງພວກຂ້າພະເຈົ້າບໍ່ແມ່ນການແກ້ໄຂໃນສ່ວນທີ່ກ່ຽວຂ້ອງກັບເລື່ອງນີ້.

ເຫດການອື່ນໆ

ເອກະສານລາຍງານການເງິນຂອງບໍລິສັດສຳລັບປີສິ້ນສຸດໃນວັນທີ 31 ທັນວາ 2015 ແມ່ນຖືກກວດສອບໂດຍ ນັກກວດສອບບໍລິສັດອື່ນເຊິ່ງໄດ້ສະແດງຄວາມເຫັນຢ່າງບໍ່ມີເງື່ອນໄຂຕໍ່ເອກະສານລາຍງານການເງິນ ດັ່ງກ່າວໃນ ວັນທີ 28 ມີນາ 2016.

ຂໍ້ມູນຂ່າວສານອື່ນໆ

ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບຕໍ່ຂໍ້ມູນຂ່າວສານອື່ນໆ. ປະກອບດ້ວຍຂໍ້ມູນຂ່າວສານທີ່ປາກົດຢູ່ໃນບົດລາຍງານປະ ຈຳປີ, ແຕ່ບໍ່ໄດ້ລວມ ເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບບັນຊີດັ່ງກ່າວ. ບົດລາຍງານ ປະຈຳປີຄາດວ່າເຮັດຂຶ້ນພາຍຫຼັງຈາກມື້ລາຍງານຂອງຜູ້ກວດສອບບັນຊີນີ້.

ໃນຄວາມເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ ບໍ່ໄດ້ກວມເອົາຂໍ້ມູນຂ່າວສານອື່ນໆ ແລະ ພວກ ຂ້າພະເຈົ້າ ບໍ່ໄດ້ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນອື່ນໆ.

ໃນພາກສ່ວນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ, ຄວາມຮັບຜິດຊອບຂອງພວກຂ້າພະ ເຈົ້າ ຄືການອ່ານຂໍ້ມູນອື່ນໆທີ່ໄດ້ລະບຸໄວ້ຂ້າງເທິງ ແລະ ການເຮັດແນວນັ້ນ, ໃຫ້ພິຈາລະນາວ່າຂໍ້ມູນອື່ນໆມີຄວາມ ຂັດແຍ້ງກັບເອກະສານລາຍງານການເງິນ ຫຼື ກັບຄວາມຮູ້ທີ່ໄດ້ຮັບຈາກການກວດສອບຂອງພວກຂ້າພະເຈົ້າ ຫຼື ປະກົດວ່າຂໍ້ມູນອື່ນມີຂໍ້ຜິດພາດທີ່ມີສາລະສຳຄັນ.

ຄວາມຮັບຜິດຊອບຂອງຜູ້ບໍລິຫານ ແລະ ຜູ້ມີໜ້າທີ່ຄວບຄຸມດູແລຕໍ່ເອກະສານລາຍງານການເງິນ

ຄວາມຮັບຜິດຊອບຂອງຜູ້ບໍລິຫານ ໃນການກະກຽມເອກະສານລາຍງານການເງິນເຫຼົ່ານີ້ ໃຫ້ຖືກຕ້ອງຕາມນະໂຍ ບາຍການບັນຊີ ທີ່ໄດ້ອະທິບາຍໃນໝາຍເຫດ 3 ຂອງເອກະສານລາຍງານການເງິນ ແລະ ຮັບຜິດຊອບກ່ຽວກັບການ ຄວບຄຸມພາຍໃນທີ່ຜູ້ບໍລິຫານກຳນົດໄວ້ເພື່ອໃຫ້ສາມາດກະກຽມເອກະສານລາຍງານການເງິນທີ່ປາສະຈາກການສະ ແດງ ຂໍ້ມູນທີ່ຜິດພາດຢ່າງມີສາລະສຳຄັນ, ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ບໍລິຫານມີຄວາມຮັບຜິດຊອບການປະເມີນຄວາມສາມາດ ຂອງ ບໍລິສັດ ໃນການດຳເນີນງານຢ່າງຕໍ່ເນື່ອງ, ການເປີດເຜີຍຂໍ້ມູນ, ເລື່ອງທີ່ກ່ຽວກັບກັບການດຳເນີນງານຕໍ່ເນື່ອງ ຕາມ ຄວາມເໝາະສົມ, ແລະ ຫຼັກການບັນຊີແບບຕໍ່ເນື່ອງ ເວັ້ນເສຍແຕ່ຜູ້ບໍລິຫານ ມີຈຸດປະສົງທີ່ຈະຍົກເລີກ ຫຼື ຢຸດການ ດຳເນີນງານ ຫຼື ບໍ່ມີທາງເລືອກແທ້ໆ ແຕ່ຕ້ອງເຮັດເຊັ່ນນັ້ນ.

ຜູ້ມີໜ້າທີ່ໃນການຄວບຄຸມດູແລມີໜ້າທີ່ໃນການສອດສ່ອງດູແລຂະບວນການລາຍງານການເງິນຂອງບໍລິສັດ.

KPMG Lao Co., Ltd. a Company licensed under the Foreign Investment Law of Lao PDR, is a member of KPMG International, a Swiss cooperative

ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີ ຕໍ່ການກວດສອບເອກະສານລາຍງານການເງິນ

ການກວດສອບຂອງພວກຂ້າພະເຈົ້າ ມີວັດຖຸປະສົງເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ວ່າເອກະສານລາຍງານການເງິນ ໂດຍລວມແມ່ນປາສະຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ເຮັດບົດລາຍງານຂອງຜູ້ກວດສອບບັນຊີເຊິ່ງລວມຄວາມເຫັນຂອງພວກຂ້າພະເຈົ້າ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ຄືຄວາມເຊື່ອໝັ້ນໃນລະດັບສູງ, ແຕ່ບໍ່ໄດ້ເປັນການຮັບປະກັນວ່າການກວດສອບຕາມມາດຕະຖານການກວດສອບບັນຊີສາກົນ ຈະສາມາດກວດສອບຂໍ້ມູນທີ່ຂັດຕໍ່ຂໍ້ແທ້ຈິງທີ່ສຳຄັນເມື່ອມັນມີຢູ່. ການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນຂໍ້ມູນທີ່ມີຄວາມສຳຄັນ ຖ້າເປັນແຕ່ລະລາຍການ ຫຼື ທຸກລາຍການລວມກັນ, ເຊິ່ງອາດຈະມີຜົນຕໍ່ການຕັດສິນໃຈທາງດ້ານເສດຖະກິດຂອງຜູ້ໃຊ້ເອກະສານລາຍງານການເງິນດັ່ງກ່າວ.

ໃນການເປັນສ່ວນໜຶ່ງຂອງການກວດສອບຕາມມາດຕະຖານການກວດສອບບັນຊີ ພວກຂ້າພະເຈົ້າໄດ້ໃຊ້ວິຈາລະນະຍານຢ່າງມືອາຊີບ ແລະ ຮັກສາຄວາມສົງໄສຢ່າງມືອາຊີບຕະຫຼອດການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນຄວາມສ່ຽງຂໍ້ຜິດພາດທີ່ມີສາລະສຳຄັນ ໃນເອກະສານລາຍງານການເງິນ, ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ໃນການອອກແບບ ແລະ ປະຕິບັດຕາມຂັ້ນຂອງການກວດສອບເພື່ອຮັບມືກັບຄວາມສ່ຽງເຫຼົ່ານັ້ນ ແລະ ໄດ້ຮັບຫຼັກຖານໃນການກວດສອບບັນຊີທີ່ພຽງພໍ ແລະ ເໝາະສົມເພື່ອເປັນເກນໃນການສະແດງ ຄວາມເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງທີ່ກວດບໍ່ພົບຂໍ້ມູນທີ່ຂັດຕໍ່ຂໍ້ເທັດຈິງອັນເປັນຜົນມາຈາກ ການສໍ້ໂກງສູງກວ່າຂໍ້ຜິດພາດ ທີ່ເນື່ອງມາຈາກການສໍ້ໂກງ ອາດຈະກ່ຽວກັບການສົມຮູ້ຮ່ວມຄິດ, ການປອມແປງເອກະສານຫຼັກຖານ, ລະເລີຍໂດຍເຈດຕະນາ, ບິດເບືອນຈາກຄວາມຈິງ ຫຼື ການແຊກແຊງການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈຂອງການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບໃນການອອກແບບຂັ້ນຕອນການກວດສອບທີ່ມີຄວາມເໝາະສົມຕາມສະຖານະການ ແຕ່ບໍ່ແມ່ນສຳລັບຈຸດປະສົງຂອງການສະແດງຄວາມເຫັນກ່ຽວກັບປະສິດທິຜົນຂອງການຄວບຄຸມພາຍໃນຂອງບໍລິສັດໄດ້.

- ສະຫຼຸບຄວາມເໝາະສົມການນຳໃຊ້ພື້ນຖານການບັນຊີຢ່າງຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຂຶ້ນຢູ່ກັບຫຼັກຖານທີ່ໄດ້ຮັບ, ຄວາມບໍ່ແນ່ນອນຂໍ້ມູນທີ່ກ່ຽວຂ້ອງກັບເຫດການ ຫຼື ເງື່ອນໄຂທີ່ອາດມີຂໍ້ສົງໄສທີ່ສຳຄັນໃນນຳໃຊ້ຢ່າງຕໍ່ເນື່ອງ. ຖ້າພວກຂ້າພະເຈົ້າສະຫຼຸບວ່າມີຄວາມບໍ່ແນ່ນອນຂອງຂໍ້ມູນທີ່ສຳຄັນໄດ້ເກີດຂຶ້ນ, ພວກຂ້າພະເຈົ້າຈຳ ເປັນຕ້ອງໃຫ້ຄວາມສົນໃຈໃນການລາຍງານຂອງຜູ້ກວດສອບບັນຊີຕໍ່ການເປີດເຜີຍຂໍ້ມູນ ໃນເອກະສານລາຍງານການເງິນ ຫຼື ຖ້າຫາກການເປີດເຜີຍຂໍ້ມູນດັ່ງກ່າວບໍ່ພຽງພໍທີ່ຈະປ່ຽນແປງຄວາມຄິດເຫັນຂອງພວກຂ້າພະ ເຈົ້າ. ຂໍ້ສະຫຼຸບຂອງພວກຂ້າພະເຈົ້າຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ອອກ ບົດລາຍງານການກວດສອບບັນຊີຂອງພວກຂ້າພະເຈົ້າ. ເຖິງຢ່າງໃດກໍ່ຕາມ, ເຫດການ ຫຼື ສະຖານະການໃນອະນາຄົດອາດເຮັດໃຫ້ບໍລິສັດຢຸດການດຳເນີນງານແບບຕໍ່ເນື່ອງ.

- ການປະເມີນການນຳສະເໜີ ໂຄງປະກອບ ແລະ ເນື້ອໃນ ຂອງເອກະສານລາຍງານການເງິນໂດຍລວມ, ລວມ ທັງການເປີດເຜີຍຂໍ້ມູນ ແລະ ການນຳສະເໜີເອກະສານລາຍງານການເງິນການສະແດງລາຍການ ແລະ ເຫດ ການໃນຮູບແບບທີ່ເຮັດໃຫ້ມີການນຳສະເໜີຂໍ້ມູນໂດຍຖືກຕ້ອງຕາມທີ່ຄວນ.

- ໄດ້ຮັບຫຼັກຖານການກວດສອບທີ່ພຽງພໍກ່ຽວກັບຂໍ້ມູນທາງດ້ານການເງິນຂອງກິດຈະການ ຫຼື ກິດຈະກຳທາງ ທຸລະກິດໃນກຸ່ມບໍລິສັດ ການສະແດງຄວາມຄິດເຫັນກ່ຽວກັບເອກະສານລາຍງານການເງິນ. ພວກຂ້າພະເຈົ້າມີ ຄວາມຮັບຜິດຊອບຕໍ່ການກຳນົດແນວທາງ, ການຄວບຄຸມດູແລ ແລະ ການປະຕິບັດຂອງການກວດສອບ. ພວກຂ້າພະເຈົ້າເປັນຜູ້ຮັບຜິດຊອບຕໍ່ການສະແດງຄວາມຄິດເຫັນຂອງພວກຂ້າພະເຈົ້າ.

ພວກຂ້າພະເຈົ້າໄດ້ສື່ສານກັບຜູ້ບໍລິຫານທີ່ກ່ຽວຂ້ອງກ່ຽວກັບ ເລື່ອງໂດຍລວມ, ຂອບເຂດໃນການວາງແຜນ ແລະ ເວລາໃນການກວດສອບ ແລະ ການກວດສອບເນື້ອໃນທີ່ສຳຄັນ, ລວມທັງຂໍ້ບົກພ່ອງທີ່ສຳຄັນໃນການຄວບຄຸມ ພາຍໃນ ທີ່ໄດ້ພົບເຫັນໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ພວກຂ້າພະເຈົ້າຍັງໄດ້ໃຫ້ຄຳຮັບຮອງແກ່ຜູ້ມີໜ້າທີ່ໃນການຄວບຄຸມດູແລວ່າ ພວກຂ້າພະເຈົ້າເຮົາໄດ້ປະຕິບັດ ຕາມ ຂໍ້ກຳນົດດ້ານຈັນຍາບັນທີ່ກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຜູ້ທີ່ມີໜ້າທີ່ຄວບຄຸມດູແລ ກ່ຽວ ກັບ ຄວາມສຳພັນທັງໝົດ ຕະຫຼອດຈົນຮອດເລື່ອງບັນຫາອື່ນໆທີ່ຂ້າພະເຈົ້າເຊື່ອວ່າ ມີເຫດຜົນທີ່ບຸກຄົນພາຍນອກ ອາດພິຈາລະນາວ່າ ກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກຂ້າພະເຈົ້າ ແລະ ມາດຕະການທີ່ພວກຂ້າພະເຈົ້າ ໃຊ້ ເພື່ອປ້ອງກັນ ບໍ່ໃຫ້ພວກຂ້າພະເຈົ້າຂາດຄວາມເປັນອິດສະຫຼະ.

ຈາກເລື່ອງທີ່ສື່ສານກັບຜູ້ທີ່ມີໜ້າທີ່ຄວບຄຸມດູແລ, ພວກຂ້າພະເຈົ້າໄດ້ພິຈາລະນາເລື່ອງຕ່າງໆ ທີ່ມີເນື້ອໃນທີ່ສຳຄັນ ທີ່ສຸດ ໃນການກວດສອບເອກະສານລາຍງານການເງິນໃນງວດປະຈຸບັນ ແລະ ກຳນົດເປັນເລື່ອງທີ່ສຳຄັນໃນການ ກວດສອບ. ພວກຂ້າພະເຈົ້າໄດ້ອະທິບາຍເລື່ອງເຫຼົ່ານີ້ ໃນບົດລາຍງານຂອງຜູ້ກວດສອບ ເວັ້ນແຕ່ກົດໝາຍ ຫຼື ຂໍ້ບັງ ຄັບທີ່ບໍ່ໄດ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງຂອງອົງກອນດັ່ງກ່າວ ຫຼື ສະຖານະການທີ່ຢາກທີ່ຈະເກີດຂຶ້ນ, ພວກຂ້າພະເຈົ້າໄດ້ພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວ ໃນບົດລາຍງານຂອງພວກຂ້າພະເຈົ້າ ເພາະການກະທຳ ດັ່ງກ່າວ ສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບ ໃນທາງລົບຫຼາຍກວ່າຜົນປະໂຫຍດຕໍ່ສ່ວນ ສາທາລະນະຈາກການສື່ສານດັ່ງກ່າວ.

ຄູ່ສັນຍາທີ່ກ່ຽວຂ້ອງກັບການກວດສອບ ເພື່ອໃຫ້ໄດ້ຜົນການກວດສອບບັນຊີຂອງຜູ້ກວດສອບບັນຊີອິດສະຫຼະ ຄື ທ່ານ ກາເບຊັນ ໂກແລນດີວີ

KPMG Lao



ເຄພີເອັມຈີ ລາວ
ນະຄອນຫຼວງວຽງຈັນ
17 ມີນາ 2017

KPMG Lao Co., Ltd. a Company licensed under the Foreign Investment Law of Lao PDR, is a member of KPMG International, a Swiss cooperative

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ໃບສະຫຼຸບຊັບສິນບັດ

	ຍົກອະທິບາຍ	31 ທັນວາ 2016	2015
		(ລ້ານກີບ)	
ຊັບສິນ			
ເງິນລົງທຶນໃນບໍລິສັດລູກ	*5*	81.260	-
ເງິນລົງທຶນໃນວິສາຫະກິດ ຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	6	2.297.166	2.268.922
ເງິນລົງທຶນຈ່າຍລ່ວງໜ້າ	*7, 25*	3.133.596	3.690.647
ຊັບສິນຢູ່ພາຍໃຕ້ການສຳປະທານ	*8, 25*	9.412.504	4.343.130
ຊັບສິນບໍ່ໝຸນວຽນອື່ນໆ	*5, 25*	153.707	116.643
ລວມຊັບສິນບໍ່ໝຸນວຽນ		**15.078.233**	**10.419.342**
ເງິນສົດ ແລະ ທຽບເທົ່າເງິນສົດ	*9*	2.235.280	1.213.770
ເງິນລົງທຶນໄລຍະສັ້ນ	*10*	918.603	20.000
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	*11, 25*	491.469	304.485
ເຄື່ອງອາໄຫຼ່ ແລະ ເຄື່ອງໃຊ້ໃນສາງ		4.765	4.089
ຊັບສິນໝຸນວຽນອື່ນໆ		8.826	6.686
ລວມຊັບສິນໝຸນວຽນ		**3.658.943**	**1.549.030**
ລວມຍອດຊັບສິນ		**18.737.176**	**11.968.372**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ທ່ານນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ 17 ມີນາ 2017

ທ່ານ ບຸນສະຫງວ່ຽ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ 17 ມີນາ 2017

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ໃບສະຫຼຸບຊັບສິມບັດ

	ບົດອະທິບາຍ	31 ທັນວາ 2016	2015
		(ລ້ານກີບ)	
ທຶນຕົນເອງ			
ຮຸ້ນທຶນ/ທຶນຈົດທະບຽນ	*12*	6.717.215	6.717.215
ສ່ວນເພີ່ມມູນຄ່າຮຸ້ນ	*12*	985.621	985.621
ຄັງສະສົມຕາມລະບຽບການ	*13*	416.729	361.294
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ		(1.342)	(2.119)
ກຳໄລສະສົມ		1.070.927	1.042.217
ລວມທຶນຕົນເອງ		**9.189.150**	**9.104.228**
ໜີ້ສິນ			
ເງິນກູ້ຍືມໄລຍະຍາວ	*14*	844.299	841.457
ຮຸ້ນກູ້	*15*	3.985.936	1.452.163
ໜີ້ຕ້ອງຈ່າຍ ຂອງສັນຍາ SWAP	*16*	145.676	161.397
ລວມໜີ້ສິນບໍ່ໝຸນວຽນ		**4.975.911**	**2.455.017**
ໜີ້ຕ້ອງສົ່ງຜູ້ສະໜອງ		228.730	130.940
ໜີ້ຕ້ອງສົ່ງສຳລັບຊັບສິມບັດພາຍໃຕ້ສັນຍາສຳປະທານ	*25*	3.957.400	-
ເງິນກູ້ຍືມໄລຍະຍາວ ເຖິງກຳນົດຈັດເປັນໄລຍະສັ້ນ	*14, 25*	214.484	178.007
ໜີ້ຕ້ອງສົ່ງອາກອນລາຍໄດ້		12.238	8.199
ໜີ້ຕ້ອງສົ່ງອື່ນໆ	*17*	158.888	91.818
ໜີ້ສິນໝຸນວຽນອື່ນໆ		375	163
ລວມໜີ້ສິນໝຸນວຽນ		**4.572.115**	**409.127**
ລວມໜີ້ສິນ		**9.548.026**	**2.864.144**
ລວມຍອດທຶນຕົນເອງ ແລະ ໜີ້ສິນ		**18.737.176**	**11.968.372**

ທ່ານນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ 17 ມີນາ 2017

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ 17 ມີນາ 2017

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ໃບລາຍງານຜົນໄດ້ຮັບ

	ບົດອະທິບາຍ	ສຳລັບປີສິ້ນສຸດ 31 ທັນວາ 2016	2015
		(ລ້ານກີບ)	
ສືບຕໍ່ດຳເນີນງານ			
ຂາຍ	*25*	1.241.181	847.759
ຕົ້ນທຶນໃນການຂາຍ	*18*	(486.391)	(276.443)
ກຳໄລລວມ		754.790	571.316
ລາຍຮັບອື່ນໆ		11.065	16.198
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ	*18*	(120.729)	(121.027)
ຂາດທຶນຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ		(64.800)	(9.976)
ສ່ວນແບ່ງກຳໄລ ຈາກເງິນລົງທຶນ ໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	*6*	178.051	286.219
ກຳໄລຈາກການດຳເນີນງານ		**758.377**	**742.730**
ລາຍຈ່າຍທາງການເງິນ	*19*	(154.918)	(61.937)
ກຳໄລກ່ອນຈ່າຍອາກອນ		**603.459**	**680.793**
ອາກອນກຳໄລ	*20*	(49.110)	(39.954)
ກຳໄລໃນປີ		**554.349**	**640.839**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	*21*	330,11	456,44

ທ່ານນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ 17 ມີນາ 2017

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ 17 ມີນາ 2017

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນຕົນເອງ ຂອງຜູ້ຖືຮຸ້ນ

	ບົດອະທິບາຍ	ທຶນຈົດທະບຽນ	ສ່ວນເພີ່ມມູນຄ່າຮຸ້ນ	ຄັງສະສົມຕາມລະບຽບການ	ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	ກຳໄລສະສົມ	ລວມຍອດທຶນຕົນເອງ
				(ລ້ານກີບ)			
ສຳລັບປີການບັນຊີ 31 ທັນວາ 2015							
ຍອດ ຍົກມາ 1 ມັງກອນ 2015		4.904.867	142.229	297.210	(1.476)	978.811	6.321.641
ການເພີ່ມຂຶ້ນ ທຶນຈົດທະບຽນ	*12*	1.812.348	843.392	-	-	-	2.655.740
ກຳໄລໃນປີ		-	-	-	-	640.839	640.839
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	(643)	-	(643)
ຈ່າຍເງິນປັນຜົນ	*22*	-	-	-	-	(513.349)	(513.349)
ໂອນເຂົ້າຄັງສະສົມ	*13*	-	-	64.084	-	(64.084)	-
ຍອດ ຍົກມາ 31 ທັນວາ 2015		**6.717.215**	**985.621**	**361.294**	**(2.119)**	**1.042.217**	**9.104.228**
ສຳລັບປີການບັນຊີ 31 ທັນວາ 2016							
ຍອດ ຍົກມາ 1 ມັງກອນ 2016		6.717.215	985.621	361.294	(2.119)	1.042.217	9.104.228
ກຳໄລໃນປີ		-	-	-	-	554.349	554.349
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	777	-	777
ຈ່າຍເງິນປັນຜົນ	*22*	-	-	-	-	(470.204)	(470.204)
ໂອນເຂົ້າຄັງສະສົມ	*13*	-	-	55.435	-	(55.435)	-
ຍອດ ຍົກມາ 31 ທັນວາ 2016		**6.717.215**	**985.621**	**416.729**	**(1.342)**	**1.070.927**	**9.189.150**

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ 17 ມີນາ 2017

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ 17 ມີນາ 2017

ໝາຍເຫດປະກອບເອກະສານລາຍງານການເງິນເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນນີ້

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ໃບລາຍງານກະແສເງິນສົດ

	ສຳລັບປີສິ້ນສຸດ 31 ທັນວາ	
	2016	2015
	(ລ້ານກີບ)	
ກະແສເງິນສົດຈາກກິດຈະກຳການດຳເນີນງານ:		
ກຳໄລໃນປີ	554.349	640.839
ປັບປຸງ:		
ຄ່າຫຼ້ຍຫ້ຽນ	434.047	225.442
ລາຍຈ່າຍທາງການເງິນ	154.918	61.937
ຂາດທຶນຈາກອັດຕາແລກປ່ຽນ ບໍ່ມີຕົວຕົນ	67.074	26.973
ກຳໄລຮຸ້ນ ຈາກເງິນລົງທຶນໃນວິສາຫະກິດ ຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	(178.051)	(286.219)
ອາກອນກຳໄລ	49.110	39.954
	1.081.447	**708.926**
ປ່ຽນແປງໃນ:		
ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ	(277.154)	131.953
ເຄື່ອງອາໄຫຼ່ ແລະ ເຄື່ອງໃຊ້ໃນສາງ	(676)	(45)
ຊັບສິນໝຸນວຽນອື່ນໆ	(2.140)	4.452
ຊັບສິນບໍ່ໝຸນວຽນອື່ນໆ	(12.567)	(6.068)
ໜີ້ຕ້ອງຈ່າຍການຄ້າ ແລະ ອື່ນໆ	120.241	32.891
ໜີ້ຕ້ອງສົ່ງອື່ນໆ	19.316	(34.218)
ໜີ້ສິນໝຸນວຽນອື່ນໆ	212	123
ກະແສເງິນສົດທີ່ກຳເນີດຈາກການດຳເນີນງານ	928.680	838.014
ອາກອນກຳໄລທີ່ໄດ້ຈ່າຍ	(45.071)	(36.060)
ເງິນສົດ ສຸດທິ ຈາກກິດຈະກຳການດຳເນີນງານ	**883.609**	**801.954**
ກະແສເງິນສົດ ຈາກກິດຈະກຳການລົງທຶນ		
ຈ່າຍລ່ວງໜ້າສຳລັບເງິນລົງທຶນ	(41.025)	(2.991.664)
ຮັບເງິນຈາກເງິນລົງທຶນໃນບໍລິສັດຮຸ້ນສ່ວນ	-	13.021
ຊື້ລົງທຶນໃນບໍລິສັດລູກ	(81.260)	-
ຊື້ຊັບສົມບັດພາຍໃຕ້ສັນຍາສຳປະທານ	(733.216)	(498.862)
ຊື້ຊັບສົມບັດຄົງທີ່ບໍ່ມີຕົວຕົນ	-	(787)
ເງິນລົງທຶນຫຼຸດລົງໃນປະຈຸບັນ	(890.413)	(20.000)
ຮັບເງິນຄືນຈາກເງິນລົງທຶນໄລຍະສັ້ນ	-	20.000
ຫຼຸດລົງໃນເງິນລົງທຶນໃນວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດຮຸ້ນສ່ວນ	(6.379)	-
ຮັບເງິນປັນຜົນຈາກເງິນລົງທຶນ ໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ	156.963	189.366
ເງິນສົດ ສຸດທິທີ່ໃຊ້ໃນກິດຈະກຳການລົງທຶນ	**(1.595.330)**	**(3.288.926)**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ໃບລາຍງານກະແສເງິນສົດ

	ສຳລັບປີສິ້ນສຸດ 31 ທັນວາ	
	2016	2015
	(ລ້ານກີບ)	
ກະແສເງິນສົດ ຈາກກິດຈະກຳການເງິນ:		
ຈ່າຍລາຍທາງດ້ານການເງິນ	(99.053)	(53.901)
ຈ່າຍເງິນສົດສຳລັບຕົ້ນທຶນ	(50.836)	(16.936)
ຮັບເງິນຈາກການອອກຮຸ້ນກູ້	2.520.124	-
ຈ່າຍເງິນປັນຜົນ	(470.204)	(513.349)
ການເພີ່ມຂອງເງິນກູ້ຢືມໄລຍະຍາວ	42.677	555.198
ຈ່າຍເງິນກູ້ຢືມໄລຍະຍາວ	(193.197)	(138.365)
ຮັບເງິນຈາກການອອກຮຸ້ນສາມັນ	-	2.655.740
ຈ່າຍເງິນເພື່ອເປັນຫຼັກຊັບຄ້ຳປະກັນ	(26.765)	(38.704)
ເງິນສົດສຸດທິ ຈາກກິດຈະກຳການເງິນ	**1.722.746**	**2.449.683**
ເງິນສົດ ແລະ ທຽບເທົ່າເງິນສົດ ເພີ່ມຂຶ້ນ (ຫຼຸດລົງ) ສຸດທິ	1.011.024	(37.289)
ຜົນກະທົບຈາກອັດຕາແລກປ່ຽນ ເງິນຕາຕ່າງປະເທດໃນມື້ສິ້ນປີ	10.486	(475)
ເງິນສົດ ແລະ ທຽບເທົ່າເງິນສົດ ໃນວັນທີ 1 ມັງກອນ	1.213.770	1.251.534
ເງິນສົດ ແລະ ທຽບເທົ່າເງິນສົດ ໃນວັນທີ 31 ທັນວາ	**2.235.280**	**1.213.770**
ລາຍການທີ່ບໍ່ແມ່ນເງິນສົດ		
ໜີ້ຕ້ອງສົ່ງໃນການຊື້ຊັບສິນບັດຄົງທີ່	3.995.884	97.595
ການຊຳລະບັນຊີ ໜີ້ຕ້ອງສົ່ງການຄ້າ ແລະ ເງິນກູ້ໄລຍະຍາວ ຈາກພາກສ່ວນທີ່ກ່ຽວຂ້ອງ	77.264	-
ຊັບສິນພາຍໃຕ້ສັນຍາສຳປະທານ ສັນຍາເງິນກູ້ຢືມ ໄລຍະຍາວກັບພາກສ່ວນທີ່ກ່ຽວຂ້ອງ	185.502	

ທ່ານນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ 17 ມີນາ 2017

ທ່ານ ບຸນສະຫງວ່ຽ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ 17 ມີນາ 2017

ບໍລິສັດ ເຊລິດ-ໄຟຟ້າລາວ ມະຫາຊົນ

ໝາຍເຫດປະກອບເອກະສານລາຍງານການເງິນ

ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2016

ໝາຍເຫດ	ເນື້ອໃນ
ພື້ນຖານການກະກຽມ	
1	ການລາຍງານກິດຈະການ
2	ພື້ນຖານການບັນຊີ
3	ນະໂຍບາຍການບັນຊີ
ການສ່ວນການດຳເນີນງານ	
4	ການສ່ວນການດຳເນີນງານ
ຊັບສິນ	
5	ເງິນລົງທຶນໃນບໍລິສັດລູກ
6	ເງິນລົງທຶນໃນວິສາຫະກິດຮ່ວມ ແລະ ບໍລິສັດຮຸ້ນສ່ວນ
7	ເງິນລົງທຶນຈ່າຍລ່ວງໜ້າ
8	ຊັບສິນພາຍໃຕ້ການສຳປະທານ
9	ເງິນສົດ ແລະ ລາຍການທຽບເທົ່າເງິນສົດ
10	ເງິນລົງທຶນໄລຍະສັ້ນ
11	ໜີ້ຕ້ອງຮັບຈາກລູກໜີ້ການຄ້າ ແລະ ໜີ້ຕ້ອງຮັບອື່ນໆ
ທຶນຜູ້ຖືຮຸ້ນ	
12	ຮຸ້ນທຶນ ແລະ ສ່ວນເພີ່ມມູນຄ່າຮຸ້ນ
13	ຄັງສະສົມຕາມລະບຽບການ
ໜີ້ສິນ	
14	ເງິນກູ້ຢືມໃນໄລຍະຍາວ
15	ຮຸ້ນກູ້
16	ໜີ້ຕ້ອງຈ່າຍຂອງສັນຍາ SWAP
17	ໜີ້ຕ້ອງສິ່ງອື່ນໆ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໝາຍເຫດປະກອບເອກະສານລາຍງານການເງິນ

ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2016

ໝາຍເຫດ	ເນື້ອໃນ
ຄ່າໃຊ້ຈ່າຍ	
18	ລາຍຈ່າຍຕາມລັກສະນະເນື້ອໃນ
19	ລາຍຈ່າຍທາງການເງິນ
20	ອາກອນກຳໄລ
ຂໍ້ມູນອື່ນໆ	
21	ພື້ນຖານກຳໄລຕໍ່ຮຸ້ນ
22	ເງິນປັນຜົນ
23	ເຄື່ອງມືທາງການເງິນ
24	ພາລະຜູກພັນກັບພາກສ່ວນທີ່ບໍ່ກ່ຽວຂ້ອງ
25	ພາກສ່ວນທີ່ກ່ຽວຂ້ອງ
26	ເຫດການທີ່ເກີດຂຶ້ນພາຍຫຼັງການລາຍງານ
27	ການຈັດປະເພດບັນຊີ
28	ຂໍ້ມູນເພີ່ມເຕີມ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໝາຍເຫດປະກອບເອກະສານລາຍງານການເງິນ

ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2016

1 ການລາຍງານກິດຈະການ

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ ("ບໍລິສັດ" ຫຼື "ຜ ຟຟລ") ເປັນ ບໍລິສັດ ມະຫາຊົນ ເຊິ່ງໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບ ແຫ່ງ ສປປ ລາວ ວັນທີ 11 ມັງກອນ 2011 ແລະ ຖືກຄຸ້ມຄອງໂດຍ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ບໍລິສັດ ໄດ້ຖືກສ້າງຕັ້ງຂຶ້ນ ແລະ ຈົດທະບຽນ ກັບ ກະຊວງ ອຸດສະຫະກຳ ແລະ ການຄ້າ ໃນວັນທີ 15 ທັນວາ 2010 (ວັນສ້າງຕັ້ງ ບໍລິສັດ). ເປັນບໍລິສັດໃນເຄືອ ລັດວິສາຫະກິດ ໄຟຟ້າ ລາວ ("ຟຟລ") ເຊິ່ງຖືຮຸ້ນ 75%.

ການຈົດທະບຽນຂອງບໍລິສັດໄດ້ລິເລີ່ມໂດຍ ລັດວິສາຫະກິດ ໄຟຟ້າ ລາວ (ຟຟລ) ເຊື່ອມຕໍ່ກັບການປັບໂຄງສ້າງ ຂອງທຸລະກິດ ພະລັງງານຂອງ ຟຟລ ໂດຍການໂອນຊັບສິນການຜະລິດທີ່ມີຢູ່ ແລະ ສິດທິສະເພາະດ້ານໃດດ້ານໜຶ່ງ ແລະ ພັນທະຂອງ ບໍລິສັດ ຕາມສຳນັກງານນາຍົກລັດຖະມົນຕີ ("ສນຍ") ສະບັບເລກທີ 180 ລົງວັນທີ 13 ທັນວາ 2010 ນຍ, ລົງອະນຸມັດ ຟຟລ ທີ່ຈະຂາຍຮຸ້ນຂອງຕົນໃນໂຮງງານໄຟຟ້າເອກະລາດ ("IPP") ໂຄງການກັບບໍລິສັດ.

ໃນວັນທີ 15 ທັນວາ 2010, ເລີ່ມດຳເນີນທຸລະກິດ, ຟຟລ ໄດ້ໂອນຊັບສິນການຜະລິດທີ່ມີຢູ່ ແລະ ໜີ້ສິນທີ່ກ່ຽວຂ້ອງຂອງ 7 ເຂື່ອນໄຟຟ້າ, ລວມມີ ເຂື່ອນນ້ຳງື່ມ 1, ເຂື່ອນນ້ຳເລີກ, ເຂື່ອນນ້ຳມັງ 3, ເຂື່ອນນ້ຳຊອງ, ເຂື່ອນເຊເຊັດ 1, ເຂື່ອນເຊເຊັດ 2, ເຂື່ອນເຊລະບໍ, ຕາມການມູນຄ່າສຸດທິ ໃນວັນທີ 20 ຕຸລາ 2010, ເປັນຈຳນວນເງິນ 2.605.792 ລ້ານກີບ. ຟຟລ ຈະສືບຕໍ່ກິດຈະກຳຂອງຕົນຢູ່ໃນລະບົບສາຍສົ່ງ ແລະ ການແຜ່ກະຈາຍຂອງໄຟຟ້າທີ່ຜະລິດໂດຍທີ່ມີຢູ່ຊັບສິນການຜະລິດໄປເຖິງຜູ້ຊົມໃຊ້, ຕັ້ງແຕ່ 15 ທັນວາ 2010, ບໍລິສັດໄດ້ເລີ່ມການດຳເນີນງານການຜະລິດໄຟຟ້າ ຂອງຕົນສ່ວນໃຫຍ່ແມ່ນຂຶ້ນຢູ່ກັບ ຊັບສິນການໂອນຍ້າຍ ດັ່ງກ່າວຈະສະໜອງໄຟຟ້າທີ່ຜະລິດ ກັບຄືນໄປໃຫ້ ຟຟລ ອີງຕາມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ລະບຸໄວ້ໃນ ສັນຍາ ຊື້ຂາຍ ພະລັງງານ ("PPA").

ນອກຈາກນັ້ນ, ບໍລິສັດໄດ້ສືບຕໍ່ຊື້ໂຄງການພະລັງງານ ແລະ ສ້າງຕັ້ງບໍລິສັດຮ່ວມທຶນໃໝ່ກັບຄູ່ສັນຍາທີ່ກ່ຽວຂ້ອງ ແລະ ຟຟລ.

ທີ່ຕັ້ງສຳນັກງານ ຕັ້ງຢູ່ຊັ້ນ 7, ອາຄານສຳນັກງານໃຫຍ່ຂອງ ຟຟລ, ຖະໜົນ ມິດຕະພາບລາວໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ແຂວງນະຄອນຫຼວງວຽງຈັນ, ໄປສະນີ 2392, ສປປ ລາວ.

ເອກະສານລາຍງານການເງິນໄດ້ຮັບອະນຸມັດໃຫ້ອອກ ໂດຍຄະນະກຳມະການຜູ້ບໍລິຫານ ວັນທີ 17 ມິນາ 2017.

2 ພື້ນຖານການບັນຊີ

ເອກະສານລາຍງານການເງິນໄດ້ສ້າງຂຶ້ນ ຕາມນະໂຍບາຍການບັນຊີຂອງບໍລິສັດ ເຊິ່ງໄດ້ເຮັດຂຶ້ນຕາມເກນລາຄາຕົ້ນທຶນເດີມ ຍົກເວັ້ນການລົງທຶນໃນວິສາຫະກິດ ຂາຮຸ້ນ ແລະ ກິດຈະການ ບໍລິສັດຮຸ່ນສ່ວນ ລາຍລະອຽດເພີ່ມເຕີມໃນໝາຍເຫດ 3.

ຍັງບໍ່ທັນໄດ້ມີການວາງມາດຕະຖານການບັນຊີລາວ ("LAS"). ປະຈຸບັນ LAS ກຳລັງມີການພັດທະນາພາຍໃຕ້ ກົມບັນຊີ ແລະ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ ("ສວບກລ"). ໃນປັດຈຸບັນ, ບັນດາບໍລິສັດ ໄດ້ນຳໃຊ້ ປຶ້ມຄູ່ມືບັນຊີ ("LAM") ກ່ຽວກັບລະບຽບວິທີປະຕິບັດດ້ານການບັນຊີ ທີ່ວາງອອກໂດຍກະຊວງການເງິນ, LAM ປຶ້ມຄູ່ມືດັ່ງກ່າວ ໄດ້ວາງຂໍ້ແນະນຳ ຕາມພື້ນຖານເງິນຄ້າງຮັບ-ຄ້າງຈ່າຍ, ເຊິ່ງຍັງມີຄວາມແຕກຕ່າງທີ່ມີສາລະສຳຄັນລະຫວ່າງ LAM ແລະ ມາດຕະຖານການລາຍງານສາກົນ ("IFRS"). ຄວາມແຕກຕ່າງທີ່ສຳຄັນເຫຼົ່ານີ້, ຕົວຢ່າງເຊັ່ນ: ສັນຍາສຳປະທານ, ການຮັບຮູ້ ລາຍຮັບ, ຊັບສິນບັດຄົງທີ່, ສັນຍາເຊົ່າສິນເຊື່ອ, ຜົນປະໂຫຍດຂອງພະນັກງານ, ຜົນກະທົບຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ, ອາກອນກຳໄລ ແລະ ອາກອນຊ້ຳຊ້ອນ, ເຄື່ອງມືທາງດ້ານການເງິນ, ເອກະສານລາຍງານການເງິນແບບລວມ ແລະ ແບບສະເພາະວິສາຫະກິດ, ວິສາຫະກິດຂາຮຸ້ນ ບໍລິສັດຮຸ່ນສ່ວນ ແລະ ຄ່າໃຊ້ຈ່າຍກ່ອນການດຳເນີນງານ. ຫຼັກການບັນຊີ ການນຳໃຊ້ ອາດຈະແຕກຕ່າງ ທີ່ສຳຄັນ ໂດຍທຽບຈາກຫຼັກການບັນຊີ ທີ່ຖືກຍອມຮັບໂດຍທົ່ວໄປ ລວມທັງມາດຕະຖານການລາຍງານການເງິນສາກົນ ("IFRS") ໄດ້ຮັບຮອງເອົາໃນບາງປະເທດ ແລະ ບາງຂອບເຂດ.

ໃນ ສປປ ລາວ, ຍັງບໍ່ທັນມີມາດຕະຖານການບັນຊີ ແລະ ຄຳແນະນຳສາມາດນຳໃຊ້ ສຳລັບບາງຢ່າງເຊັ່ນວ່າ: ການລົງທຶນໃນວິສາຫະກິດ ແລະ ບໍລິສັດຮຸ່ນສ່ວນ. ໃນກໍລະນີບໍ່ມີມາດຕະຖານການບັນຊີທີ່ກ່ຽວຂ້ອງ, ບໍລິສັດຈຶ່ງຕັດສິນໃຈທີ່ຈະເລືອກໃຊ້ນະໂຍບາຍການບັນຊີ ບາງຢ່າງເຊັ່ນ: ວິທີການບັນທຶກບັນຊີທຶນ ສຳລັບການລົງທຶນຂອງຕົນ ເຊິ່ງຜູ້ບໍລິຫານເຊື່ອວ່າມັນສອດຄ່ອງກັບຫຼັກການການປະຕິບັດໃນສາກົນ.

ໃນການກະກຽມເອກະສານລາຍງານການເງິນນີ້, ຜູ້ບໍລິຫານຕ້ອງໃຊ້ດຸນພິນິດ, ຄາດຄະເນ ແລະ ສົມມຸດຕິຖານ ທີ່ມີຜົນກະທົບການນຳໃຊ້ນະໂຍບາຍການບັນຊີ ແລະ ລາຍງານມູນຄ່າຂອງຊັບສິນ, ໜີ້ສິນ, ລາຍຮັບ ແລະ ຄ່າໃຊ້ຈ່າຍ. ຜົນທີ່ເກີດຂຶ້ນຈິງອາດຈະແຕກຕ່າງຈາກທີ່ຄາດຄະເນ.

ການຄາດຄະເນ ແລະ ສົມມຸດຕິຖານ ທີ່ໃຊ້ໃນການກະກຽມເອກະສານລາຍງານການເງິນຈະໄດ້ຮັບການທົບທວນຄືນຢ່າງຕໍ່ເນື່ອງ. ການປັບປຸງການຄາດຄະເນແມ່ນຈະຮັບຮູ້ເປັນລາຍໄດ້ໃນອະນາຄົດ.

3 ນະໂຍບາຍການບັນຊີ

(ກ) ການລົງທຶນໃນບໍລິສັດລູກ, ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ

ບໍລິສັດລູກ

ບໍລິສັດລູກແມ່ນໝ່ວຍງານທີ່ຖືກຄວບຄຸມໂດຍບໍລິສັດ. ບໍລິສັດຄວບຄຸມໝ່ວຍງານແມ່ນຈະໄດ້ຮັບ ຫຼື ມີສິດທິ, ໃນການໄດ້ຮັບຜົນຕອບແທນຈາກການມີສ່ວນຮ່ວມຂອງໝ່ວຍງານ ແລະ ມີຄວາມສາມາດໃນການສົ່ງຜົນກະທົບກັບຄືນ ຕໍ່ຜົນຕອບແທນເຫຼົ່ານັ້ນຜ່ານອຳນາດທີ່ເໜືອກວ່າໝ່ວຍງານ, ໂດຍທົ່ວໄປຈະມີການຖືຮຸ້ນລະຫວ່າງ 50% ແລະ 100% ຂອງສິດທິການລົງຄະແນນສຽງ. ເອກະສານລາຍງານການເງິນຂອງບໍລິສັດລູກລວມຢູ່ໃນເອກະສານລາຍງານການເງິນຈາກວັນທີ່ຄວບຄຸມເຖິງວັນທີ່ຢຸດຄວບຄຸມ.

ໃນວັນທີ 31 ທັນວາ 2016, ບໍລິສັດຍັງບໍ່ໄດ້ປັບນະໂຍບາຍທາງການບັນຊີ ສຳລັບການລວບລວມເຂົ້າເອກະສານລາຍງານການເງິນ.

ວິສາຫະກິດຂາຮຸ້ນ

ວິສາຫະກິດຂາຮຸ້ນ ແມ່ນວິສາຫະກິດທີ່ມີອິດທິພົນທີ່ສຳຄັນຕໍ່ກັບບໍລິສັດ ແຕ່ບໍ່ມີໄດ້ຄວບຄຸມ, ໂດຍທົ່ວໄປຖືເປັນສັດສ່ວນການຖືຮຸ້ນ 20% ແລະ 50% ຂອງສິດອອກສຽງທັງໝົດ. ເງິນລົງທຶນໃນວິສາຫະກິດຂາຮຸ້ນ ເບື້ອງຕົ້ນແມ່ນຮັບຮູ້ໃນມູນຄ່າຕົ້ນທຶນ.

ສ່ວນແບ່ງກຳໄລ ຫຼື ຂາດທຶນ ໃນວິສະຫາກິດຂາຮຸ້ນ ທີ່ເກີດຂຶ້ນພາຍຫຼັງການໄດ້ມາ ຈະລວມໄວ້ໃນກຳໄລ ຫຼື ຂາດທຶນ. ຜົນສະສົມ ຂອງການປ່ຽນແປງ ພາຍຫຼັງການໄດ້ມາຈະປັບປຸງກັບມູນຄ່າຕາມບັນຊີຂອງເງິນລົງທຶນ. ເມື່ອສ່ວນແບ່ງຂາດທຶນ ໃນວິສາຫະກິດ ຂາຮຸ້ນມີມູນຄ່າເທົ່າກັບ ຫຼື ຫຼາຍກວ່າມູນຄ່າເງິນລົງທຶນໃນວິສາຫະກິດ, ລວມທັງໜີ້ຕ້ອງຮັບ ທີ່ບໍ່ມີການຄ້ຳປະກັນອື່ນໆ, ບໍລິສັດ ຈະບໍ່ໄດ້ຮັບຮູ້ສ່ວນແບ່ງຂາດທຶນເພີ່ມເຕີມ, ຍົກເວັ້ນແຕ່ບໍລິສັດໄດ້ມີພັນທະ ຫຼື ການຊຳລະເງິນແທນຂອງວິສາຫະກິດຂາຮຸ້ນ.

ກຳໄລທີ່ຍັງບໍ່ເກີດຂຶ້ນຈົ່ງລະຫວ່າງບໍລິສັດ ແລະ ວິສາຫະກິດຂາຮຸ້ນ ຈະຕັດບັນຊີຕາມວິທີສ່ວນໄດ້ສ່ວນເສຍໃນວິສາຫະກິດຂາຮຸ້ນ ເວັ້ນແຕ່ລາຍການດັ່ງກ່າວ ຈະມີການບັນທຶກຂາດທຶນ ຈາກການສູນເສຍມູນຄ່າຂອງຊັບສິນທີ່ໄດ້ໂອນໄປ.

ນະໂຍບາຍການບັນຊີຂອງວິສາຫະກິດມີການປ່ຽນແປງເມື່ອເຫັນວ່າມີຄວາມຈຳເປັນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງບໍລິສັດ. ກຳໄລ ຫຼື ຂາດທຶນຈາກການຫຼຸດສັດສ່ວນຂອງເງິນລົງທຶນໃນວິສາຫະກິດ ຈະຮັບຮູ້ໃນກຳໄລ ຫຼື ຂາດທຶນ.

ບໍລິສັດຮຸ່ນສ່ວນ

ເງິນລົງທຶນໃນບໍລິສັດຮຸ່ນສ່ວນ ແມ່ນບໍລິສັດທີ່ມີສິດຄວບຄຸມຮ່ວມກັນແຕ່ບໍ່ໄດ້ຄວບຄຸມ. ເງິນລົງທຶນໃນບໍລິສັດຮຸ່ນສ່ວນ ຮຸ່ນສ່ວນນີ້ໃຊ້ແບບວິທີສ່ວນໄດ້ສ່ວນເສຍ ໃນການສະແດງຢູ່ໃນເອກະສານລາຍງານການເງິນ. ສ່ວນແບ່ງກຳໄລ ຫຼື ຂາດທຶນ ໃນບໍລິສັດຮຸ່ນສ່ວນທີ່ເກີດຂຶ້ນພາຍຫຼັງການໄດ້ມາ ຈະລວມໄວ້ໃນກຳໄລ ຫຼື ຂາດທຶນ ຜົນສະສົມຂອງການປ່ຽນແປງ ພາຍຫຼັງໄດ້ມາຈະປັບປຸງກັບມູນຄ່າຕາມບັນຊີຂອງເງິນລົງທຶນ ເມື່ອສ່ວນແບ່ງຂາດທຶນໃນບໍລິສັດຮຸ່ນສ່ວນມີມູນຄ່າເທົ່າກັບ ຫຼື ຫຼາຍກວ່າມູນຄ່າເງິນລົງທຶນໃນວິສາຫະກິດ ສ່ວນໄດ້ເສຍໃນບໍລິສັດຮຸ່ນສ່ວນ ບໍລິສັດບໍ່ໄດ້ຮັບຮູ້ຜົນຂາດທຶນ ເພີ່ມເຕີມ ຍົກເວັ້ນແຕ່ບໍລິສັດ ມີພັນທະ ຫຼື ການຊຳລະເງິນແທນບໍລິສັດຮຸ່ນສ່ວນ.

ນະໂຍບາຍການບັນຊີຂອງບໍລິສັດຮຸ່ນສ່ວນມີການປ່ຽນແປງເມື່ອເຫັນວ່າມີຄວາມຈຳເປັນ ເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງບໍລິສັດ. ກຳໄລ ຫຼື ຂາດທຶນຈາກການຫຼຸດສັດສ່ວນຂອງເງິນລົງທຶນໃນບໍລິສັດຮຸ່ນສ່ວນຈະຮັບຮູ້ໃນກຳໄລ ຫຼື ຂາດທຶນ.

(ຂ) ການແລກປ່ຽນເງິນຕາຕ່າງປະເທດ

ທຸກລາຍການໃນເອກະສານລາຍງານການເງິນ ແມ່ນຖືກແປງຄ່າເປັນສະກຸນເງິນກີບ ("ກີບ").

ລາຍການທີ່ເປັນເງິນຕາຕ່າງປະເທດ ແມ່ນຖືກແປງເປັນກີບ ດ້ວຍອັດຕາແລກປ່ຽນ ຂອງມື້ທີ່ມີລາຍການເກີດຂຶ້ນ. ຊັບສິນ ທາງການເງິນ ແລະ ໜີ້ສິນ ທີ່ເປັນຕົວເງິນເປັນສະກຸນເງິນຕ່າງປະເທດ ແມ່ນຖືກແປງຄ່າເງິນກີບ ໂດຍໃຊ້ອັດຕາແລກປ່ຽນຕາມວັນທີ່ລາຍງານ. ລາຍການກຳໄລ ແລະ ຂາດທຶນທີ່ເກີດຈາກການຮັບ ຫຼື ຈ່າຍທີ່ເປັນເງິນຕາຕ່າງປະເທດ ແລະ ທີ່ເກີດຈາກການແປງຄ່າຊັບສິນທາງການເງິນ ແລະ ໜີ້ສິນ ທີ່ເປັນເງິນຕາຕ່າງປະເທດ ດັ່ງກ່າວ ໄດ້ບັນທຶກໃນໃບລາຍງານຜົນໄດ້ຮັບ.

ສຳລັບວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ, ຜົນການດຳເນີນງານ ແລະ ໃບສະຫຼຸບຊັບສິນບັດ ຂອງວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ແມ່ນບໍ່ໄດ້ລວມອັດຕາເງິນເຟີ້ ຂອງສະກຸນເງິນ) ທີ່ມີສະກຸນເງິນ ໃນການລາຍງານການເງິນຕ່າງໆ ກັບບໍລິສັດ ແມ່ນແປງຄ່າມາເປັນສະກຸນເງິນໃນລາຍງານ ດັ່ງຕໍ່ໄປນີ້:

- ຊັບສິນ, ໜີ້ສິນ ແລະ ທຶນຂອງໃບສະຫຼຸບຊັບສິນບັດ ທີ່ນຳສະແດງແມ່ນຖືກແປງຄ່າດ້ວຍອັດຕາແລກປ່ຽນໃນມື້ຂອງ ໃບສະຫຼຸບຊັບສິນບັດ;
- ລາຍຮັບ ແລະ ລາຍຈ່າຍ ໃນໃບລາຍງານຜົນໄດ້ຮັບສັງລວມ ແມ່ນແປງຄ່າດ້ວຍອັດຕາແລກປ່ຽນເງິນຕາສະເລ່ຍຂອງປີ; ແລະ
- ທຸກຜົນແຕກຕ່າງຈາກການແລກປ່ຽນທັງໝົດ ແມ່ນຮັບຮູ້ເຂົ້າອົງປະກອບຂອງທຶນ.

(ຄ) ເຄື່ອງອາໄຫຼ່ ແລະ ເຄື່ອງໃນສາງອື່ນໆ

ເຄື່ອງອາໄຫຼ່ ແລະ ເຄື່ອງໃນສາງອື່ນໆ ສະແດງອອກ ຕາມລາຄາທີ່ຕ່ຳກວ່າ ຫຼື ມູນຄ່າສຸດທິ, ການຄິດໄລ່ຕົ້ນທຶນຈ່າຍອອກສາງ ໄດ້ນຳໃຊ້ວິທີການສະເລ່ຍນ້ຳໜັກ. ຕົ້ນທຶນຊື້ປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍໂດຍກົງທີ່ຕິດພັນກັບການຊື້ເຄື່ອງໃນສາງ ເຊັ່ນ: ຄ່າບໍລິການການຂົນສົ່ງ, ລົບທຸກສ່ວນຫຼຸດທີ່ໄດ້ຮັບ, ເງິນອຸດໜູນ ຫຼື ສ່ວນຫຼຸດ. ມູນຄ່າສຸດທິແມ່ນລາຄາສິນຄ້າຄົງເຫຼືອ ສາມາດຮັບຮູ້ໄດ້ໃນໄລຍະປົກກະຕິຂອງທຸລະກິດ ຫຼັງຈາກຫັກຕົ້ນທຶນໃນການຂາຍອອກ, ຄ່າສູນເສຍມູນຄ່າເກີດຂຶ້ນ, ກໍລະນີ ຜຸ້ນສະໄໝ, ເສຍຄຸນຂອງເຄື່ອງອາໄຫຼ່ ແລະ ເຄື່ອງໃນສາງ.

(ງ) ຊັບສິນພາຍໃຕ້ສັນຍາສຳປະທານ

ຊັບສິນພາຍໃຕ້ສັນຍາສຳປະທານສ່ວນໃຫຍ່ປະກອບດ້ວຍ ອາຄານ, ເຂື່ອນໄຟຟ້ານ້ຳຕົກ, ອຸປະກອນ ແລະ ເຄື່ອງຈັກ ສະແດງມູນຄ່າເບື້ອງຕົ້ນເປັນມູນຄ່າສຸດທິ ໃນມື້ໂອນຈາກ ຟຟລ ແລະ ມູນຄ່າຕົ້ນທຶນເດີມ ສຳລັບຊັບສິນທີ່ໄດ້ມາຫຼັງຈາກ ວັນທີ 15 ທັນວາ 2010. ຕົ້ນທຶນເດີມລວມລາຍການຈ່າຍທີ່ກ່ຽວຂ້ອງໂດຍກົງກັບການຊື້ລາຍການຊັບສິນບັດ.

ການຮັບຮູ້

ຕົ້ນທຶນລວມເຖິງລາຍຈ່າຍທີ່ເປັນທາງກົງຂອງການໄດ້ຊັບສິນ ຕົ້ນທຶນຂອງຊັບສິນທີ່ສ້າງຂຶ້ນມາເອງ ລວມເຖິງຕົ້ນທຶນຂອງວັດສະດຸ ແລະ ຄ່າແຮງງານໂດຍກົງ ອື່ນໆຄ່າໃຊ້ຈ່າຍໃດໆ ໃນການນຳຊັບສິນໄປໃນສະພາບພ້ອມເຮັດວຽກ ຫຼື ກັບການໃຊ້ຂອງພວກເຂົາ ຕ້ອງໂອນກຳມະສິດຊັບສິນພາຍໃຕ້ສັນຍາສຳປະທານໃຫ້ແກ່ບໍລິສັດຕາມຂໍ້ຕົກລົງສັນຍາທັງໝົດທີ່ກ່ຽວຂ້ອງກັນ ແລະ ກັນຍອມຮັບ ແລະ ສະເໜີໃຫ້ພະແນກຊັບພະຍາກອນພະລັງງານ.

ອີງຕາມສັນຍາສຳປະທານ, ບໍລິສັດຕ້ອງການໂອນຊັບສິນທັງໝົດທີ່ຮັບໃຊ້ການດຳເນີນງານໂຄງການ ທີ່ໄດ້ກຳນົດໄວ້ໃນສັນຍາສຳປະທານ ໃຫ້ກັບລັດຖະບານລາວ ໃນຕອນທ້າຍຂອງໄລຍະເວລາສຳປະທານ.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນພາຍຫຼັງຈະຖືກຈົດເຂົ້າໃນມູນຄ່າຍັງເຫຼືອໃນບັນຊີຕາມຄວາມເໝາະສົມ, ເມື່ອເປັນໄປໄດ້ວ່າຜົນປະໂຫຍດດ້ານເສດຖະກິດໃນອະນາຄົດທີ່ຕິດພັນຈະໄຫຼເຂົ້າສູ່ບໍລິສັດ ແລະ ສາມາດຕີມູນຄ່າຢ່າງໜ້າເຊື່ອຖືໄດ້. ຈຳນວນທີ່ຍັງເຫຼືອຂອງສ່ວນທີ່ຖືກແທນທີ່ຈະຖືກຕັດຈ່າຍ. ຄ່າສ້ອມແປງ ແລະ ຄ່າບຳລຸງຮັກສາ ທີ່ເກີດຂຶ້ນໃນຮອບເວລາລາຍງານຈະຖືກບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບ ໃນວັນທີ່ເກີດຂຶ້ນ.

ຊັບສິນພາຍໃຕ້ສັນຍາສຳປະທານ ທີ່ສະແດງອອກຕາມມູນຄ່າ ຕົ້ນທຶນ ລົບໃຫ້ຄ່າຫຼ້ຽຫ້ຽນສະສົມ. ຄ່າຫຼ້ຽຫ້ຽນ ຄິດໄລ່ແບບ ວິທີຄິດໄລ່ສະເໝີຕົ້ວ ຕາມອາຍຸການໃຊ້ງານທີ່ຄາດຫວັງ ແຕ່ບໍ່ໃຫ້ເກີນໄລຍະການສຳປະທານ ຕາມສັນຍາທີ່ກ່ຽວຂ້ອງ 30 ປີ.

ອັດຕາປະຈຳປີທີ່ນຳໃຊ້ ແຕ່ລະປະເພດຊັບສິນ ສະແດງອອກ ດັ່ງນີ້:

ອາຄານ	4 - 30 ປີ
ເຂື່ອນໄຟຟ້າ	20 - 30 ປີ
ໂຮງງານ ແລະ ເຄື່ອງຈັກ	10 - 30 ປີ
ພາຫະນະ	6 ປີ
ອຸປະກອນຫ້ອງການ, ເຄື່ອງເຟີນີເຈີ ແລະ ການຕິດຕັ້ງ	9 - 10 ປີ

ບໍລິສັດ ບັນທຶກຄ່າຫຼຸ້ຍຫຼ້ຽນເປັນລາຍຈ່າຍໃນແຕ່ລະງວດ. ເມື່ອຊັບສິນບັດຄົງທີ່ໝົດອາຍຸການນຳໃຊ້, ບໍລິສັດຈະໄດ້ຈົດອອກ ຈາກບັນຊີຊັບສິນບັດຄົງທີ່ ແລະ ຄ່າຫຼຸ້ຍຫ້ຽນສະສົມທີ່ກ່ຽວຂ້ອງ ແລະ ບັນທຶກກຳໄລ ຫຼື ຂາດທຶນ ຈາກການສະສາງອອກ ເຂົ້າ ໃນລາຍງານຜົນໄດ້ຮັບ.

ກຳໄລ ຫຼື ຂາດທຶນ ຈາກການຂາຍ ຈະຖືກກຳນົດ ໂດຍການສົມທຽບຂັ້ນຕອນ ກັບມູນຄ່າຕາມບັນຊີ ແລະ ບັນທຶກຮັບຮູ້ເປັນ ກຳໄລ ຫຼື ຂາດທຶນ.

(ຈ) ຄ່າສູນເສຍມູນຄ່າຂອງຊັບສິນ

ບັນດາຊັບສິນທີ່ຫັກຄ່າຫຼຸ້ຍຫ້ຽນຈະຖືກທົບທວນຄ່າສູນເສຍມູນຄ່າ. ບໍ່ວ່າຈະເປັນເຫດການ ຫຼື ສະຖານະການມີການປ່ຽນແປງ ລາຄາຕາມບັນຊີ ບໍ່ສາມາດເກັບກູ້ຄືນໄດ້. ການສູນເສຍມູນຄ່າຮັບຮູ້ ສຳລັບຈຳນວນເງິນຍັງເຫຼືອ ໃນບັນຊີຂອງຊັບສິນຫຼາຍກວ່າ ມູນຄ່າຈຳນວນເງິນທີ່ສາມາດເກັບກູ້ຄືນໄດ້ ເຊິ່ງສູງກວ່າມູນຄ່າຍຸດຕິທຳຂອງຊັບສິນຫັກຄ່າໃຊ້ຈ່າຍໃນການຂາຍອອກ ແລະ ມູນ ຄ່າການໃຊ້. ເພື່ອຈຸດປະສົງປະເມີນຄ່າສູນເສຍມູນຄ່າ, ຊັບສິນຖືກຈັດເປັນກຸ່ມໃນລະດັບຕ່ຳສຸດ ທີ່ສາມາດຈຳແນກການສ້າງ ກະແສເງິນສົດລວມ. ຊັບສິນອື່ນໆ ທີ່ບໍ່ແມ່ນການເງິນນອກຈາກຄ່ານິຍົມ ຈະຖືກກວດຄືນ ເພື່ອເປັນໄປໄດ້ວ່າ ອາດຈະມີການ ເກັບຄືນຄ່າສູນເສຍມູນຄ່າ ໃນແຕ່ລະຮອບເວລາລາຍງານ.

(ສ) ເງິນກູ້ຢືມ

ເງິນກູ້ຢືມ ຈະຖືກຮັບຮູ້ຕາມມູນຄ່າກູ້ຢືມເບື້ອງຕົ້ນ, ບວກຄ່າໃຊ້ຈ່າຍສຸດທິ ທີ່ເກີດຂຶ້ນຕິດພັນກັບເງິນກູ້ຢືມ, ຖ້າມີ.

ເງິນກູ້ຢືມ ຈັດເປັນໜີ້ສິນໝຸນວຽນ ເວັ້ນເສຍແຕ່ ບໍລິສັດບໍ່ມີເງື່ອນໄຂ ໂດຍການເຍື້ອນຊຳລະໜີ້ສິນ ຢ່າງໜ້ອຍ 12 ເດືອນ ຫຼັງ ຈາກມື້ປິດບັນຊີພາຍໃນປີ.

(ຊ) ຮຸ້ນກູ້

ຮຸ້ນກູ້ຈະຖືກຮັບຮູ້ຕາມມູນຄ່າກູ້ຢືມເບື້ອງຕົ້ນໂດຍການຫັກຕົ້ນທຶນການຈັດຫາ ຫຼັງຈາກນັ້ນຮຸ້ນກູ້ຈະຖືກຮັບຮູ້ຕາມວິທີ ຕັດຕົ້ນທຶນຈ່າຍ ສ່ວນຕ່າງລະຫວ່າງ ຜົນຕອບແທນ (ຫັກດ້ວຍຕົ້ນທຶນການດຳເນີນການ) ເມື່ອທຽບກັບ ມູນຄ່າທີ່ຈ່າຍຄືນ ຈະຖືກຮັບຮູ້ເປັນກຳໄລ ຫຼື ຂາດທຶນ ຕະຫຼອດຊ່ວງເວລາການກູ້ຢືມນັ້ນໂດຍໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ.

ຕົ້ນທຶນໃນການອອກຮຸ້ນກູ້ ເປັນຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການອອກຮຸ້ນກູ້ໂດຍກົງ ເຊິ່ງລວມຄ່າທີ່ປຶກສາທາງການເງິນ, ຄ່າທີ່ປຶກສາທາງກົດໝາຍ ແລະ ຄ່າທຳນຽມຕ່າງໆ. ຄ່າໃຊ້ຈ່າຍເຫຼົ່ານີ້ ແມ່ນໄດ້ບັນທຶກໃນບັນຊີ ຊັບສິນລໍຖ້າຕັດຈຳໜ່າຍ ແລະ ຈະຕັດຈຳໜ່າຍ ແລະ ຮັບຮູ້ໃນບົດລາຍງານຜົນໄດ້ຮັບ ໂດຍອີງຕາມອາຍຸຂອງຮຸ້ນກູ້.

ຮຸ້ນກູ້ທີ່ຖືກຈັດປະເພດເປັນໜີ້ສິນໝຸນວຽນ ບໍລິສັດບໍ່ມີເງື່ອນໄຂພຽງພໍໃນການຊຳລະໜີ້ ຈະສາມາດເລື່ອນການຊຳລະໜີ້ອອກໄປອີກເປັນເວລາຢ່າງໜ້ອຍ 12 ເດືອນ ນັບແຕ່ມື້ອອກບົດລາຍງານ.

(ຍ) ສັນຍາເຊົ່າ

ສັນຍາເຊົ່າບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນ ໃຫ້ແກ່ຜູ້ເຊົ່າ ຈຶ່ງຈຳແນກເປັນສັນຍາເຊົ່າດຳເນີນການ. ການຊຳລະພາຍໃຕ້ສັນຍາເຊົ່າດຳເນີນການ (ລົບທຸກລາຍການທີ່ໄດ້ຮັບຈາກຜູ້ໃຫ້ເຊົ່າ) ໄດ້ຈັດເປັນລາຍຈ່າຍ ໃນໃບລາຍງານຜົນໄດ້ຮັບ ບົນພື້ນຖານວິທີແບບສະເໝີຕົວ ຕະຫຼອດໄລຍະອາຍຸສັນຍາເຊົ່າ.

ເມື່ອສັນຍາເຊົ່າ ມີການຍົກເລີກກ່ອນໄລຍະການເຊົ່າສິ້ນສຸດ, ຈຳນວນເງິນຄ່າເຊົ່າ ແລະ ຄ່າປັບໃໝຕ່າງໆຕ້ອງໄດ້ຈ່າຍໃຫ້ກັບ ຜູ້ໃຫ້ເຊົ່າ ແລະ ຮັບຮູ້ເປັນລາຍຈ່າຍໃນເວລາທີ່ມີການຍົກເລີກ.

(ດ) ຜົນປະໂຫຍດພະນັກງານ

ພັນທະເງິນບຳນານ

ບໍລິສັດ ມີແຜນການເບີກຈ່າຍເງິນບຳນານ. ແຜນການດັ່ງກ່າວ ເຊິ່ງບໍລິສັດ ກຳນົດການປະກອບເອກະສານ ບົນພື້ນຖານ ຈຳນວນເງິນເດືອນພື້ນຖານຄົງທີ່, ຈຳນວນປີເຮັດວຽກ ແລະ ລະດັບການສຶກສາ ເຊິ່ງພະນັກງານມີສິດຮັບ ໃນເວລາອອກ ຫຼື ບຳນານ. ຂໍ້ກຳນົດ ແລະ ເງື່ອນໄຂສຳຄັນ ມີດັ່ງນີ້:

ການລາອອກ

ບໍລິສັດເບີກຈ່າຍໃຫ້ພະນັກງານທີ່ລາອອກຄົບຖ້ວນເທື່ອດຽວ ເມື່ອໄລຍະເວລາການເຮັດວຽກ ຖືກຕ້ອງຕາມນະໂຍບາຍ ຂອງບໍລິສັດ. ໄລຍະການເຮັດວຽກຂຶ້ນຢູ່ກັບພາລະບົດບາດ, ໜ້າທີ່ຮັບຜິດຊອບ ແລະ ຕຳແໜ່ງ. ຈຳນວນເງິນທີ່ຕ້ອງຈ່າຍ ແມ່ນໄດ້ຄິດໄລ່ບົນພື້ນຖານເງິນເດືອນ ເດືອນສຸດທ້າຍ ຄູນ ໄລຍະປີການເຮັດວຽກ ບວກ ເງິນປະຈຳຕຳແໜ່ງ ຫຼື ເງິນອຸດໜູນ ພິເສດ ຕາມນະໂຍບາຍຂອງບໍລິສັດ.

ເງື່ອນໄຂສຳລັບພະນັກງານ:

- ພະນັກງານທີ່ເຮັດວຽກ ໃນລະດັບນັກຊ່ຽວຊານ ຫຼື ຊ່ຽນຊານສະເພາະ ຈະຕ້ອງມີອາຍຸການເຮັດວຽກຫຼາຍກວ່າຫ້າປີ.
- ພະນັກງານຜູ້ໃດທີ່ບໍ່ບັນລຸຕາມເງື່ອນໄຂຂ້າງເທິງນັ້ນ ຈະຕ້ອງມີອາຍຸການເຮັດວຽກຫຼາຍກວ່າສາມປີ.

ຈ່າຍເງິນຄັ້ງດຽວໃຫ້ພະນັກງານທີ່ລາອອກຈາກ ແລະ ຮັບຮູ້ເມື່ອມີການຈ່າຍ.

ອອກບຳນານ

ເມື່ອເຖິງບຳນານ, ບໍລິສັດ ຈະຈ່າຍເງິນໃຫ້ກັບພະນັກງານທີ່ມີອາຍຸ ແລະ ຖືກຕ້ອງກັບນະໂຍບາຍຂອງບໍລິສັດ ດ້ານການບຳນານ ເມື່ອຄົບຖ້ວນເມື່ອດຽວ. ຈຳນວນເງິນທີ່ຕ້ອງຈ່າຍອີງຕາມຈຳນວນທີ່ໄດ້ລະບຸໄວ້ຂ້ອງເທິງນັ້ນ ບວກ ກັບສາມເທົ່າຂອງເງິນເດືອນ ເດືອນສຸດທ້າຍ ຄູນ ໄລຍະປີການເຮັດວຽກ ບວກ ກັບເງິນປະຈຳຕຳແໜ່ງ ຫຼື ເງິນ ອຸດໜູນພິເສດຕາມນະໂຍບາຍບໍລິສັດ.

ເງື່ອນໄຂສຳລັບພະນັກງານ:

- ພະນັກງານ ທັງເພດຍິງ ແລະ ເພດຊາຍ ທີ່ອາຍຸເຖິງ 60 ປີ ແລະ ອາຍຸການເຮັດວຽກກັບບໍລິສັດຫຼາຍກວ່າ 25 ປີ. ເຖິງ ຢ່າງ ໃດກໍ່ຕາມ, ພະນັກງານ ເພດຍິງ ທີ່ອາຍຸເຖິງ 55 ປີ ແລະ ປີການເຮັດວຽກ ບໍ່ຕ່ຳກວ່າ 25 ປີ ຖ້າມີການສະເໜີ ແມ່ນຈະຕ້ອງຜ່ານການພິຈາລະນາ.
- ໄລຍະປີການເຮັດວຽກ ໃນແຕ່ລະຕຳແໜ່ງງານ ທີ່ຄົບຖ້ວນ, ຖືກຕ້ອງ ກັບນະໂຍບາຍຂອງບໍລິສັດ.

ເງິນແຮ ສຳລັບພະນັກງານແມ່ນການຕັ້ງເພື່ອຮັບຮູ້ຜົນປະໂຫຍດຂອງພະນັກງານ ບໍ່ໄດ້ບັນທຶກບັນຊີເປັນແຕ່ລະປີ. ໜີ້ສິນໄດ້ ບັນທຶກ ໄວ້ໃນໃບສະຫຼຸບຊັບສິມບັດ ແລະ ລາຍຈ່າຍທີ່ກ່ຽວຂ້ອງ ເຂົ້າໃນໃບລາຍງານຜົນໄດ້ຮັບ ອີງຕາມຈຳນວນຕົວຈິງ ໃນເວລາ ພະນັກງານລາອອກ ຫຼື ບຳນານ.

ພັນທະອື່ນໆ ດ້ານຜົນປະໂຫຍດຂອງພະນັກງານ

ບໍລິສັດຍັງສະໜອງຜົນປະໂຫຍດອື່ນໆອີກ ໃຫ້ກັບພະນັກງານ ເຊັ່ນວ່າ: ກອງທຶນປະກັນສັງຄົມຕາມກົດໝາຍ. ບໍລິສັດ ແລະ ພະນັກງານ ຍັງໄດ້ປະກອບສ່ວນເງິນອຸດໜູນ 5% ແລະ 4,5% ຂອງເງິນເດືອນໃຫ້ກອງທຶນ ອີງການປະກັນສັງຄົມ ຕາມລຳດັບ. ເງິນເດືອນພື້ນຖານໃນແຕ່ລະເດືອນ ເປັນພື້ນຖານການຄິດໄລ່, ແຕ່ບໍ່ເກີນ 1,5 ລ້ານກີບ. ບໍລິສັດ ບັນທຶກໜີ້ສິນ ແລະ ລາຍຈ່າຍ ໃນເວລາລາຍການດັ່ງກ່າວເກີດຂຶ້ນ.

(ຕ) ເງິນແຮ

ເງິນແຮ ຖືກບັນທຶກບັນຊີ ໃນເວລາມີຂໍ້ພັນທະໃນປັດຈຸບັນຕາມກົດໝາຍ ເຊິ່ງເກີດຈາກເຫດການຜ່ານມາ, ເປັນໄປໄດ້ວ່າແໜ່ງ ຊັບພະຍາກອນຈະໄຫຼອອກ ແລະ ຈຳນວນເງິນສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້, ຍົກເວັ້ນເງິນແຮ ເພື່ອຜົນປະໂຫຍດ ຂອງ ພະນັກງານ ຕາມທີ່ໄດ້ອະທິບາຍ ໃນໝາຍເຫດ 3 (ດ).

(ຖ) ເງິນລົງທຶນໄລຍະສັ້ນ

ເງິນລົງທຶນໄລຍະສັ້ນເປັນເງິນລົງທຶນທີ່ຝາກຈົນຄົບກຳນົດ ໂດຍບັນທຶກບັນຊີຕາມຈຳນວນທີ່ໄດ້ຈ່າຍຈິງ ດອກເບ້ຍຈະຖືກຮັບຮູ້ຕາມໄລຍະເວລາຂອງການຝາກເງິນ.

(ນ) ພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງໂດຍກົງ, ຫຼື ທາງອ້ອມ ໂດຍຜ່ານ ໜຶ່ງ ຫຼື ຫຼາຍຕົວກາງ, ຄວບຄຸມ, ຫຼື ຖືກຄວບຄຸມໂດຍພາຍໃຕ້ການຄວບຄຸມດຽວກັນກັບບໍລິສັດ. ລວມທັງບໍລິສັດທີ່ຖືຮຸ້ນ, ບໍລິສັດລູກ ແລະ ອື່ນໆທີ່ກ່ຽວຂ້ອງກັບບໍລິສັດ. ວິສາຫະກິດຂາຮຸ້ນ ແລະ ບຸກຄົນທີ່ເປັນເຈົ້າຂອງ, ໂດຍກົງ ຫຼື ທາງອ້ອມ, ມີຄວາມສົນໃຈໃນການລົງຄະແນນສຽງຂອງບໍລິສັດ ທີ່ເຮັດໃຫ້ເຂົ້າເຈົ້າມີອິດທິພົນສຳຄັນໃນວິສາຫະກິດ, ຜູ້ບໍລິຫານທີ່ສຳຄັນ, ບຸກຄົນ, ລວມທັງກຳມະການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກທີ່ໃກ້ຊິດຂອງຄອບຄົວ ຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດທີ່ກ່ຽວຂ້ອງ ກັບບຸກຄົນເຫຼົ່ານີ້ຍັງປະກອບກິດຈະການ ທີ່ກ່ຽວຂ້ອງ.

ໃນການພິຈາລະນາຄວາມສຳພັນລະຫວ່າງບຸກຄົນ ຫຼື ກິດຈະການທີ່ກ່ຽວຂ້ອງກັນ ເຊິ່ງອາດມີຂຶ້ນໄດ້ ຕ້ອງຄຳນຶງ ເຖິງລາຍ ລະອຽດຂອງຄວາມສຳພັນຫຼາຍກວ່າຮູບແບບຄວາມສຳພັນທາງກົດໝາຍ.

(ບ) ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດປະກອບດ້ວຍເງິນສົດໃນມື, ເງິນຝາກໄດ້ຈັດຂຶ້ນຢູ່ກັບການຮຽກເກັບ ກັບທະນາຄານ ແຕ່ບໍ່ລວມເຖິງເງິນຝາກກັບທະນາຄານທີ່ເຖິງກຳນົດ ແລະ ອື່ນໆ ໃນໄລຍະສັ້ນການລົງທຶນສະພາບຄ່ອງສູງ ມີອາຍຸສາມເດືອນ ຫຼື ໜ້ອຍຈາກວັນທີຂອງການຊື້ກິດຈະການ.

(ປ) ລາຍຮັບ

ຂາຍ

ບັນຊີບໍລິສັດສຳລັບການຂາຍໃນເວລາທີ່:

- ສັນຍາຊື້-ຂາຍໄຟຟ້າລາວ ("PPA") ຫຼື ສັນຍາທີ່ຄ້າຍຄືກັນຢູ່
- ການສົ່ງກະແສໄຟຟ້າ
- ລາຄາປະລິມານໄດ້ຮັບການສ້າງຕັ້ງຂຶ້ນຫຼືສາມາດໄດ້ຮັບການກຳນົດ;
- ລາຍຮັບທີ່ກ່ຽວຂ້ອງແມ່ນຈະໄດ້ຮັບການຟື້ນຟູ.
- ສິ່ງໃຊ້ເວລາສະຖານທີ່ໃນເວລາທີ່ຄວາມສ່ຽງແລະຜົນປະໂຫຍດທີ່ກ່ຽວຂ້ອງກັບການເປັນເຈົ້າຂອງໄດ້ຖືກຍົກຍ້າຍໃຫ້ກັບຜູ້ຊື້.

ໂດຍທົ່ວໄປ, ລາຍຮັບຈາກການຂາຍກະແສໄຟຟ້າ ຄິດໄລ່ຈາກໜ່ວຍໄຟ ໃນຈຸດນຳສົ່ງ ຄູນ ອັດຕາທີ່ຕົກລົງກັນ ແລະ ກຳນົດໃນສັນຍາຊື້ກະແສໄຟຟ້າ.

ບໍລິການອື່ນໆ

ການບໍລິການອື່ນໆ ໂດຍສ່ວນໃຫຍ່ແລ້ວ ປະກອບມີ ຄ່າຕິດຕັ້ງ ເຊິ່ງຮັບຮູ້ການລົງບັນຊີ ເມື່ອການບໍລິການສຳເລັດ.

ລາຍໄດ້ເງິນປັນຜົນ

ລາຍໄດ້ຈາກເງິນປັນຜົນ ໄດ້ຖືກຮັບຮູ້ການລົງບັນຊີ ເມື່ອເກີດສິດທີ່ໄດ້ຮັບ ເຊິ່ງໂດຍປົກກະຕິແລ້ວ ຈະມີການຮັບຮູ້ ເມື່ອມີຖືຮຸ້ນ ມີສິດທີ່ຈະໄດ້ຮັບການຊຳລະ.

(ທ) ການແລກປ່ຽນສະກຸນເງິນ ແລະ ອັດຕາດອກເບ້ຍ SWAP

ການແລກປ່ຽນສະກຸນເງິນ ແມ່ນບັນທຶກໜີ້ຕ້ອງຮັບຈາກສັນຍາແລກປ່ຽນສະກຸນເງິນ ນຳໃຊ້ອັດຕາຈຸດ ແລະ ສັນຍາແລກປ່ຽນເຈົ້າໜີ້ ຕາມອັດຕາທີ່ໄດ້ຕົກລົງກັນໃນຂໍ້ຕົກລົງແລກປ່ຽນເງິນຕາ. ຄວາມແຕກຕ່າງກັນ ຈະໄດ້ຮັບການບຳສະເໜີ ເປັນມູນຄ່າເພີ່ມ ຫຼື ສ່ວນຫຼຸດໃນໃບສະຫຼຸບຊັບສົມບັດ. ສ່ວນເພີ່ມ ຫຼື ສ່ວນຫຼຸດ ດັ່ງກ່າວຈະຖືກຕັດຈ່າຍ ໃນໃບລາຍງານຜົນໄດ້ຮັບ ໂດຍວິທີສະໝ່ຳສະເໝີຕາມອາຍຸສັນຍາຂອງສັນຍາຮຸ້ນກູ້.

(ຟ) ພາກສ່ວນການດຳເນີນງານ

ພາກສ່ວນການດຳເນີນງານແມ່ນມີການລາຍງານ ໃນລັກສະນະທີ່ສອດຄ່ອງກັບການລາຍງານ ພາຍໃນທີ່ສະໜອງໃຫ້ແກ່ຫົວໜ້າຝ່າຍດຳເນີນງານ ຕັດສິນໃຈ. ຫົວໜ້າຝ່າຍດຳເນີນງານຕັດສິນໃຈ ຜູ້ທີ່ຮັບຜິດຊອບໃນການຈັດສັນຊັບພະຍາກອນ ແລະ ການປະເມີນຜົນໃນສ່ວນການດຳເນີນງານ, ທີ່ໄດ້ຮັບການລະບຸວ່າເປັນ ຜູ້ອຳນວຍການໃຫຍ່ ("CEO") ແລະ ຜູ້ອຳນວຍການໃຫຍ່ຝ່າຍການເງິນ ("CFO") ທີ່ຕັດສິນໃຈທາງຍຸດທະສາດ.

(ຠ) ຊັບສົມບັດຄົງທີ່ບໍ່ມີຕົວຕົນ

ຕົ້ນທຶນຂອງຊອຟແວຄອມພິວເຕີທີ່ກ່ຽວຂ້ອງກັບການບຳລຸງຮັກສາບັນດາໂປຼແກຼມ ໄດ້ຖືກຮັບຮູ້ເປັນຄ່າໃຊ້ຈ່າຍເມື່ອເກີດຂຶ້ນ. ຄ່າໃຊ້ຈ່າຍໃນການພັດທະນາທີ່ມີຄວາມກ່ຽວຂ້ອງໂດຍກົງກັບການອອກແບບ ແລະ ການທົດສອບລະບຸ

ຄ່າໃຊ້ຈ່າຍໂດຍກົງທີ່ຈະເປັນສ່ວນໜຶ່ງຂອງຊອບແວທີ່ປະກອບມີຄ່າໃຊ້ຈ່າຍຂອງ ຊອຟແວ ພັດທະນາພະນັກງານການ ແລະ ສ່ວນທີ່ ເໝາະສົມຂອງຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ. ຄ່າໃຊ້ຈ່າຍການພັດທະນາອື່ນໆ ທີ່ບໍ່ເຂົ້າເງື່ອນໄຂເງື່ານີ້ ແມ່ນໄດ້ຮັບຮູ້ ເປັນຄ່າໃຊ້ຈ່າຍເມື່ອເກີດຂຶ້ນ. ຕົ້ນທຶນໃນການພັດທະນາ ໃນເມື່ອກ່ອນບໍ່ໄດ້ຮັບຮູ້ເປັນລາຍຈ່າຍ ແລະ ບໍ່ໄດ້ບັນທຶກຮັບຮູ້ເປັນຊັບສິນ ໃນໄລຍະເວລາຕໍ່ໄປ.

ຄ່າໃຊ້ຈ່າຍໃນການຝັດທະນາຊອຟແວຄອມພິວເຕີ ໄດ້ຖືກຮັບຮູ້ເປັນຊັບສິນຖືກຕັດຈ່າຍຕາມອາຍຸການໃຊ້ງານ ທີ່ເປັນປະໂຫຍດ ການຄາດຄະເນຂອງເຂົາເຈົ້າ

(ii) ອາກອນກຳໄລ

ບໍລິສັດ ໄດ້ບັນທຶກ ອາກອນກຳໄລ ພາຍໃນກົດເກນຄ້າງຈ່າຍ. ບໍລິສັດບໍ່ໄດ້ບັນທຶກ ອາກອນກຳໄລຕ້ອງຈ່າຍ ຫຼື ຕ້ອງຮັບ ໃນ ອະນາຄົດເຊິ່ງເກີດຈາກສ່ວນຜິດຊົ່ວຄາວ. ລາຍຈ່າຍອາກອນລາຍໄດ້ແມ່ນຮັບຮູ້ຈາກ ຜົນການປະຕິບັດການສຳລັບປີ ຫຼັງ ຈາກປັບຄ່າໃຊ້ຈ່າຍທີ່ຫັກເປັນລາຍຈ່າຍບໍ່ໄດ້ ແລະ ລາຍການອື່ນໆ ທີ່ກ່ຽວຂ້ອງ ກັບກົດໝາຍອາກອນ ແລະ ອັດຕາອາກອນ. ພາຍໃຕ້ກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ກົດໝາຍວ່າດ້ວຍການບັນຊີ ແລະ ສິດທິພິເສດທີ່ກ່ຽວກັບບໍລິສັດ ຈົດທະບຽນ ໃນຕະຫຼາດຫຼັກຊັບ, ລາຍຈ່າຍອາກອນ ສຳລັບປີຖືກກຳນົດບົນພື້ນຖານຂອງກຳໄລຂອງບໍລິສັດມາຄິດໄລ່.

ໃນ ສປປ ລາວ ການແຈ້ງອາກອນກຳໄລຕ້ອງໄດ້ຮັບການກວດກາຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງຢ່າງສະໝ່ຳສະເໝີ ນອກ ຈາກນີ້, ບັນຫາເລື່ອງອາກອນເກີດຈາກການທົບທວນອາດຕ້ອງມີ ຄຳຕັດສິນ ແລະ ການຕີຄວາມ ໂດຍພາກສ່ວນຕ່າງໆ ທີ່ ກ່ຽວຂ້ອງໃນຫຼາຍດ້ານ, ການກວດສອບດັ່ງກ່າວ ອາດເປັນຜົນເຮັດໃຫ້ເກີດ ການຊຳລະອາກອນເພີ່ມເຕີ່ມ ຫຼື ຮັບຄືນ ໃນຄວາມ ຈຳເປັນ. ຊຶ່ງຈະສົ່ງຜົນໃຫ້ການຈ່າຍເງິນ ຫຼື ການຄືນອາກອນລາຍໄດ້ ຮັບຮູ້ເປັນຄ່າໃຊ້ຈ່າຍອາກອນກຳໄລ ໃນປີທີ່ມີການ ກວດກາໄດ້ສຳເລັດ.

4 ພາກສ່ວນຂໍ້ມູນຂ່າວສານ

ບໍລິສັດມີສອງພາກສ່ວນລາຍງານ ອະທິບາຍຂ້າງລຸ່ມນີ້, ເຊິ່ງພະແນກຍຸດທະສາດຂອງບໍລິສັດ. ພະແນກຍຸດທະສາດ ນຳສະເໜີ ປະເພດຂອງທຸລະກິດທີ່ແຕກຕ່າງ. ສັງລວມຄຳອະທິບາຍການດຳເນີນງານໃນແຕ່ລະພາກສ່ວນລາຍງານຂອງບໍລິສັດ ດັ່ງຕໍ່ໄປນີ້.

- ສ່ວນງານ 1 ການຜະລິດໄຟຟ້າ
- ສ່ວນງານ 2 ທຸລະກິດອື່ນໆ

ຂໍ້ມູນກ່ຽວກັບຜົນຂອງການສ່ວນລາຍງານແຕ່ລະອັນແມ່ນຖືກລວມຢູ່ຂ້າງລຸ່ມນີ້ ປະສິດທິພາບການປະຕິບັດງານຈະວັດຈາກກຳ ໄລ, ລວມຢູ່ໃນບົດລາຍງານການຈັດການພາຍໃນທີ່ໄດ້ຮັບການທົບທວນໂດຍຜູ້ອຳນວຍການໃຫຍ່ ("CEO") ແລະ ຮອງຜູ້ອຳ ນວຍການໃຫຍ່ - ສາຍງານການເງິນ ("CFO") ຂອງບໍລິສັດ. ພາກສ່ວນກຳໄລ ແມ່ນໄດ້ຖືກນຳໃຊ້ໃນການວັດແທກປະສິດທິ ພາບການປະຕິບັດງານ ຜູ້ບໍລິຫານເຊື່ອວ່າຂໍ້ມູນດັ່ງກ່າວ ແມ່ນກ່ຽວຂ້ອງຫຼາຍທີ່ສຸດໃນການປະເມີນຜົນງານຂອງບາງພາກສ່ວນທີ່ ກ່ຽວຂ້ອງກັບໜ່ວຍງານອື່ນໆ ທີ່ເຮັດວຽກໃນອຸດສາຫະກຳເຫຼົ່ານີ້.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໝາຍເຫດປະກອບເອກະສານລາຍງານການເງິນ

ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2016

ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2016

	ສ່ວນງານ 1	ສ່ວນງານ 2	ການລົບລ້າງ	ລວມ
		(ລ້ານກີບ)		
ຂາຍ	1.241.181	-	-	1.241.181
ຄ່າໃຊ້ຈ່າຍໃນການຂາຍ	(486.391)	-	-	(486.391)
ສ່ວນຂອງງານ	754.790	-	-	754.790
ລາຍຮັບອື່ນໆ	11.065	-	-	11.065
ການດຳເນີນງານ ແລະ ການບໍລິຫານອື່ນໆ	(120.729)	-	-	(120.729)
ຂາດທຶນຈາກອັດຕາແລກປ່ຽນ	(64.800)	-	-	(64.800)
ສ່ວນແບ່ງກຳໄລຈາກເງິນລົງທຶນ ໃນວິສາຫະກິດຂາດຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	-	178.051	-	178.051
ກຳໄລຈາກການດຳເນີນງານ	580.326	178.051	-	758.377
ດອກເບ້ຍຈ່າຍ	(154.918)	-	-	(154.918)
ກຳໄລສຸດທິກ່ອນເສຍອາກອນ	425.408	178.051	-	603.459
ລາຍຈ່າຍອາກອນກຳໄລ	(49.110)	-	-	(49.110)
ກຳໄລສຸດທິໃນປີ	**376.298**	**178.051**	-	**554.349**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໝາຍເຫດປະກອບເອກະສານລາຍງານການເງິນ

ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2016

ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2015

	ສ່ວນງານ 1	ສ່ວນງານ 2	ການລົບລ້າງ	ລວມ
		(ລ້ານກີບ)		
ການຂາຍ	847.759	-	-	847.759
ຄ່າໃຊ້ຈ່າຍໃນການຂາຍ	(276.443)	-	-	(276.443)
ສ່ວນຂອງງານ	571.316	-	-	571.316
ລາຍຮັບອື່ນໆ	16.198	-	-	16.198
ການດຳເນີນງານ ແລະ ການບໍລິຫານອື່ນໆ	(121.027)	-	-	(121.027)
ຂາດທຶນຈາກອັດຕາແລກປ່ຽນ	(9.976)	-	-	(9.976)
ສ່ວນແບ່ງກຳໄລຈາກເງິນລົງທຶນ ໃນວິສາຫະກິດຂາດຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ	-	286.219	-	286.219
ກຳໄລຈາກການດຳເນີນງານ	456.511	286.219	-	742.730
ລາຍຈ່າຍດອກເບ້ຍ	(61.937)	-	-	(61.937)
ກຳໄລສຸດທິກ່ອນເສຍອາກອນ	394.574	286.219	-	680.793
ລາຍຈ່າຍອາກອນກຳໄລ	(39.954)	-	-	(39.954)
ກຳໄລສຸດທິໃນປີ	**354.620**	**286.219**	-	**640.839**

5 ເງິນລົງທຶນໃນບໍລິສັດລູກ

	2016	2015
	(ລ້ານກີບ)	
ຍອດຍັງເຫຼືອ ວັນທີ 1 ມັງກອນ	-	-
ເພີ່ມ	81.260	-
ຍອດຍັງເຫຼືອໃນວັນທີ 31 ທັນວາ	**81.260**	-

ໃນລະຫວ່າງປີ 2016, ບໍລິສັດໄດ້ລົງທຶນໃນບໍລິສັດນ້ຳບີ ພາວເວີ ຈຳກັດ ("ບໍລິສັດລູກ"), ການຈັດຕັ້ງໃນ ສປປລາວ ທີ່ມີການພິຈາລະນາເງິນສົດ 81.260 ຕື້ກີບ. ທຸລະກິດບໍລິສັດລູກແມ່ນຜະລິດກະແສໄຟຟ້າ ແລະ ແຜ່ກະຈາຍ.

ໃນລະຫວ່າງປີ 2016, ບໍລິສັດໄດ້ລົງທຶນໃນບໍລິສັດ ອີດີແອລ-ເຈັນ ໂຊລາ ພາວເວີ ຈຳກັດ ("ບໍລິສັດລູກ"), ການຈັດຕັ້ງໃນສປປ ລາວ. ເປັນຈຳນວນເງິນ 35.955 ລ້ານກີບ ທຶນຈົດທະບຽນຍັງບໍ່ທັນຖອກ ແລະ ນຳສະເໜີໃນຊັບສິນບໍ່ໝຸນວຽນອື່ນໆ.

ໃນວັນທີ 31 ທັນວາ 2016, ບໍລິສັດບໍ່ໄດ້ນຳສະເໜີເອກະສານລາຍງານການເງິນແບບລວມ ຕັ້ງແຕ່ມີ ບໍລິສັດລູກ ເຊິ່ງເປັນ ທຸລະກຳທີ່ບໍ່ມີເນື້ອໃນທີ່ສຳຄັນ.

ບໍລິສັດລູກຂອງບໍລິສັດບໍ່ໄດ້ຮັບການຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ດັ່ງນັ້ນ ຈຶ່ງບໍ່ມີການເຜີຍແຜ່ລາຄາອ້າງອີງ.

6 ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ

	2016	2015
	(ລ້ານກີບ)	
ວິສາຫະກິດຂາຮຸ້ນ		
ວັນທີ 1 ມັງກອນ	710.598	610.357
ສ່ວນແບ່ງກຳໄລ ສຸດທິ ຂອງວິສາຫະກິດ ຂາຮຸ້ນ	53.249	48.763
ລາຍຮັບເງິນປັນຜົນ	(156.963)	(27.760)
ເພີ່ມເຂົ້າ	-	80.022
ຄວາມແຕກຕ່າງຂອງການແປງສະກຸນເງິນ	(156)	(784)
ວັນທີ 31 ທັນວາ	**606.728**	**710.598**
ບໍລິສັດຮຸ້ນສ່ວນ		
ວັນທີ 1 ມັງກອນ	1.558.324	1.498.609
ສ່ວນແບ່ງກຳໄລ ສຸດທິ ຂອງບໍລິສັດ ຮຸ້ນສ່ວນ	124.802	237.456
ລາຍຮັບເງິນປັນຜົນ	-	(161.606)
ເພີ່ມເຂົ້າ	6.379	-
ການຫຼຸດທຶນ	-	(16.267)
ຄວາມແຕກຕ່າງຂອງການແປງສະກຸນເງິນ	933	132
ວັນທີ 31 ທັນວາ	**1.690.438**	**1.558.324**

	2016	2015
	(ລ້ານກີບ)	
ລວມ		
ວັນທີ 1 ມັງກອນ	2.268.922	2.108.966
ສ່ວນແບ່ງຂອງກຳໄລ ສຸດທິ ຂອງ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	178.051	286.219
ລາຍຮັບເງິນປັນຜົນ	(156.963)	(189.366)
ເພີ່ມເຕີມ	6.379	80.022
ຫຼຸດທຶນ	-	(16.276)
ຄວາມແຕກຕ່າງຂອງການແປງສະກຸນເງິນ	777	(643)
ວັນທີ 31 ທັນວາ	**2.297.166**	**2.268.922**

ໃນລະຫວ່າງປີສິ້ນສຸດ ວັນທີ 31 ທັນວາ 2016 ແລະ 2015, ມີການເພີ່ມຂຶ້ນ ແລະ ການຫຼຸດລົງຂອງເງິນລົງທຶນ ດັ່ງນີ້:

ໃນລະຫວ່າງປີ 2016, ບໍລິສັດເຂື່ອນໄຟຟ້າຫ້ວຍລຳພັນຈຳກັດໄດ້ເພີ່ມທຶນ ແລະ ບໍລິສັດຈ່າຍເງິນລົງທຶນເພີ່ມເຕີມເປັນຈຳນວນ 0,8 ລ້ານໂດລາ ທຽບເທົ່າກັບ 6.379 ລ້ານກີບ ເຊິ່ງບໍລິສັດມີສ່ວນໄດ້ສ່ວນເສຍໃນການຮ່ວມກິດຈະການຕັ້ງກ່າວ.

ໃນວັນທີ 10 ກຸມພາ 2015, ທັງສອງຝ່າຍຕົກລົງລາຄາຂາຍຮຸ້ນຢູ່ທີ່ 9.940.000 ໂດລາ ຫຼື ທຽບເທົ່າເງິນກີບ 80.022 ລ້ານກີບ ສຳລັບການໂອນຜົນປະໂຫຍດຂອງຮຸ້ນຂອງ ຝຝລ ໃນນ້ຳງຽບ 5 ("NNG5") ໃຫ້ກັບບໍລິສັດ. ບໍລິສັດໄດ້ຈ່າຍເພີ່ມເຕີມສຳລັບ ເງິນລົງທຶນທີ່ 4.690.000 ໂດລາສະຫະລັດ ຫຼື ທຽບເທົ່າເງິນກີບຈຳນວນ 37.924 ລ້ານກີບ. ຂັ້ນຕອນການໂອນສຳເລັດໃນວັນທີ 11 ພຶດສະພາ 2015 (ໝາຍເຫດ 7).

ໃນວັນທີ 10 ທັນວາ 2015, ບໍລິສັດເຂື່ອນໄຟຟ້າ ຫ້ວຍເຫາະ ຈຳກັດ ("HHPC"), ເປັນໜຶ່ງໃນບໍລິສັດຮຸ້ນສ່ວນ, ການຫຼຸດລົງຂອງມູນຄ່າຮຸ້ນ ຈາກ 100 ໂດລາສະຫະລັດ ຕໍ່ຮຸ້ນ ມາເປັນ 80 ໂດລາສະຫະລັດ ຕໍ່ຮຸ້ນ, ໃນຂະນະທີ່ໂຄງປະກອບການຖືຮຸ້ນຈະຍັງບໍ່ປ່ຽນ. ໃນວັນທີ 31 ທັນວາ 2016, HHPC ໄດ້ຈ່າຍເງິນໄປແລ້ວບາງສ່ວນໃຫ້ກັບບໍລິສັດ ແລະ ມູນຄ່າທີ່ຍັງເຫຼືອບໍ່ທັນຈ່າຍແມ່ນ 400.000 ໂດລາສະຫະລັດ ຫຼື ທຽບເທົ່າກັບ 3.232 ລ້ານກີບ ແລະ ລາຍງານໃນຊັບສິນບໍ່ໝຸນວຽນອື່ນໆ.

ໃນລະຫວ່າງປີ ສິ້ນສຸດ ວັນທີ 31 ທັນວາ 2016 ແລະ 2015 ບໍ່ໄດ້ມີການຂາຍເງິນລົງທຶນໃນ ວິສາຫະກິດ ຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ.

ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ ໃນວັນທີ 31 ທັນວາ 2016 ແລະ ວັນທີ 31 ທັນວາ 2015 ແລະ ເງິນປັນຜົນສຳລັບປີສິ້ນສຸດລົງວັນທີ 31 ທັນວາ 2016 ແລະ 2015 ໄດ້ ດັ່ງຕໍ່ໄປນີ້:

	ອັດຕາສ່ວນເງິນລົງທຶນ			ມູນຄ່າ		ຄ່າເສື່ອມມູນຄ່າ		Cost - net		Equity		Dividend income	
	31 ທັນວາ 2016	31 ທັນວາ 2015	ປະເພດ ທຸລະກິດ	31 ທັນວາ 2016	31 ທັນວາ 2015	31 ທັນວາ 2016	31 ທັນວາ 2015	31 ທັນວາ 2016	31 ທັນວາ 2015	31 ທັນວາ 2016	31 ທັນວາ 2015	31 ທັນວາ 2016	31 ທັນວາ 2015
	(%)							*(ລ້ານກີບ)*					
ວິສາຫະກິດຂາຮຸ້ນ													
ບໍລິສັດ ໄຟຟ້າ ນ້ຳງື່ມ 2 ຈຳກັດ	25	25	ຜະລິດໄຟຟ້າ	454.742	454.742	-	-	454.742	454.742	451.954	563.000	149.413	19.940
ບໍລິສັດ ໄຟຟ້າ ນ້ຳລີກ 1-2 ຈຳກັດ (ນ້ຳລີກ 1-2)	10	10	ຜະລິດໄຟຟ້າ	32.240	32.240	-	-	32.240	32.240	65.281	63.210	7.550	7.820
ບໍລິສັດ ໄຟຟ້າ ນ້ຳງື່ມ 5 ຈຳກັດ ("NNG5")	15	15	ຜະລິດໄຟຟ້າ	80.022	80.022	-	-	80.022	80.022	89.493	84.388	-	-
ລວມ				567.004	567.004	-	-	567.004	567.004	606.728	710.598	156.963	27.760
ບໍລິສັດຮຸ້ນສ່ວນ													
ບໍລິສັດ ໄຟຟ້າ ເທີນຫິນບຸນ ຈຳກັດ ("THPC")	60	60	ຜະລິດໄຟຟ້າ	1.120.696	1.120.696	-	-	1.120.696	1.120.696	1.666.995	1.548.740	-	146.484
ບໍລິສັດ ໄຟຟ້າ ຫ້ວຍເຫາະ ຈຳກັດ ("HHPC")	20	20	ຜະລິດໄຟຟ້າ	1.171	1.171	-	-	1.171	1.171	15.820	6.743	-	15.122
ບໍລິສັດ ໄຟຟ້າ ຫ້ວຍລຳພັນ ຈຳກັດ ("LHPC")	60	60	ຜະລິດໄຟຟ້າ	9.760	3.381	-	-	9.760	3.381	7.623	2.841	-	-
ລວມ				1.131.627	1.125.248	-	-	1.131.627	1.125.248	1.690.438	1.558.324	-	161.606
ລວມ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ				1.698.631	1.692.252	-	-	1.698.631	1.692.252	2.297.166	2.268.922	156.963	189.366

ໃນສ່ວນຂອງບໍລິສັດ ເທີນຫິນບຸນ ພາວເວີ ຈຳກັດ (THPC) ແລະ ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ (LHPC), ເຖິງ ແມ່ນວ່າບໍລິສັດມີຮຸ້ນສ່ວນຢູ່ໃນບໍລິສັດເຫຼົ່ານັ້ນຫຼາຍກວ່າ 50% ກໍ່ຕາມ, ແຕ່ອີງຕາມເງື່ອນໄຂຂອງຂໍ້ຕົກລົງວິສາຫະກິດຮຸ້ນ ສ່ວນ, ແມ່ນໄດ້ລົງມະຕິຄະແນນສຽງ ແລະ ທີ່ນັ່ງໃນສະພາຜູ້ບໍລິຫານ ຊຶ່ງສາມາດຕັດສິນໃຈໃນເລື່ອງການເງິນ ແລະ ການດຳເນີນງານ (ແຕ່ບໍ່ຫຼາຍເທົ່າບຸກຄົນທີ່ມີອຳນາດຄວບຄຸມທັງໝົດ). ຜູ້ບໍລິຫານຈຶ່ງສາມາດສະຫຼຸບໄດ້ວ່າ ເງິນລົງທຶນເຫຼົ່ານີ້ເປັນເງິນລົງທຶນໃນບໍລິສັດຮຸ້ນສ່ວນ.

ໃນສ່ວນຂອງ ບໍລິສັດ ໄຟຟ້າ ນ້ຳລຶກ 1–2 ຈຳກັດ, ບໍລິສັດໄດ້ຮັບສິດໃນການອອກສຽງ ແລະ ທີ່ນັ່ງໃນສະພາຜູ້ບໍລິຫານ ຊຶ່ງສາມາດຕັດສິນໃຈໃນເລື່ອງການເງິນ ແລະ ການດຳເນີນງານ (ແຕ່ບໍ່ຫຼາຍເທົ່າບຸກຄົນທີ່ມີອຳນາດຄວບຄຸມທັງໝົດ). ຕາມທີ່ໄດ້ລະບຸໄວ້ໃນສັນຍາຂອງຜູ້ຖືຮຸ້ນ. ຜູ້ບໍລິຫານຈຶ່ງສາມາດສະຫຼຸບໄດ້ວ່າການລົງທຶນໃນບໍລິສັດຂາຮຸ້ນ.

ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ຂອງບໍລິສັດບໍ່ໄດ້ຮັບການຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ດັ່ງນັ້ນ ຈຶ່ງບໍ່ມີການເຜີຍແຜ່ລາຄາອ້າງອີງ.

7 ເງິນລົງທຶນຈ່າຍລ່ວງໜ້າ

	ໝາຍເຫດ	2016	2015
		(ລ້ານກີບ)	
ວັນທີ 1 ມັງກອນ		3.690.647	779.005
ເພີ່ມ		118.254	2.943.583
ລາຍຈ່າຍການເງິນ	*19*	11.074	48.081
ໂອນໄປລົງທຶນໃນບໍລິສັດຂາຮຸ້ນ	*6*	-	(80.022)
ໂອນຊັບສິນພາຍໃຕ້ສັນຍາສຳປະທານ	*8*	(686.379)	-
ວັນທີ 31 ທັນວາ		**3.133.596**	**3.690.647**

ສິ່ງເຫຼົ່ານີ້ແມ່ນການພົວພັນເຖິງລາຍຈ່າຍລ່ວງໜ້າທີ່ຈ່າຍໃຫ້ກັບ ຟຟລ ສຳລັບຄ່າໃຊ້ຈ່າຍທີ່ເກີດຈາກຊັບສິນໂຄງການພາຍໃຕ້ການພົວພັນ MOU. ບໍລິສັດມີເງິນລົງທຶນຈ່າຍລ່ວງໜ້າ ພາຍໃຕ້ MOU ໃນວັນທີ 31 ທັນວາ ສັງລວມດັ່ງລຸ່ມນີ້:

	ປະເພດ	2016	2015
		(ລ້ານກີບ)	
ນ້ຳຄານ 2	ຊັບສິນ	-	373.203
ຫ້ວຍລຳພັນໃຫຍ່	ຊັບສິນ	-	291.517
ນ້ຳສະນາ	ຊັບສິນ	-	19.830
ນ້ຳຄານ 3	ຊັບສິນ	301.833	223.251
ນ້ຳຈຽນ 1	ຊັບສິນ	678.504	671.647
ນ້ຳຫີນບຸນ	ຊັບສິນ	205.955	204.583
ເຊເສັດ 3	ຊັບສິນ	149.418	148.504
ນ້ຳງື່ມ 1 Ext DFE	ຊັບສິນ	488.494	467.921
ນ້ຳງື່ມ 1 Ext Unit 6	ຊັບສິນ	242.231	226.230
ນ້ຳອຸ 2,5,6	IPP	364.640	364.640
ນ້ຳງຽບ 2	IPP	111.470	111.470
ນ້ຳແບ່ງ	IPP	42.138	42.138
ເຊຂະໝານ 3	IPP	232.163	232.163
ນ້ຳເລີກ 1	IPP	34.680	33.309
ນ້ຳມັ່ງ 1	IPP	37.596	35.767
ນ້ຳທາ 1	IPP	244.474	244.474
ລວມ		**3.133.596**	**3.690.647**

ບົດບັນທຶກຄວາມເຂົ້າໃຈ (MOU) ກ່ຽວກັບການໂອນຊັບສິນຂອງໂຄງການ ຫ້ວຍລຳພັນໃຫ່ຍ ແລະ ນ້ຳຄານ 2 (ໂຄງການ)

ໃນວັນທີ 8 ກໍລະກົດ 2011, ບໍລິສັດ ແລະ ຝຝລ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການມອບໂອນຊັບສິນຂອງໂຄງການຫ້ວຍລຳພັນໃຫ່ຍ ແລະ ນ້ຳຄານ 2. ອີງໃສ່ເງື່ອນໄຂໃນບົດບັນທຶກຄວາມເຂົ້າໃຈ, ຝຝລ ມີຈຸດປະສົງຈະໂອນບັນດາ ຊັບສິນທັງໝົດຂອງໂຄງການທີ່ກ່າວມາຂ້າງເທິງນັ້ນໃຫ້ກັບບໍລິສັດພາຍຫຼັງແຕ່ລະໂຄງການສຳເລັດການປະຕິບັດໂຄງການ (COD) ຫຼື ເລືອກເອົາອັນໃດໜຶ່ງ ຕາມທີ່ພາກສ່ວນກ່ຽວຂ້ອງໄດ້ຕົກລົງເຫັນດີເປັນເອກະພາບກັນ, ໂດຍພາຍໃຕ້ເງື່ອນໄຂທີ່ວ່າ: *i)* ຖ້າໂຄງການສຳເລັດ, , ບໍລິສັດເຫັນດີ ທີ່ຈະຫັດແທນຄືນໃຫ້ ຝຝລ ສຳລັບທຸກຄ່າໃຊ້ຈ່າຍທີ່ເກີດຂຶ້ນໂດຍ ຝຝລ ຈົນເຖິງ ປັດຈຸບັນ ຫຼື ກຳລັງເກີດຂຶ້ນອີກຈົນກວ່າຈະສຳເລັດ ແລະ ໂອນກຳມະສິດຂອງໂຄງການໃຫ້ກັບບໍລິສັດ *ii)* ບໍລິສັດຈະຮັບຜິດຊອບຈ່າຍຄ່າຫັດແທນຄືນໃຫ້ ຝຝລ ຫຼື ລາຍຈ່າຍລ່ວງໜ້າໃຫ້ ຝຝລ, ເພື່ອສືບຕໍ່ຈ່າຍ ຫຼື ລາຍຈ່າຍທີ່ກຳລັງເກີດຂຶ້ນອີກ ທັງສອງຝ່າຍໄດ້ຕົກລົງກັນໄວ້, ທຸກພັນທະທາງດ້ານການເງິນ ໃນຕໍ່ໜ້າ ຂອງ ຝຝລ ທີ່ກ່ຽວພັນກັບໂຄງການແມ່ນອາດຈະເກີດຂຶ້ນກັບການກຳນົດຕາມສັນຍາ. ໂຄງການໄດ້ຖືກສິ້ນສຸດໃນຕົ້ນປີ 2016.

ບົດບັນທຶກຄວາມເຂົ້າໃຈ (MOU) ກ່ຽວກັບການໂອນຮຸ້ນ ຊັບສິນ ຂອງໂຄງການນ້ຳສະນາ (ໂຄງການ)

ໃນວັນທີ 12 ກຸມພາ 2014, ບໍລິສັດ ແລະ ຝຝລ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກ່ຽວກັບການມອບໂອນຊັບສິນຂອງໂຄງການນ້ຳສະນາ. ອີງໃສ່ເງື່ອນໄຂໃນບົດບັນທຶກຄວາມເຂົ້າໃຈ, ຝຝລ ມີຈຸດປະສົງຈະໂອນບັນດາຊັບສິນທັງໝົດຂອງໂຄງການ ທີ່ກ່າວມາຂ້າງເທິງນັ້ນ ໃຫ້ກັບບໍລິສັດ ພາຍຫຼັງແຕ່ລະໂຄງການສຳເລັດການປະຕິບັດໂຄງການ (*COD)* ຫຼື ເລືອກເອົາອັນໃດໜຶ່ງ ຕາມທີ່ພາກສ່ວນກ່ຽວຂ້ອງໄດ້ຕົກລົງເຫັນດີເປັນເອກະພາບກັນ ໂດຍພາຍໃຕ້ເງື່ອນໄຂທີ່ວ່າ: *i)* ຖ້າໂຄງການສຳເລັດແລ້ວ, ບໍລິສັດເຫັນດີ ທີ່ຈະຫັດແທນຄືນໃຫ້ ຝຝລ ສຳລັບທຸກຄ່າໃຊ້ຈ່າຍທີ່ເກີດຂຶ້ນໂດຍ ຝຝລ ຈົນເຖິງປັດຈຸບັນ ຫຼື ກຳລັງເກີດຂຶ້ນອີກຈົນກວ່າຈະສຳເລັດ ແລະ ໂອນກຳມະສິດຂອງໂຄງການໃຫ້ກັບບໍລິສັດ *ii)* ບໍລິສັດຈະຮັບຜິດຊອບຈ່າຍຄ່າຫັດແທນຄືນລາຍຈ່າຍ, ລາຍຈ່າຍລ່ວງໜ້າ, ລາຍຈ່າຍທີ່ສືບຕໍ່ຈ່າຍ ຫຼື ລາຍຈ່າຍ ທີ່ກຳລັງເກີດຂຶ້ນອີກໃຫ້ ຝຝລ ຕາມທີ່ສອງຝ່າຍໄດ້ຕົກລົງກັນໄວ້, ທຸກພັນທະທາງດ້ານ ການເງິນໃນຕໍ່ໜ້າ ຂອງ ຝຝລ ທີ່ກ່ຽວພັນ ກັບໂຄງການແມ່ນອາດຈະເກີດຂຶ້ນກັບການກຳນົດຕາມສັນຍາ, *iii)* ທັງສອງຝ່າຍ ມີການຕົກລົງໃນ ການຈັດການວຽກງານເອກະສານທີ່ກ່ຽວຂ້ອງໃຫ້ສຳເລັດພາຍໃນວັນທີ 31 ຕຸລາ 2014, *iv)* ໃນການຄິດໄລ່ ຄ່າຕອບແທນທີ່ບໍລິສັດຕ້ອງຈ່າຍໃຫ້ ຝຝລ ແມ່ນ ບໍ່ໃຫ້ເກີນ 2,4 ລ້ານ ໂດລາສະຫະລັດ. ຖ້າຫາກວ່າ ຝຝລ ມີລາຍຈ່າຍທີ່ເພີ່ມເຕີມຫຼາຍກວ່າຂ້າງເທິງທີ່ເກີດຂຶ້ນ ບໍລິສັດຕ້ອງຈ່າຍພາກສ່ວນທີ່ເພີ່ມຂຶ້ນໃຫ້ກັບ ຝຝລ ພາຍໃຕ້ເງື່ອນໄຂທີ່ກຳນົດໃນບົດບັນທຶກຄວາມເຂົ້າໃຈ. ໂຄງການໄດ້ມີການໂອນກຳມະສິດໃນລະຫວ່າງປີ 2016.

ບົດບັນທຶກຄວາມເຂົ້າໃຈ (MOU) ກ່ຽວກັບການໂອນຮຸ້ນ ຊັບສິນໂຄງການ ນ້ຳຄານ 3 (ໂຄງການ)

ໃນວັນທີ 17 ກຸມພາ 2014, ບໍລິສັດ ແລະ ຝຝລ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ກ່ຽວກັບການມອບໂອນ ຊັບສິນ ຂອງໂຄງການນ້ຳຄານ 3. ອີງໃສ່ເງື່ອນໄຂໃນບົດບັນທຶກຄວາມເຂົ້າໃຈ, ຝຝລ ມີຈຸດປະສົງຈະໂອນບັນດາຊັບສິນທັງໝົດຂອງ ໂຄງການທີ່ກ່າວມາຂ້າງເທິງນັ້ນ ໃຫ້ກັບບໍລິສັດ ພາຍຫຼັງແຕ່ລະໂຄງການສຳເລັດການປະຕິບັດໂຄງການ (COD) ຫຼື ເລືອກເອົາ ວັນໃດໜຶ່ງຕາມທີ່ພາກສ່ວນກ່ຽວຂ້ອງໄດ້ຕົກລົງເຫັນດີເປັນເອກະພາບກັນ, ໂດຍພາຍໃຕ້ເງື່ອນໄຂທີ່ວ່າ: *i)* ຖ້າໂຄງການສຳເລັດ ແລ້ວ, ບໍລິສັດເຫັນດີ ທີ່ຈະຫັກແທນຄືນໃຫ້ ຝຝລ ສຳລັບທຸກຄ່າໃຊ້ຈ່າຍທີ່ເກີດຂຶ້ນໂດຍ ຝຝລ ຈົນເຖິງ ປັດຈຸບັນ ຫຼື ກຳລັງເກີດ ຂຶ້ນອີກ ຈົນກວ່າຈະສຳເລັດ ແລະ ໂອນກຳມະສິດ ຂອງໂຄງການໃຫ້ກັບບໍລິສັດ *ii)* ບໍລິສັດຈະຮັບຜິດຊອບຈ່າຍຄ່າຫັກແທນຄືນ ລາຍຈ່າຍ, ລາຍຈ່າຍລ່ວງໜ້າ, ລາຍຈ່າຍທີ່ສືບ ຕໍ່ຈ່າຍ ຫຼື ລາຍຈ່າຍທີ່ກຳລັງເກີດຂຶ້ນອີກໃຫ້ ຝຝລ ຕາມທີ່ສອງຝ່າຍໄດ້ຕົກລົງ ກັນໄວ້, ທຸກພັນທະທາງດ້ານການເງິນ ໃນຕໍ່ໜ້າຂອງ ຝຝລ ທີ່ກ່ຽວພັນກັບ ໂຄງການແມ່ນອາດຈະເກີດຂຶ້ນກັບການກຳນົດຕາມ ສັນຍາ, *iii)* ທັງສອງຝ່າຍມີການຕົກລົງໃນການຈັດການວຽກງານເອກະສານ ທີ່ກ່ຽວຂ້ອງໃຫ້ສຳເລັດພາຍໃນວັນທີ 31 ຕຸລາ 2014, *iv)* ໃນການຄິດໄລ່ ຄ່າຕອບແທນທີ່ບໍລິສັດ ຕ້ອງຈ່າຍໃຫ້ ຝຝລ ແມ່ນບໍ່ໃຫ້ເກີນ 18,13 ລ້ານໂດລາສະຫະລັດ. ຖ້າ ຫາກວ່າ ຝຝລ ມີລາຍຈ່າຍທີ່ເພີ່ມເຕີມຫຼາຍກວ່າຂ້າງເທິງທີ່ເກີດຂຶ້ນ, ບໍລິສັດຕ້ອງຈ່າຍພາກສ່ວນທີ່ເພີ່ມຂຶ້ນໃຫ້ກັບ ຝຝລ ພາຍ ໃຕ້ເງື່ອນໄຂທີ່ກຳນົດໃນ ບົດບັນທຶກຄວາມເຂົ້າໃຈ.

ບົດບັນທຶກຄວາມເຂົ້າໃຈ (MOU) ກ່ຽວກັບການໂອນຮຸ້ນ ຊັບສິນ ຂອງໂຄງການບໍລິສັດ ໄຟຟ້າ ນ້ຳອູ ຈຳກັດ

ໃນວັນທີ 19 ມັງກອນ 2015, ບໍລິສັດ ແລະ ຝຝລ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ສຳລັບການຖ່າຍໂອນຮຸ້ນໃນບໍລິສັດ ໄຟຟ້າ ນ້ຳອູ ຈຳກັດ, ລວມເຖິງຊັບສິນຂອງໂຄງການນ້ຳອູ 2, 5 ແລະ 6.

ພາຍໃຕ້ບົດບັນທຶກຄວາມເຂົ້າໃຈ, ບໍລິສັດເຫັນດີໃນການຊຳລະເງິນຄືນທັງໝົດໃຫ້ ຝຝລ ສຳລັບທຸກລາຍຈ່າຍທີ່ ຝຝລ ຈ່າຍ ຜ່ານມາຈົນຮອດມື້ສຳເລັດໂຄງການບົນພື້ນຖານທີ່ເກີດຂຶ້ນຢ່າງຕໍ່ເນື່ອງ ຫຼື ຈົນກວ່າຈະສຳເລັດການໂອນຄວາມເປັນເຈົ້າຂອງ ໂຄງການເຊັ່ນດຽວກັນທາງບໍລິສັດ. ພ້ອມກັນນັ້ນບໍລິສັດຕ້ອງຊຳລະເງິນຄືນໃຫ້ ຝຝລ ຫຼື ຈ່າຍເງິນລ່ວງໜ້າໃຫ້ ຝຝລ ຕາມທີ່ ທັງສອງຝ່າຍໄດ້ຕົກລົງເຫັນດີກັນຢ່າງຕໍ່ເນື່ອງ. ນອກຈາກນັ້ນ ຝຝລ ອາດມີພັນທະທາງດ້ານການເງິນກ່ຽວກັບ ໂຄງການ ດັ່ງກ່າວຕາມທີ່ລະບຸໃນສັນຍາ. ສອງຝ່າຍໄດ້ຕົກລົງເຫັນດີໃນລາຄາຂາຍເມື່ອມີການໂອນໂຄງການ ແລະ ບໍລິສັດ ຈະຕ້ອງຈ່າຍ ຈຳນວນເງິນທີ່ເຫຼືອຫຼັງຈາກທີ່ຫັກຈາກເງິນລ່ວງໜ້າໃຫ້ ຝຝລ.

ບັນທຶກຄວາມເຂົ້າໃຈ (MOU) ສຳລັບການໂອນຊັບສິນ ແລະ ຮຸ້ນ ຂອງຜູ້ຜະລິດພະລັງງານໄຟຟ້າເອກະລາດ (IPPs)

ໃນວັນທີ 12 ມິຖຸນາ 2015 ບໍລິສັດໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບ ຝຟລ ສຳລັບການໂອນຊັບສິນ ແລະ ຮຸ້ນຂອງ ຜູ້ ຜະລິດໄຟຟ້າເອກະລາດ ສັງລວມ ດັ່ງລຸ່ມນີ້:

ລຳດັບ ຊັບສິນບັດ	ຊື່ໂຄງການ	ທີ່ຕັ້ງ	ສ່ວນຖືຄອງຮຸ້ນ	ເມກາວັດ
1	ນ້ຳຈຽນ 1	ຊຽງຂວາງ	100%	104
2	ນ້ຳຫີນບູນ	ຄຳມ່ວນ	100%	30
3	ເຊເສັດ 3	ຈຳປາສັກ	100%	24
4	ນ້ຳງື່ມ 1 Ext DFE	ວຽງຈັນ	100%	80
5	ນ້ຳງື່ມ 1 Ext Unit 6	ວຽງຈັນ	100%	40
	ລວມ			278

ລຳດັບ ຮຸ້ນຜູ້ຜະລິດໄຟຟ້າເອກະລາດ (IPPs)	ຊື່ໂຄງການ	ທີ່ຕັ້ງ	ສ່ວນຖືຄອງຮຸ້ນ	ຮຸ້ນ ເມກາວັດ
1	ນ້ຳງຽບ 2	ຊຽງຂວາງ	10%	18
2	ນ້ຳແບ່ງ	ອຸດົມໄຊ	20%	7
3	ເຊຂະໝານ 3	ເຊກອງ	15%	37
4	ນ້ຳສົກ 1	ວຽງຈັນ	10%	6
5	ນ້ຳມັງ 1	ບໍລິຄຳໄຊ	10%	6
6	ນ້ຳທາ 1	ຫຼວງນ້ຳທາ, ບໍ່ແກ້ວ	20%	34
	ລວມ			108

ພາຍໃຕ້ບົດບັນທຶກຄວາມເຂົ້າໃຈ, ບໍລິສັດເຫັນດີໃນການຊຳລະເງິນຄືນທັງໝົດໃຫ້ ຝຟລ ສຳລັບທຸກລາຍຈ່າຍທີ່ ຝຟລ ຈ່າຍ ຜ່ານມາຈົນຮອດມື້ສຳເລັດໂຄງການບົນພື້ນຖານທີ່ເກີດຂຶ້ນຢ່າງຕໍ່ເນື່ອງ ຫຼື ຈົນກວ່າຈະສຳເລັດການໂອນຄວາມເປັນເຈົ້າຂອງ ຂອງໂຄງການເຊັ່ນດຽວກັນທາງບໍລິສັດ. ພ້ອມກັນນັ້ນບໍລິສັດຕ້ອງຊຳລະເງິນຄືນໃຫ້ ຝຟລ ຫຼື ຈ່າຍເງິນລ່ວງໜ້າໃຫ້ ຝຟລ ຕາມ ທີ່ທັງສອງຝ່າຍໄດ້ຕົກລົງເຫັນດີກັນຢ່າງຕໍ່ເນື່ອງ ນອກຈາກນັ້ນ ຝຟລ ອາດມີພັນທະທາງດ້ານການເງິນກ່ຽວກັບໂຄງການ ດັ່ງ ກ່າວຕາມທີ່ລະບຸໃນສັນຍາ. ສອງຝ່າຍໄດ້ຕົກລົງເຫັນດີໃນລາຄາຂາຍເມື່ອມີການໂອນໂຄງການ ແລະ ບໍລິສັດຈະຕ້ອງຈ່າຍຈຳ ນວນເງິນທີ່ເຫຼືອຫຼັງຈາກທີ່ຫັກຈາກເງິນລ່ວງໜ້າໃຫ້ ຝຟລ.

8 ຊັບສິນຢູ່ພາຍໃຕ້ການສຳປະທານ

	ອາຄານ	ເຂື່ອນໄຟຟ້າ	ໂຮງງານ ແລະ ເຄື່ອງຈັກ	ພາຫະນະ	ເຟີນີເຈີ, , ເຄື່ອງຕິດຕັ້ງ ແລະ ອຸປະກອນ ຫ້ອງການ	ວຽກກຳລັງດຳເນີນການກໍ່ສ້າງ	ລວມ
				(ລ້ານກີບ)			
ຕົ້ນທຶນ							
ວັນທີ 1 ມັງກອນ 2015	357.443	2.457.596	1.972.923	10.398	9.082	-	4.807.442
ເພີ່ມ	10.738	1.664	389.811	4.297	3.602	12.609	422.721
ວັນທີ 31 ທັນວາ 2015 ແລະ 1 ມັງກອນ 2016	368.181	2.459.260	2.362.734	14.695	12.684	12.609	5.230.163
ເພີ່ມ	391.874	3.399.849	1.353.892	5.502	4.276	348.025	5.503.418
ສະສາງ	(208)	-	-	(737)	(166)	-	(1.111)
ວັນທີ 31 ທັນວາ 2016	759.847	5.859.109	3.716.626	19.460	16.794	360.634	10.734.470

	ອາຄານ	ເຂື່ອນໄຟຟ້າ	ໂຮງງານ ແລະ ເຄື່ອງຈັກ	ພາຫະນະ	ເຟີນິເຈີ, , ເຄື່ອງຕິດຕັ້ງ ແລະ ອຸປະກອນ ຫ້ອງການ	ວຽກກຳລັງດຳເນີນການກໍ່ສ້າງ	ລວມ
				(ລ້ານກີບ)			
ຄ່າຫຼຸ້ຍຫ້ຽນ							
ວັນທີ 1 ມັງກອນ 2015	69.721	329.586	253.835	4.350	4.099	-	661.591
ຄ່າຫຼຸ້ຍຫ້ຽນທີ່ເກີດຂຶ້ນໃນປີ	20.856	84.245	115.948	2.282	2.111	-	225.442
ວັນທີ 31 ທັນວາ 2015 ແລະ 1 ມັງກອນ 2016	**90.577**	**413.831**	**369.783**	**6.632**	**6.210**	-	**887.033**
ຄ່າຫຼຸ້ຍຫ້ຽນທີ່ເກີດຂຶ້ນໃນປີ	52.613	215.390	162.934	2.456	651	-	434.044
ສະສາງ	(208)	-	-	(737)	(166)	-	(1.111)
ວັນທີ 31 ທັນວາ 2016	**142.982**	**629.221**	**532.717**	**8.351**	**6.695**	-	**1.319.966**
ມູນຄ່າສຸດທິ							
ວັນທີ 1 ມັງກອນ 2015	**287.722**	**2.128.010**	**1.719.088**	**6.048**	**4.983**	-	**4.145.851**
ວັນທີ 31 ທັນວາ 2015 ແລະ 1 ມັງກອນ 2016	**277.604**	**2.045.429**	**1.992.951**	**8.063**	**6.474**	**12.609**	**4.343.130**
ວັນທີ 31 ທັນວາ 2016	**616.865**	**5.229.888**	**3.183.909**	**11.109**	**10.099**	**360.634**	**9.412.504**

ສ່ວນເພີ່ມເຕີມໃນປີສິ້ນສຸດ ວັນທີ 31 ທັນວາ 2016, ສ່ວນໃຫຍ່ປະກອບໄປດ້ວຍ ໂຄງການໃໝ່ທີ່ໂອນ ຈາກ ຝຝລ ເຊິ່ງລວມມີ ນ້ຳຄານ 2, ຫ້ວຍລຳພັນໃຫຍ່ ແລະ ນ້ຳສະນາ ເປັນຈຳນວນເງິນ 2.821.346 ລ້ານກີບ, 1.911.721 ລ້ານກີບ, 267.051 ລ້ານກີບ ຕາມລຳດັບ.

9 ເງິນສົດ ແລະ ທຽບເທົ່າເງິນສົດ

	2016	2015
	(ລ້ານກີບ)	
ເງິນສົດໃນມື	148	96
ເງິນຝາກທະນາຄານ - ບັນຊີກະແສລາຍວັນ	2.235.132	1.213.674
ລວມ	**2.235.280**	**1.213.770**

ຄ່າເງິນຂອງເງິນສົດ ແລະ ທຽບເທົ່າເງິນສົດ ໃນວັນທີ 31 ທັນວາ 2016 ແລະ 2015 ມີດັ່ງນີ້:

	2016	2015
	(ລ້ານກີບ)	
ໂດລາສະຫາລັດ	1.973.138	570.402
ໄທ ບາດ	95.677	33.713
ລາວ ກີບ	166.465	609.655
ລວມ	**2.235.280**	**1.213.770**

10 ເງິນລົງທຶນໄລຍະສັ້ນ

	2016	2015
	(ລ້ານກີບ)	
ເງິນຝາກກັບທະນາຄານ – ຝາກມີກຳນົດ	101.703	20.000
ເງິນຝາກໄລຍະສັ້ນ	816.900	-
ລວມ	**918.603**	**20.000**

ໃນລະຫວ່າງປີ 2016, ບໍລິສັດໄດ້ລົງທຶນໄລຍະສັ້ນໃນໄລຍະ 6 ເດືອນ ຈຳນວນ 100 ລ້ານໂດລາສະຫາລັດ ຫຼື ທຽບເທົ່າເງິນ ກີບ ຈຳນວນ 829.300 ລ້ານກີບ, ຝາກໄວ້ກັບສະຖາບັນການເງິນໃນປະເທດ ອັດຕາດອກເບ້ຍຕໍ່ປີ 1,65% (2015: *ບໍ່ມີ*)

ຄ່າເງິນຂອງເງິນລົງທຶນໄລຍະສັ້ນ ໃນວັນທີ 31 ທັນວາ 2016 ແລະ 2015 ມີດັ່ງນີ້:

	2016	2015
	(ລ້ານກີບ)	
ໂດລາສະຫາລັດ	898.592	-
ລາວ ກີບ	20.011	20.000
ລວມ	**918.603**	**20.000**

11 ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ

	ໝາຍເຫດ	2016	2015
		(ລ້ານກີບ)	
ໜີ້ຕ້ອງຮັບການຄ້າຈາກການທີ່ກ່ຽວຂ້ອງ	*25*	476.457	293.385
ໜີ້ຕ້ອງຮັບອື່ນໆຈາກພາກສ່ວນທີ່ກ່ຽວຂ້ອງ	*25*	10.666	8.287
ອື່ນໆ		4.346	2.813
ລວມ		**491.469**	**304.485**

ການວິເຄາະອາຍຸສຳລັບໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ ມີດັ່ງຕໍ່ໄປນີ້:

	2016	2015
	(ລ້ານກີບ)	
ບໍ່ເຖິງກຳນົດ	191.394	117.500
ຄ້າງຊຳລະ		
ຕ່ຳກວ່າ 3 ເດືອນ	159.305	178.698
3 - 6 ເດືອນ	130.104	8.287
6 - 12 ເດືອນ	10.666	-
ລວມ	**491.469**	**304.485**

ຄ່າເງິນຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ໃນວັນທີ 31 ທັນວາ 2016 ແລະ 2015 ມີດັ່ງນີ້:

	2016	2015
	(ລ້ານກີບ)	
ໂດລາສະຫາລັດ	353.488	8.287
ລາວ ກີບ	137.981	296.198
ລວມ	**491.469**	**304.485**

12 ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຮຸ້ນ

		2016		2015	
	ລາຄາຕໍ່ຮຸ້ນ	ຈຳນວນ ຂອງ ຮຸ້ນ	ມູນຄ່າ	ຈຳນວນ ຂອງ ຮຸ້ນ	ມູນຄ່າ
	(ກີບ)		*(ລ້ານຮຸ້ນ / ລ້ານກີບ)*		
ອະນຸຍາດ					
ວັນທີ 1 ມັງກອນ					
- ຮຸ້ນສາມັນ	*4.000*	1.679	6.717.215	1.226	4.904.867
ການອອກຮຸ້ນໃໝ່	*4.000*	-	-	453	1.812.348
ວັນທີ 31 ທັນວາ					
- ຮຸ້ນສາມັນ	*4.000*	**1.679**	**6.717.215**	**1.679**	**6.717.215**
ອອກ ແລະ ຖອກແລ້ວ					
ວັນທີ 1 ມັງກອນ					
- ຮຸ້ນສາມັນ	*4.000*	1.679	6.717.215	1.226	4.904.867
ການອອກຮຸ້ນໃໝ່	*4.000*	-	-	453	1.812.348
ວັນທີ 31 ທັນວາ					
- ຮຸ້ນສາມັນ	*4.000*	**1.679**	**6.717.215**	**1.679**	**6.717.215**

ໃນລະຫວ່າງປີ 2015, ບໍລິສັດສະເໜີຂາຍ 453.086.932 ຮຸ້ນສາມັນມູນຄ່າຮຸ້ນລະ ກີບ 4.000 ຕໍ່ຮຸ້ນ ຈຳນວນ ກີບ 1.812.348 ລ້ານ ກີບ ໃຫ້ນັກລົງທຶນພາຍໃນ ແລະ ພາຍນອກຂອງ ສປປລາວ ໄດ້ 408.738.922 ຮຸ້ນ ໄດ້ການສະໜອງ ໃຫ້ກັບຜູ້ຖືຮຸ້ນເກົ່າທີ່ມີຢູ່ພາຍໃຕ້ສິດທິສະເໜີຂາຍ (RO) ຂາຍໄດ້ລາຄາ 6.000 ກີບຕໍ່ຮຸ້ນ ແລະ ຮຸ້ນອີກຈຳນວນ 44.348.010 ຮຸ້ນໄດ້ຖືກສະເໜີຂາຍໃຫ້ແກ່ມະຫາຊົນ (PO) ຂາຍໃນລາຄາ 6.800 ກີບຕໍ່ຮຸ້ນ.

ສ່ວນເພີ່ມມູນຄ່າຮຸ້ນ

ບໍລິສັດມີມູນຄ່າຮຸ້ນເພີ່ມຂຶ້ນທຶນຈົດທະບຽນ ແລະ ທີ່ກ່ຽວຂ້ອງຄ່າໃຊ້ຈ່າຍທີ່ຕິດພັນມາກັບສ່ວນເພີ່ມມູນຄ່າຂອງທຶນຈົດ ທະບຽນ ໃນວັນທີ 31 ທັນວາ 2016 ແລະ 2015 ມູນຄ່າສຸດທິຂອງສ່ວນເພີ່ມຂອງຮຸ້ນທຶນ 985.621 ລ້ານ ກີບ.

13 ຄັງສຳຮອງຕາມກົດໝາຍ

ສຳຮອງຕາມກົດໝາຍ ແມ່ນເຮັດຂຶ້ນມາໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍວິສາຫະກິດຂອງ ສປປ ລາວ ທີ່ຮຽກຮ້ອງໃຫ້ມີການ ຈັດສັນກຳໄລສຸດທິ ມາເປັນຄັງສຳຮອງຕາມກົດໝາຍຢ່າງໜ້ອຍ 10% ຂອງກຳໄລສຸດທິປະຈຳປີ ຂອງບໍລິສັດຈົນກວ່າ ສຳຮອງ ດັ່ງກ່າວຮອດ 50% ຂອງທຶນຈົດທະບຽນ.

14 ເງິນກູ້ຢືມໄລຍະຍາວ

	2016	2015
	(ລ້ານກີບ)	
ສ່ວນຂອງເງິນກູ້ຢືມໄລຍະຍາວ-ຈັດເປັນໄລຍະສັ້ນ		
- ເງິນກູ້ຢືມໄລຍະຍາວຈາກກິດຈະການທີ່ກ່ຽວຂ້ອງ	132.173	100.247
- ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ	82.311	77.760
ລວມສ່ວນເງິນກູ້ຢືມໄລຍະຍາວ-ຈັດເປັນໄລຍະສັ້ນ	**214.484**	**178.007**
ສ່ວນຂອງເງິນກູ້ຢືມໄລຍະຍາວ-ຈັດເປັນໄລຍະຍາວ		
- ເງິນກູ້ຢືມໄລຍະຍາວຈາກກິດຈະການທີ່ກ່ຽວຂ້ອງ	444.651	402.672
- ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ	399.648	438.785
ລວມສ່ວນເງິນກູ້ຢືມໄລຍະຍາວ-ຈັດເປັນໄລຍະຍາວ	**844.299**	**841.457**
ລວມເງິນກູ້ຢືມໄລຍະຍາວ	1.058.783	1.019.464

ລາຍການເຄື່ອນໄຫວຂອງເງິນກູ້ຢືມໄລຍະຍາວສຳລັບປີສິ້ນສຸດ 31 ທັນວາ 2016 ແລະ 2015 ມີດັ່ງນີ້:

	2016	2015
	(ລ້ານກີບ)	
ວັນທີ 1 ເດືອນ ມັງກອນ	1.019.464	598.782
ເພີ່ມເຕີມລະຫວ່າງປີ	228.563	555.198
ການຈ່າຍເງິນຄືນ	(193.197)	(138.365)
ຜົນກະທົບຂອງອັດຕາແລກປ່ຽນເງິນຕາ	3.953	3.849
ວັນທີ 31 ທັນວາ	**1.058.783**	**1.019.464**

ສັນຍາການຊຳລະໜີ້

ບໍລິສັດໄດ້ລົງນາມໃນສັນຍາໃນການຊຳລະໜີ້ ("ສັນຍາ") ກັບ ຝຝລ ໃນວັນທີ 15 ທັນວາ 2010. ຝຝລ ເປັນຜູ້ກູ້ຢືມອີງຕາມສັນຍາກູ້ຢືມຈຳນວນໜຶ່ງກັບລັດຖະບານຂອງ ສປປລາວ ("ລັດຖະບານລາວ") ຊຶ່ງກອງທຶນໃນເບື້ງຕົ້ນ ແມ່ນໄດ້ຮັບຈາກຜູ້ໃຫ້ກູ້ຢືມຕ່າງໆ ແລະ ໂດຍຜ່ານລັດຖະບານລາວ. ນອກເໜືອໄປຈາກການໂອນຊັບສິນ, ບໍລິສັດໄດ້ຕົກລົງເຫັນດີກັບ ຝຝລ ວ່າບໍລິສັດຈະຊຳລະເງິນກ່ຽວກັບໜີ້ສິນທີ່ຍັງຄ້າງຄາກັບ ຝຝລ ແລະ ຝຝລ ຈະເຮັດໃຫ້ການຈ່າຍເງິນດັ່ງກ່າວກັບລັດຖະບານ, ສຳລັບການຊຳລະຕໍ່ລັດຖະບານລາວກັບທະນາຄານໄດ້ຕາມສັນຍາກູ້ຢືມຕົ້ນສະບັບ. ເງິນກູ້ຢືມເຫຼົ່ານີ້ບໍ່ມີຫຼັກຊັບຄ້ຳປະກັນ ແລະ ບໍ່ມີພາລະຜູກພັນອື່ນໆ ທີ່ນອກເໜືອຈາກການຊຳລະທີ່ຈຳເປັນຕໍ່ຕາຕະລາງການຕົກລົງເຫັນດີ.

ວັນທີ 28 ກຸມພາ 2013, ບໍລິສັດໄດ້ລົງນາມໃນສັນຍາການຊຳລະໜີ້ເພີ່ມເຕີມ ("ສັນຍາ") ກັບ ຝຝລ. ຝຝລ ເປັນຜູ້ກູ້ຢືມຕາມໂຄງການເຂື່ອນໄຟຟ້າ ນ້ຳຊ່ອງ ພາຍໃຕ້ສັນຍາກູ້ຢືມເລກທີ 0229/ຝຝລ, ລົງວັນທີ 21 ມັງກອນ 2013 ກັບ ລັດຖະບານຂອງ ສປປລາວ ("ລັດຖະບານລາວ") ເຊິ່ງກອງທຶນຕົ້ນສະບັບ ແມ່ນສະໜອງໃຫ້ໂດຍ ທະນາຄານ ສົ່ງອອກ-ນຳເຂົ້າ ຂອງ ປະເທດ ອິນເດຍ (ຜູ້ໃຫ້ກູ້) ແລະ ເຮັດໄດ້ໂດຍຜ່ານລັດຖະບານລາວ. ນອກເໜືອໄປຈາກການໂອນຊັບສິນ ທັງສອງຝ່າຍຕົກລົງເຫັນດີວ່າບໍລິສັດຈະຈ່າຍເງິນໃຫ້ ຝຝລ ເທົ່າທຽມ ກັບ ຝຝລ ໄດ້ຈ່າຍໃຫ້ກັບລັດຖະບານລາວ ສຳລັບລັດຖະບານລາວ ຈ່າຍຄືນໃຫ້ກັບທະນາຄານໄດ້ຕາມສັນຍາກູ້ຢືມຕົ້ນສະບັບ. ເງິນກູ້ຢືມເຫຼົ່ານີ້ບໍ່ມີຫຼັກຊັບຄ້ຳປະກັນ ແລະ ບໍ່ມີພາລະຜູກພັນອື່ນໆ ທີ່ນອກເໜືອການຊຳລະທີ່ຈຳເປັນຕໍ່ຕາຕະລາງການຕົກລົງເຫັນດີ.

ໃນວັນທີ 19 ມັງກອນ 2016, ບໍລິສັດໄດ້ລົງນາມໃນສັນຍາໃນການຊຳລະໜີ້ເພີ່ມເຕີມ ("ສັນຍາ") ກັບ ຝຝລ. ຝຝລ ເປັນຜູ້ກູ້ຢືມຕາມສັນຍາກູ້ຢືມເງິນລົງວັນທີ 19 ມິຖຸນາ 2010 ກັບ ທະນາຄານກຸງໄທ ຈຳກັດ. ນອກເໜືອຈາກການໂອນຊັບສິນຂອງໂຄງການໄຟຟ້າພະລັງງານນ້ຳ ນ້ຳສະນາ, ທັງສອງຝ່າຍເຫັນດີກັນວ່າບໍລິສັດ ຈະຕ້ອງຈ່າຍໜີ້ທີ່ນອກເໜືອຈາກສ່ວນຂອງ ຝຝລ ແລະ ຝຝລ ຈະຕ້ອງຊຳລະເງິນ ດັ່ງກ່າວໃຫ້ແກ່ຜູ້ໃຫ້ກູ້ຕາມສັນຍາ.

ສັນຍາໜີ້ໄລຍະຍາວ

ວັນທີ 17 ມີນາ 2015 ບໍລິສັດ ໄດ້ເຊັນສັນຍາເງິນກູ້ຢືມກັບທະນາຄານທະຫານໄທ ມະຫາຊົນ ຈຳນວນທັງໝົດ 68 ລ້ານໂດລາ ສະຫະລັດ. ເງິນກູ້ຢືມນີ້ມີອັດຕາດອກເບ້ຍ LIBOR 3 ເດືອນ + 3,50% ແລະ ຈ່າຍເປັນລາຍໄຕມາດ. ບໍລິສັດຈະຈ່າຍຄືນເງິນກູ້ນີ້ພາຍໃນ 7 ປີ ຫຼັງຈາກວັນທີທີ່ຖອນຄັ້ງທຳອິດ ໃນວັນທີ 2 ເມສາ 2015 ບໍລິສັດ ໄດ້ກູ້ຢືມເງິນຈຳນວນ 30,64 ລ້ານ ໂດລາ ສະຫະລັດ ແລະ 31 ກໍລະກົດ 2015, ບໍລິສັດທີ່ໄດ້ຮັບຄັ້ງທີສອງ ແລະ ຖອນອອກຄັ້ງທີ່ 2 ແລະ 3 ເປັນຈຳນວນ ເງິນລວມ 37,36 ລ້ານໂດລາສະຫະລັດ. ນອກຈາກນີ້ບໍລິສັດຈຳເປັນຕ້ອງໄດ້ປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂສະເພາະໃດ ໜຶ່ງ ຕົວຢ່າງ ອັດຕາສ່ວນຄວາມສາມາດໃນການຊຳລະໜີ້, ອັດຕາສ່ວນໜີ້, ຈ່າຍເງິນປັນຜົນ ແລະ ລາຍງານອາຍຸໜີ້ຕ້ອງຮັບບໍ່ ເກີນ 120 ວັນ.ໃນລະຫວ່າງປີ 2016, ບໍລິສັດ ແລະ ທະນາຄານ ທະຫານໄທ (TMB) ຈຳກັດ ໄດ້ເຫັນດີແກ້ໄຂສັນຍາເງິນກູ້ ໄລຍະຍາວ ເຊິ່ງຮຽກຮ້ອງໃຫ້ບໍລິສັດຕ້ອງປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ລວມເຖິງອັດຕາສ່ວນຄວາມສາມາດໃນ ການຊຳລະໜີ້

ໃນວັນທີ 26 ສິງຫາ 2016 ບໍລິສັດ ໄດ້ເຊັນສັນຍາກູ້ຢືມເພີ່ມ ຈຳນວນ 6,8 ລ້ານໂດລາ ຫຼື ທຽບເທົ່າ 55.107 ລ້ານກີບ ເພື່ອ ນຳໃຊ້ໃນໂຄງການກໍ່ສ້າງ.

ໄລຍະຂອງເງິນກູ້ຢືມເມື່ອເຖິງກຳນົດຈ່າຍໜີ້ສິນດອກເບ້ຍ ໃນວັນທີ 31ທັນວາ 2016 ແລະ 2015 ມີດັ່ງນີ້:

	2016	2015
	(ລ້ານກີບ)	
ພາຍໃນໜຶ່ງປີ	214.484	178.007
ຫຼັງໜຶ່ງປີ ແຕ່ພາຍໃນຫ້າປີ	814.218	671.780
ຫຼັງຈາກຫ້າປີ	30.081	169.677
ລວມ	**1.058.783**	**1.019.464**

ຄ່າເງິນຂອງເງິນກູ້ຢືມໄລຍະຍາວ ໃນວັນທີ 31 ທັນວາ 2016 ແລະ 2015 ມີດັ່ງນີ້:

	2016	2015
	(ລ້ານກີບ)	
ໂດລາສະຫາລັດ	1.001.391	950.643
ເຢັນ ຍີ່ປຸ່ນ	57.392	68.821
ລວມ	**1.058.783**	**1.019.464**

15 ຮຸ້ນກູ້

	2016	2015
	(ລ້ານກີບ)	
ຮຸ້ນກູ້	4.060.173	1.480.050
ລາຍຈ່າຍໃນການດຳເນີນງານ	(74.237)	(27.887)
ສຸດທິ	**3.985.936**	**1.452.163**

ລາຍການເຄື່ອນໄຫວໃນຮຸ້ນກູ້ສຳລັບປີສິ້ນສຸດໃນວັນທີ 31 ທັນວາ 2016 ແລະ 2015 ມີດັ່ງນີ້:

	2016	2015
	(ລ້ານກີບ)	
ວັນທີ 1 ມັງກອນ	1.452.163	1.575.862
ເພີ່ມ-ສຸດທິ	2.469.288	-
ການຫຼຸດຜ່ອນຄ່າທຳນຽມໃນການຈັດຈຳໜ່າຍ	4.011	6.561
ຜົນກະທົບຂອງອັດຕາແລກປ່ຽນເງິນຕາ	60.474	(130.260)
ວັນທີ 31 ທັນວາ	**3.985.936**	**1.452.163**

ວັນທີ 2 ກັນຍາ 2016, ບໍລິສັດໄດ້ອອກຮຸ້ນກູ້ 7-12 ປີອັດຕາດອກເບ້ຍຄົງທີ່ບໍ່ມີສິດ ແລະ ບໍ່ມີຫຼັກຊັບຄ້ຳປະກັນ, ຢູ່ທີ່ 1.000 ໂດລາ ມູນຄ່າໃບໜ້າຕໍ່ໜ່ວຍທັງໝົດເປັນຈຳນວນ 312.000 ຫົວໜ່ວຍ ເຊິ່ງມີມູນຄ່າ 312 ລ້ານໂດລາ (ທຽບເທົ່າ 2.535.936 ລ້ານກີບ). ຮຸ້ນກູ້ແມ່ນອອກໃນມູນຄ່າຮຸ້ນ ແລະ ບໍ່ມີສ່ວນຫຼຸດ ຫຼື ຄ່າເພີ່ມມູນຄ່າທີ່ເກີດຂຶ້ນຈາກການອອກຮຸ້ນກູ້ ໄດ້. ອັດຕາດອກເບ້ຍໄດ້ລະບຸໄວ້ ຫຼື ຂຶ້ນກັບອັດຕາດອກເບ້ຍຄົງທີ່ ແລະ ມີຂຶ້ນຕັ້ງແຕ່ 5,00% ເຖິງ 5,98% ຕໍ່ປີ. ດອກເບ້ຍ ຕ້ອງ ຈ່າຍສອງຄັ້ງຕໍ່ປີໃນເດືອນມີນາ ແລະ ເດືອນກັນຍາ ແລະ ການຊຳລະດອກເບ້ຍຄັ້ງທຳອິດໃນວັນທີ 2 ມີນາ 2017. ຮຸ້ນກູ້ ໄດ້ສະເໜີແບບກຸ່ມສະເພາະທີ່ຕະຫຼາດຫຼັກຊັບແຫ່ງປະເທດໄທ ("SET") ໃຫ້ແກ່ເຄື່ອຂ່າຍນັກລົງທຶນຂັ້ນສູງ ແລະ ນັກລົງທຶນ ສະຖາບັນລວມທັງທະນາຄານ, ກອງທຶນເຊິ່ງກັນ ແລະ ກັນ, ກອງທຶນການຄຸ້ມຄອງຊັບສິນ ແລະ ບໍລິສັດປະກັນໄພ. ຮຸ້ນກູ້ນີ້ໄດ້ ຮັບອັດຕາຄວາມສ່ຽງ BBB + ຈາກ ບໍລິສັດ TRIS Rating ຈຳກັດ, ໃນປະເທດໄທ.

ຮຸ້ນກູ້ທີ່ອອກ ມີຄ່າໃຊ້ຈ່າຍໂດຍປະມານ 50.836 ລ້ານກີບ ເຊິ່ງເກີດຂຶ້ນໃນການກະກຽມ ແລະ ການຂາຍຮຸ້ນກູ້ອອກ. ຄ່າໃຊ້ຈ່າຍເຫຼົ່ານີ້ສ່ວນໃຫຍ່ແມ່ນປະກອບດ້ວຍຄ່າທຳນຽມສຳລັບການປຶກສາມືອາຊີບ, ທະນາຍຄວາມ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ. ຄ່າໃຊ້ຈ່າຍໃນການອອກຮຸ້ນແມ່ນຈະທະຍອຍຕັດຈ່າຍເປັນເສັ້ນຊື່ຕາມອາຍຸໄລຍະຂອງຮຸ້ນກູ້ໄດ້. ນອກຈາກນັ້ນ, ຄ່າໃຊ້ຈ່າຍທີ່ທະຍອຍຕັດແມ່ນໄດ້ນຳສະເໜີ ເປັນມູນຄ່າຈຳນວນໜີ້ຄ້າງຈ່າຍຂອງຮຸ້ນກູ້.

ສັງລວມຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນຂອງການອອກຮຸ້ນກູ້ ໃນປີ 2016 ໄດ້ລະບຸໄວ້ໃນຕາຕະລາງ ດັ່ງລຸ່ມນີ້:

ລາຍການ	ຮຸບແບບ 1	ຮຸບແບບ 2	ຮຸບແບບ 3
ປະເພດ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ
ການຈ່າຍຄືນ	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.
ລວມລາຄາທີ່ສະເໜີ	51.000 ລ້ານໂດລາສະຫາລັດ	166.000 ລ້ານໂດລາສະຫາລັດ	95.000 ລ້ານໂດລາສະຫາລັດ
ຈຳນວນທີ່ອອກ	51.000 ໜ່ວຍ	166.000 ໜ່ວຍ	95.000 ໜ່ວຍ
ອັດຕາດອກເບ້ຍ	ຄົງທີ່ 5% ຕໍ່ ປີ	ຄົງທີ່ 5,59% ຕໍ່ປີ	ຄົງທີ່ 5,98% ຕໍ່ປີ
ອັດຕາດອກເບ້ຍທີ່ແທ້ຈິງ	5,24% ຕໍ່ປີ	5,85% ຕໍ່ປີ	6,26% ຕໍ່ປີ
ກຳນົດຈ່າຍດອກເບ້ຍ	ສອງຄັ້ງຕໍ່ປີ, ວັນທີ 2 ມີນາ ແລະ 2 ກັນຍາ	ສອງຄັ້ງຕໍ່ປີ, ວັນທີ 2 ມີນາ ແລະ 2 ກັນຍາ	ສອງຄັ້ງຕໍ່ປີ, ວັນທີ 2 ມີນາ ແລະ 2 ກັນຍາ
ອາຍຸ	7 ປີ	10 ປີ	12 ປີ
ວັນທີ ຄົບກຳນົດ	2 ກັນຍາ 2023	2 ກັນຍາ 2026	2 ກັນຍາ 2028

ວັນທີ 12 ທັນວາ 2014 ບໍລິສັດໄດ້ອອກຮຸ້ນກູ້ທີ່ບໍ່ມີຫຼັກຊັບຄ້ຳປະກັນ ຈຳນວນ 6.500 ລ້ານບາດ (ປະມານ 1.616.810 ລ້ານກີບ) ອອກທີ່ຕະຫຼາດຫຼັກຊັບແຫ່ງປະເທດໄທ ("SET"). ຮຸ້ນກູ້ໄດ້ ຮັບການສະເໜີຂາຍຜ່ານວິທີການແບບສະເພາະເຈາະຈົງ ໃຫ້ແກ່ນັກລົງທຶນ (Private Placement method) ແລະ ນັກລົງທຶນສະຖາບັນ, ລວມທັງກອງທຶນລວມ, ກອງທຶນບໍລິຫານຈັດການຊັບສິນ ແລະ ບໍລິສັດປະກັນໄພ, ບໍລິສັດຈະຕ້ອງໄດ້ປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ເຊັ່ນ ການນຳສິ່ງເອກະສານ ລາຍງານການເງິນໃຫ້ແກ່ຕະຫຼາດຫຼັກຊັບແຫ່ງປະເທດໄທ ແລະ ຄະນະກຳມະການຄຸ້ມຄອງຫຼັກຊັບ ແຫ່ງ ປະເທດໄທ ພາຍໃນກຳນົດເວລາດຽວກັນກັບທີ່ຢື່ນໃຫ້ກັບໜ່ວຍງານພາຍໃນປະເທດ.

ຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນຂອງຮຸ້ນກູ້ ໄດ້ລະບຸໄວ້ໃນຕາຕະລາງດັ່ງລຸ່ມນີ້:

ລາຍການ	ຮຸ່ນແບບ 1	ຮຸ່ນແບບ 2	ຮຸ່ນແບບ 3
ປະເພດ	ຮຸ້ນກູ້ທີ່ບໍ່ມີຫຼັກຊັບ ຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີຫຼັກຊັບ ຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີຫຼັກຊັບ ຄ້ຳປະກັນ
ການຈ່າຍຄືນ	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນ ວັນທີ ຄົບກຳນົດ	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນ ວັນທີ ຄົບກຳນົດ	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນ ວັນທີ ຄົບກຳນົດ
ລວມ ລາຕາທີ່ສະເໜີ	1.500 ລ້ານບາດ	2.000 ລ້ານບາດ	3.000 ລ້ານບາດ
ຈຳນວນທີ່ອອກ	1.500.000 ໜ່ວຍ	2.000.000 ໜ່ວຍ	3.000.000 ໜ່ວຍ
ອັດຕາດອກເບ້ຍ	4,95% ຕໍ່ປີ	5,20% ຕໍ່ປີ	5,45% ຕໍ່ປີ
ອັດຕາດອກເບ້ຍທີ່ແທ້ຈິງ	5,26% ຕໍ່ປີ	5,54% ຕໍ່ປີ	5,82% ຕໍ່ປີ
ກຳນົດຈ່າຍດອກເບ້ຍ	ສອງຄັ້ງຕໍ່ປີ, ວັນທີ 12 ມິຖຸນາ ແລະ 12 ທັນວາ	ສອງຄັ້ງຕໍ່ປີ, ວັນທີ 12 ມິຖຸນາ ແລະ 12 ທັນວາ	ສອງຄັ້ງຕໍ່ປີ, ວັນທີ 12 ມິຖຸນາ ແລະ 12 ທັນວາ
ອາຍຸ	5 ປີ	7 ປີ	10 ປີ
ວັນທີ ຄົບກຳນົດ	12 ທັນວາ 2019	12 ທັນວາ 2021	12 ທັນວາ 2024

16 ໜີ້ຕ້ອງຈ່າຍສັນຍາແລກປ່ຽນເງິນຕາ (Swap)

	2016	2015
	(ລ້ານກີບ)	
ໜີ້ຕ້ອງຈ່າຍສັນຍາແລກປ່ຽນເງິນຕາ	1.620.851	1.613.738
ໜີ້ຕ້ອງຮັບສັນຍາແລກປ່ຽນເງິນຕາ	(1.489.735)	(1.469.390)
ສ່ວນຕ່າງກຳໄລສັນຍາແລກປ່ຽນເງິນຕາ	14.560	17.049
ສຸດທິ	**145.676**	**161.397**

ວັນທີ 14 ທັນວາ 2014 ບໍລິສັດໄດ້ເຮັດສັນຍາແລກປ່ຽນສະກຸນເງິນສຳລັບຮຸ່ນກູ້ ທີ່ອອກເປັນສະກຸນເງິນໂດລາສະຫາລັດ ແລະ ແລກປ່ຽນອັດຕາດອກເບ້ຍຈາກອັດຄົງທີ່ເປັນອັດຕາດອກເບ້ຍລອຍຕົວກັບສະຖາບັນການເງິນຂອງໄທ ເພື່ອປ້ອງກັນຄວາມສ່ຽງຈາກການຜັນຜວນຂອງອັດຕາແລກປ່ຽນ ແລະ ອັດຕາດອກເບ້ຍ ແລະ ສັງລວມຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນ ດັ່ງນີ້:

ລຳດັບ	ຈຳນວນທີ່ ອອກຮຸ່ນກູ້ (ລ້ານບາດ)	Swap ຈຳນວນ (ລ້ານໂດລາ ສະຫາລັດ)	ໄລຍະການ ຊຳລະເງິນ	ອັດຕາດອກ ເບ້ຍທີ່ແທ້ຈິງ	Swap ອັດຕາ	ໄລຍະການ ຊຳລະເງິນ
		ເງິນຕົ້ນ			ດອກເບ້ຍ	
1	1.500	45,59	ທັນວາ 2019	4,95%	Libor 6 ເດືອນ + 3,36%	ສອງຄັ້ງຕໍ່ປີ ຈາກ ມິຖຸນາ 2015 ເຖິງ ທັນວາ 2019
2	2.000	60,79	ທັນວາ 2021	5,20%	Libor 6 ເດືອນ + 3,61%	ສອງຄັ້ງຕໍ່ປີ ຈາກ ມິຖຸນາ 2015 ເຖິງ ທັນວາ 2021
3	3.000	91,18	ທັນວາ 2024	5,45%	Libor 6 ເດືອນ +3,795%	ສອງຄັ້ງຕໍ່ປີ ຈາກ ມິຖຸນາ 2015 ເຖິງ ທັນວາ 2024

17 ລາຍຈ່າຍຕ້ອງຈ່າຍ

	2016	2015
	(ລ້ານກີບ)	
ຄ່າພາກຫຼວງ ແລະ ອາກອນອື່ນໆ	94.208	73.337
ດອກເບ້ຍຕ້ອງຈ່າຍ	55.387	7.633
ອື່ນໆ	9.293	10.848
ລວມ	**158.888**	**91.818**

18 ລາຍຈ່າຍຈັດຕາມລັກສະນະເນື້ອໃນ

	2016	2015
	(ລ້ານກີບ)	
ຄ່າຫຼ້ຍຫ້ຽນ	434.047	225.442
ລາຍຈ່າຍໃຫ້ພະນັກງານ	54.147	54.554
ຄ່າສ້ອມແປງ ແລະ ບຳລຸງຮັກສາ	24.471	26.541
ລາຍຈ່າຍອາກອນເງິນປັນຜົນ	14.851	18.936
ອື່ນໆ	79.604	71.997
ລວມ	**607.120**	**397.470**

19 ລາຍຈ່າຍທາງການເງິນ

	2016	2015
	(ລ້ານກີບ)	
ລາຍຈ່າຍດອກເບ້ຍຈາກຮຸ້ນກູ້	121.889	87.757
ລາຍຈ່າຍດອກເບ້ຍເງິນກູ້ຈາກພາກສ່ວນທີ່ກ່ຽວຂ້ອງ	16.576	11.509
ລາຍຈ່າຍດອກເບ້ຍເງິນກູ້ຢືມ		
ຈາກສະຖາບັນການເງິນ	19.916	8.085
ອື່ນໆ	7.611	2.667
ລວມ	**165.992**	**110.018**
ລົບ: ລາຍຈ່າຍດອກເບ້ຍທີ່ຈັດເປັນຈ່າຍລ່ວງໜ້າ		
ສຳລັບລົງທຶນ	(11.074)	(48.081)
ສຸດທິ	**154.918**	**61.937**

20 ອາກອນກຳໄລ

ອີງຕາມສັນຍາສຳປະທານກັບລັດຖະບານ, ບໍລິສັດຈະຕ້ອງຈ່າຍອາກອນກຳໄລ ໃນອັດຕາ 10% ເພື່ອໃຫ້ສອດຄ່ອງກັບກົດໝາຍ. ນອກຈາກນີ້ບໍລິສັດຍັງໄດ້ຮັບນະໂຍບາຍ ຫຼຸດອັດຕາອາກອນກຳໄລນັບແຕ່ມື້ຈົດທະບຽນໃນຕະຫຼາດຫຼັກຊັບອີກ 5% ເປັນໄລຍະເວລາ 4 ປີ ຕາມດຳລັດຂອງປະທານປະເທດກ່ຽວກັບອາກອນກຳໄລຂອງບໍລິສັດໃນຕະຫຼາດຫຼັກຊັບ ເລກທີ 1/ປປທ, ລົງວັນທີ 28 ທັນວາ 2010.

ໃນໄຕມາດໜຶ່ງຂອງປີ 2015 ເປັນຕົ້ນມາ, ບໍລິສັດໄດ້ຍັນທຶກອາກອນກຳໄລໃນອັດຕາປັດຈຸບັນແມ່ນ 10% ຂອງກຳໄລສຸດທິ ຫຼັງຈາກທີ່ມີ ການປັບປຸງ ທີ່ບໍ່ໄດ້ຫັກຄ່າໃຊ້ຈ່າຍ ແລະ ອີງຕາມກົດໝາຍສ່ວຍສາອາກອນທີ່ມີຜົນບັງຄັບໃຊ້ ໃນວັນທີ 1 ຕຸລາ 2012 ຕາມການຄ້າງຮັບຄ້າງຈ່າຍ.

ບໍລິສັດບໍ່ຮັບຮູ້ອາກອນກຳໄລ ຂອງບໍລິສັດທີ່ຕ້ອງຈ່າຍ ຫຼື ຕ້ອງຮັບ ໃນຄວາມແຕກຕ່າງຊົ່ວຄາວ. ລາຍຈ່າຍອາກອນກຳໄລ ແມ່ນ ຮັບຮູ້ຕາມຜົນການດຳເນີນງານ ສຳລັບໄລຍະເວລາທີ່ກ່ຽວຂ້ອງ ແລະ ອັດຕາອາກອນທີ່ນຳໃຊ້.

ສົມທຽບຜົນຂອງອັດຕາອາກອນ

	2016		2015	
	ອັດຕາ (%)	*(ພັນບາດ)*	*ອັດຕາ (%)*	*(ພັນບາດ)*
ກຳໄລກ່ອນຈ່າຍອາກອນກຳໄລ		603.459		680.793
ອາກອນກຳໄລນຳໃຊ້ອັດຕາອາກອນນິຕິບຸກຄົນ	10,0	60.346	10,0	68.079
ລາຍຈ່າຍທີ່ບໍ່ສາມາດຫັກໄດ້ທາງອາກອນ	1,1	6.569	0,0	497
ກຳໄລຮຸ້ນ ຈາກໃນວິສາຫະຫົດຂາຮຸ້ນ ແລະ				
ບໍລິສັດຮຸ້ນສ່ວນ	(3,0)	(17.805)	(4,2)	(28.622)
ລວມ	8,1	**49.110**	6,5	**39.954**

21 ກຳໄລພື້ນຖານຕໍ່ຮຸ້ນ

ການຄຳນວນກຳໄລຕໍ່ຮຸ້ນຂັ້ນພື້ນຖານສຳລັບປີສິ້ນສຸດ ວັນທີ 31 ທັນວາ 2016 ແລະ 2015 ແມ່ນຄິດໄລ່ຈາກກຳໄລສຸດທິ ສຳລັບປີ ເປັນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ ແລະ ຈຳນວນຮຸ້ນສາມັນສະເລ່ຍ ລະຫວ່າງປີ ດັ່ງນີ້:

	2016	2015
		(ລ້ານກີບ)
ກຳໄລທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ	554.349	640.839
ຈຳນວນຮຸ້ນສາມັນທີ່ອອກຈຳໜ່າຍ *(ລ້ານຮຸ້ນ)*	1.679	1.404
ກຳໄລພື້ນຖານຕໍ່ຮຸ້ນ*(ກີບ)*	**330,11**	**456,44**

22 ເງິນປັນຜົນ

ປະຊຸມສາມັນຜູ້ຖືຮຸ້ນປະຈຳປີ, ຈັດຂຶ້ນໃນວັນທີ 25 ເມສາ 2016, ມີມັດຕິອະນຸມັດການຈ່າຍເງິນປັນຜົນລະຫວ່າງການປີ ສຳລັບຜົນກຳໄລສຸດທິ ສຳລັບຮອບໄລຍະເວລາ 1 ກໍລະກົດ ຫາ 31 ທັນວາ 2015 ເປັນຈຳນວນ 150 ກີບຕໍ່ຮຸ້ນ ລວມເປັນເງິນ ທັງໝົດ 251.890 ລ້ານກີບ. ເງິນປັນຜົນໄດ້ຖືກຈ່າຍໃນຊ່ວງເດືອນພຶດສະພາ 2016.

ໃນປະຊຸມຄະນະກຳມະການ ເມື່ອວັນທີ 24 ສິງຫາ 2016, ຄະນະກຳມະການບໍລິສັດ ໄດ້ມີມັດຕິອະນຸມັດຈ່າຍເງິນປັນຜົນລະຫວ່າງການຈາກກຳໄລສຸດທິງວດຫົກເດືອນ ຕັ້ງແຕ່ວັນທີ 1 ມັງກອນ ຫາ 30 ມິຖຸນາ 2016 ເປັນຈຳນວນ 130 ກີບຕໍ່ຮຸ້ນ ລວມເປັນເງິນທັງໝົດ 218.314 ລ້ານກີບ. ເງິນປັນຜົນແມ່ນຖືກຈ່າຍໃນເດືອນກັນຍາ 2016.

ໃນປະຊຸມຄະນະກຳມະການ ເມື່ອວັນທີ 24 ສິງຫາ 2015, ຄະນະກຳມະການບໍລິສັດ ໄດ້ມີມັດຕິອະນຸມັດຈ່າຍເງິນປັນຜົນລະຫວ່າງການຈາກກຳໄລສຸດທິງວດຫົກເດືອນ ຕັ້ງແຕ່ວັນທີ 1 ມັງກອນ ຫາ 30 ມິຖຸນາ 2015 ເປັນຈຳນວນ 110 ກີບຕໍ່ຮຸ້ນ ລວມເປັນເງິນທັງໝົດ 184.723 ລ້ານກີບ. ເງິນປັນຜົນແມ່ນຖືກຈ່າຍຊ່ວງເດືອນຕຸລາ 2015.

ປະຊຸມສາມັນຜູ້ຖືຮຸ້ນປະຈຳປີ, ຈັດຂຶ້ນໃນວັນທີ 29 ເມສາ 2015, ມີມັດຕິອະນຸມັດການຈ່າຍເງິນປັນຜົນລະຫວ່າງການປີ ສຳລັບຜົນກຳໄລສຸດທິ ສຳລັບຮອບໄລຍະເວລາ 1 ກໍລະກົດ ຫາ 31 ທັນວາ 2014 ເປັນຈຳນວນ 268 ກີບຕໍ່ຮຸ້ນ ລວມເປັນເງິນ ທັງໝົດ 328.626 ລ້ານກີບ. ເງິນປັນຜົນໄດ້ຖືກຈ່າຍໃນຊ່ວງເດືອນເມສາ 2015.

23 ເຄື່ອງມືທາງການເງິນ

ນະໂຍບາຍການບໍລິຫານຄວາມສ່ຽງທາງການເງິນ

ການດຳເນີນທຸລະກິດຂອງບໍລິສັດຈະປະເຊີນກັບຄວາມສ່ຽງດ້ານການເງິນທີ່ສຳຄັນເຊັ່ນ: ຜົນກະທົບຈາກອັດຕາແລກປ່ຽນເງິນຕາ, ອັດຕາດອກເບ້ຍ, ຄວາມສ່ຽງທາງດ້ານສິນເຊື່ອ ແລະ ຄວາມສ່ຽງດ້ານສະພາບຄ່ອງ.

ການຄຸ້ມຄອງຄວາມສ່ຽງໂດຍລວມຂອງບໍລິສັດ ທີ່ເນັ້ນໃສ່ເຮັດແນວໃດເຮັດໃຫ້ສິ່ງອັນຕະລາຍບໍ່ມຊ້ອນ ກະທົບຕໍ່ການດຳເນີນງານດ້ານການເງິນຂອງບໍລິສັດ ໂດຍພິຈາລະນາຄວາມຄຸ້ມຄ່າຂອງຕົ້ນທຶນທີ່ຕ້ອງລົງທຶນ.

ການບໍລິຫານຄວາມສ່ຽງ ໂດຍທົ່ວໄປຢູ່ພາຍໃຕ້ອຳນາດຂອງຄະນະຜູ້ບໍລິຫານ ພາຍໃຕ້ການຊີ້ນຳໆພາໂດຍສະພາບໍລິຫານ.

ຄວາມສ່ຽງການແລກປ່ຽນເງິນຕາຕ່າງປະເທດ

ບໍລິສັດ ດຳເນີນທຸລະກິດພາຍໃນປະເທດ ແຕ່ຍັງມີຄວາມສ່ຽງທາງດ້ານອັດຕາແລກປ່ຽນໃນສະກຸນເງິນໂດລາສະຫະລັດ, ເງິນເຢັນ ແລະ ເງິນບາດ. ຄວາມສ່ຽງຈາກອັດຕາແລກປ່ຽນ ເກີດຈາກການໂອນເງິນກູ້ຢືມ ແລະ ຮຸ້ນກູ້ ທີ່ເປັນເງິນຕາຕ່າງປະເທດ ແລະ ຈາກການຊື້ເຄື່ອງຈັກ ແລະ ອຸປະກອນຕ່າງໆ ທີ່ເປັນສະກຸນເງິນຕາຕ່າງປະເທດ.

ບໍລິສັດໃຊ້ສັນຍາ SWAP ເພື່ອປ້ອງກັນຄວາມສ່ຽງສຳລັບອັດຕາແລກປ່ຽນ ເຊິ່ງອາດຈະເກີດຂຶ້ນສຳລັບຮຸ້ນກູ້ຈຳນວນ 6.500 ລ້ານບາດ.

ວັນທີ 31 ທັນວາ 2016, ນອກຈາກທີ່ໄດ້ກ່າວມາຂ້າງເທິງນີ້ນ ຜູ້ບໍລິຫານບໍ່ມີນະໂຍບາຍເປັນທາງການ ແລະ ບໍ່ໄດ້ໃຊ້ເຄື່ອງມືທາງດ້ານການເງິນ ຫຼື ອານຸພັນ ເພື່ອທີ່ຈະຄວບຄຸມຄວາມສ່ຽງທາງດ້ານອັດຕາແລກປ່ຽນເງິນຕາຕ່າງປະເທດສຳລັບເງິນກູ້ຢືມ. ເຖິງຢ່າງໃດກໍຕາມ, ຜູ້ບໍລິຫານໄດ້ຕິດຕາມການເຄື່ອນໄຫວຂອງອັດຕາແລກປ່ຽນເງິນຕາຕ່າງປະເທດຢ່າງທັນເວລາ ແລະ ບາງທີ ຈະນຳໃຊ້ເຄື່ອງມືທາງດ້ານການເງິນ ຫຼື ອານຸພັນ ເພື່ອຈັດການກັບຄວາມສ່ຽງຕ່າງໆ ຖ້າຜູ້ບໍລິຫານຫາກເຫັນວ່າຈຳເປັນ. ດັ່ງນັ້ນ ການເພີ້ມຂຶ້ນ ຫຼື ຫຼຸດລົງ ຂອງອັດຕາແລກປ່ຽນເງິນຕາຕ່າງປະເທດນັ້ນ, ອາດສົ່ງຜົນກະທົບທີ່ມີຄວາມສຳຄັນ ໂດຍທຽບຖານ ຕໍ່ການດຳເນີນທຸລະກິດ, ຜົນການປະຕິບັດງານ, ເງື່ອນໄຂທາງດ້ານການເງິນ ແລະ ອື່ນໆ.

ອັດຕາຄວາມສ່ຽງດ້ານອັດຕາດອກເບ້ຍ

ຄວາມສ່ຽງຈາກອັດຕາດອກເບ້ຍເກີດຈາກການກູ້ຢືມ ແລະ ຮຸ້ນກູ້.

ເງິນກູ້ຢືມທີ່ອອກໃນອັດຕາທີ່ຜັນແປ ເຮັດໃຫ້ບໍລິສັດ ມີຄວາມສ່ຽງຈາກອັດຕາດອກເບ້ຍ. ບໍລິສັດວິໄຈຄວາມສ່ຽງຈາກອັດຕາດອກເບ້ຍໄວ້ຢ່າງທັນການ ແລະ ຍັງບໍ່ໄດ້ຕັດສິນໃຈໃຊ້ເຄື່ອງມືທາງດ້ານການເງິນ ຫຼື ຕາສານອະນຸພັນເພື່ອ ບໍລິຫານ ຄວາມສ່ຽງນັ້ນ.

ຮຸ້ນກູ້ທີ່ອອກເປັນເງິນບາດ ແລະ ເງິນໂດລາສະຫາລັດ ກັບອັດຕາດອກເບ້ຍຄົງທີ່. ບໍລິສັດໄດ້ເຮັດສັນຍາແລກປ່ຽນອັດຕາດອກເບ້ຍ ເພື່ອບໍລິຫານ ຄວາມສ່ຽງຈາກອັດຕາດອກເບ້ຍ. ບໍລິສັດ ໄດ້ເຮັດສັນຍາແລກປ່ຽນອັດຕາດອກເບ້ຍດ້ວຍການແປງອັດຕາຄົງທີ່ ເປັນອັດຕາດອກເບ້ຍລອຍຕົວ ສຳລັບດອກເບ້ຍທັງໝົດ ທີ່ເກີດຂຶ້ນຈາກຮຸ້ນກູ້

ຄວາມສ່ຽງດ້ານສິນເຊື່ອ

ບໍລິສັດຂາຍຜົນຜະລິດໃຫ້ກັບ ຟຟລ ເຊິ່ງເປັນຜູ້ຖືຮຸ້ນຫຼັກ, ແລະ ຟຟລ ເປັນວິສາຫະກິດຂອງລັດ ທີ່ເຄື່ອນໄຫວພາຍໃຕ້ ການຄຸ້ມຄອງ ຂອງກະຊວງການເງິນ ແລະ ເປັນລູກຄ້າລາຍໃຫຍ່ລາຍດຽວ. ຄວາມສ່ຽງໄດ້ຖືກພິຈາລະນາຢ່າງເຂັ້ມງວດ ຫຼື ຂຶ້ນກັບ ລູກຄ້າລາຍດຽວ ເຊິ່ງຜູ້ບໍລິຫານ ໄດ້ມີການປະເມີນ ແລະ ສາມາດຄວບຄຸມໄດ້.

ເງິນສິດ ແລະ ທຽບເທົ່າເງິນສິດ ແມ່ນຝາກໄວ້ກັບທະນາຄານ ທີ່ມີຊື່ສຽງ ແລະ ມີຄວາມໜ້າເຊື່ອຖື.

ຄວາມສ່ຽງດ້ານສະພາບຄ່ອງ

ການຄຸ້ມຄອງຄວາມສ່ຽງ ມີຄວາມຮອບຄອບຢ່າງພຽງພໍ ໃນການນຳໃຊ້ເງິນສິດລົງທຶນໄລຍະສັ້ນ. ບໍລິສັດ ຍັງຢູ່ໃນໄລຍະເລີ່ມຕົ້ນ, ຜູ້ບໍລິຫານຂອງບໍລິສັດ ໄດ້ດຳເນີນການວາງແຜນການເງິນສິດ ເພື່ອຊ່ວຍໃນການຄຸ້ມຄອງຄວາມສ່ຽງ ແລະ ໝັ້ນໃຈວ່າມີສະພາບຄ່ອງຢ່າງພຽງພໍ ສຳລັບການດຳເນີນການໄລຍະສັ້ນທີ່ຈຳເປັນລວມທັງ ການຊຳລະເງິນ ກູ້ຢືມຄືນ ແລະ ການວາງແຜນເງິນລົງທຶນໄລຍະຍາວ.

ການບໍລິຫານຄວາມສ່ຽງດ້ານທຶນ

ວັດຖຸປະສົງໃນການບໍລິຫານເງິນທຶນ ຂອງບໍລິສັດໃຫ້ຢູ່ໃນລະດັບປອດໄພເຮັດໃຫ້ມີຄວາມສາມາດດຳເນີນງານຢ່າງຕໍ່ເນື່ອງຈາກແນໃສ່ຊຳລະຄືນຜົນປະໂຫຍດໃຫ້ແກ່ຜູ້ຖືຮຸ້ນ ແລະ ຜູ້ມີສ່ວນຮ່ວມອື່ນໆ ແລະ ສືບຕໍ່ຮັກສາໂຄງສ້າງຂອງທຶນ, ຫຼຸດຜ່ອນຄ່າໃຊ້ຈ່າຍຂອງທຶນ.

ເພື່ອຮັກສາ ຫຼື ປັບປຸງໂຄງສ້າງເງິນທຶນ ເພື່ອສະໜັບສະໜຸນການດຳເນີນງານ ແລະ ແຜນການລົງທຶນ, ອາດຢືມເງິນທຶນໃໝ່, ອອກຮຸ້ນໃໝ່, ຊອກຫາເງິນກູ້ຢືມໃໝ່ແທນແຫຼ່ງເງິນກູ້ເກົ່າ ແລະ ດັດແກ້ຈຳນວນເງິນປັນຜົນທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນໃນອະນາຄົດ.

24 ພາລະຜູກພັນກັບພາກສ່ວນທີ່ບໍ່ກ່ຽວຂ້ອງ

	2016	2015
	(ລ້ານກີບ)	
ພາລະຜູກພັນທີ່ກ່ຽວຂ້ອງກັບທຶນ		
ສັນຍາແຕ່ບໍ່ໄດ້ລະບຸໄວ້ ສຳລັບ:		
ອອກແບບ, ກໍ່ສ້າງ ແລະ ຕິດຕັ້ງເຄື່ອງຈັກ ແລະ ອຸປະກອນ ແລະ ໂຄງການກໍ່ສ້າງ	372.791	294.582
ພາລະຜູກພັນຕາມສັນຍາເຊົ່າດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້		
ບໍ່ເກີນ 1 ປີ	256	225
ເກີນກວ່າ 1 ປີ ແລະ ບໍ່ເກີນ 5 ປີ	1.064	1.045
ເກີນກວ່າ 5 ປີ	6.628	6.889
ລວມ	**7.948**	**8.159**

ໃນວັນທີ 31 ທັນວາ 2016, ບໍລິສັດລູກ ມີພາລະຜູກພັນຕາມສັນຍາການກໍ່ສ້າງ ແລະ ຈັດຊື້ ເປັນຈຳນວນ 272 ລ້ານໂດລາ ສະຫະລັດ ຫຼື ທຽບເທົ່າເງິນກີບ 2.231 ຕື້ກີບ.

ສັນຍາການເຊົ່າທີ່ດິນ

ອີງຕາມເອກະສານແຈ້ງການຂອງສຳນັກງານນາຍົກ ເລກທີ 180 ລົງວັນທີ 13 ທັນວາ 2010 ອະນຸມັດໃຫ້ບໍລິສັດມີສິດນຳໃຊ້ທີ່ດິນ ເພື່ອການດຳເນີນກິດຈະການຜະລິດໄຟຟ້າ. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ບໍລິສັດ ກຳລັງຢູ່ໃນການສຳຫຼວດ ແລະ ຮ່າງສັນຍາເຊົ່າທີ່ດິນ. ຄ່າເຊົ່າຈະຖືກບັນທຶກ ເມື່ອທັງສອງຝ່າຍຕົກລົງເຫັນດີກ່ຽວກັບຂໍ້ກຳນົດ ແລະ ເງື່ອນໄຂສັນຍາເຊົ່າທີ່ດິນ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ບໍລິສັດໄດ້ເຊັນສັນຍາເຊົ່າທີ່ດິນ (ສັນຍາ) ໃນວັນທີ 30 ມັງກອນ 2014. ອີງຕາມສັນຍາ, ບໍລິສັດມີສິດໃນການນຳໃຊ້ທີ່ດິນ 30 ປີ ສຳລັບການດຳເນີນທຸລະກິດ, ໄດ້ເລີ່ມຕົ້ນຈາກວັນທີ ທີ່ເຊັນສັນຍາ.

ຂໍ້ຕົກລົງທີ່ສຳຄັນອື່ນໆ ແລະ ການຮ່ວມມື

ສັນຍາສຳປະທານ ("CA")

ໃນວັນທີ 15 ທັນວາ 2010 ບໍລິສັດ ໄດ້ເຮັດສັນຍາສຳປະທານ ເຊິ່ງມີການແກ້ໄຂສັນຍາສຳປະທານໃໝ່ ໃນວັນທີ 24 ກໍລະກົດ 2013 ("CA") ກັບ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("GOL") ເຊິ່ງຕາງໜ້າໂດຍກະຊວງ ແຜນ ການ ແລະ ການລົງທຶນ ("MPI"). ສັນຍາສຳປະທານແມ່ນໄດ້ກຳນົດໃຫ້ເວລາສຳປະທານ 30 ປີ ແລະ ສາມາດຕໍ່ອາຍຸສຳປະ ທານໄດ້ອີກ 10 ປີ ສຳລັບໂຄງການໂຮງໄຟຟ້າ ຄືດັ່ງທີ່ໄດ້ອະທິບາຍໃນບົດອະທິບາຍຂໍ້ 1(ຂ) ເມື່ອສິ້ນສຸດໄລຍະເວລາສຳປະ ທານແລ້ວ ບໍລິສັດຈະຕ້ອງໂອນກຳມະສິດ ແລະ ຜົນປະໂຫຍດຂອງໂຄງການ ລວມທັງຊັບສິນຕ່າງໆ ທີ່ຄອບຄອງ ໂດຍບໍລິສັດ ໃນການດຳເນີນງານ ໃຫ້ແກ່ລັດຖະບານ ຫຼື ຜູ້ຕາງໜ້າໂດຍບໍ່ມີຄ່າໃຊ້ຈ່າຍໃດໆ ດັ່ງທີ່ໄດ້ກຳນົດໄວ້ໃນສັນຍາສຳປະທານ.

ພາຍໃຕ້ສັນຍາສຳປະທານນີ້, ລັດຖະບານຍິນຍອມໃຫ້ບໍລິສັດມີສິດພຽງແຕ່ຜູ້ດຽວໃນຊ່ວງໄລຍະເວລາໃນການສຳປະທານ. ສິດ ທິສຳຄັນພາຍໃຕ້ສັນຍາສຳປະທານລວມມີ 1) ສິດເປັນເຈົ້າຂອງດຳເນີນງານ ແລະ ບຳລຸງຮັກສາສິ່ງອຳນວຍຄວາມສະດວກ ຂອງ ໂຄງການ ແລະ ຊັບສິນບັດອື່ນໆ ຫຼື ຊັບສິນທີ່ບໍລິສັດໄດ້ມາ, 2) ສິດນຳໃຊ້ເຂື່ອນ, ສັນຍາເຂື່ອນ ແລະ ແມ່ນ້ຳ, 3) ສິດໃນການ ຂາຍໄຟຟ້າໃຫ້ກັບລັດວິສະຫະກິດໄຟຟ້າລາວ, 4) ເສຍອາກອນກຳໄລ 10%. 5) ຄ່າທຳນຽມ (ຄ່າພາກຫຼວງ) 1% ຈາກຍອດ ຂາຍໄຟຟ້າ.

ນອກຈາກນີ້, ບໍລິສັດ ໄດ້ຖືກຮຽກຮ້ອງໃຫ້ປະຕິບັດ ຕາມຫຼາຍຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ເຊິ່ງລວມມີຢູ່ໃນສັນຍາສຳ ປະທານ ສະບັບນີ້, ແຕ່ບໍ່ຈຳກັດການກໍ່ສ້າງ, ການປະກອບທຶນ, ຄ່າທຳນຽມ, ສຸຂະພາບ ແລະ ຄວາມປອດໄພ, ອາກອນ ແລະ ຄ່າເຊົ່າທີ່ດິນ, ອາກອນມູນຄ່າເພີ່ມ ໃນສ່ວນຂອງອຸປະກອນໄຟຟ້າ ທີ່ເຮັດໃຫ້ ຟຟລ.

ສັນຍາຮ່ວມມື ແລະ ການສ້າງຕັ້ງຂອງບໍລິສັດ ນ້ຳພຸນ ພາວເວີ ຈຳກັດ

ໃນກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 4/2015 ໄດ້ຈັດຂຶ້ນໃນວັນທີ 21 ກັນຍາ 2015 ສະພາບໍລິຫານ ໄດ້ ຕົກລົງເຊັນບົດບັນທຶກຄວາມເຂົ້າໃຈ ສ້າງຕັ້ງບໍລິສັດ ນ້ຳພຸນ ພາວເວີ ຈຳກັດ ລະຫວ່າງ ບໍລິສັດ ແລະ ບໍລິສັດ SOK Corporation.

ບົດບັນທຶກຄວາມເຂົ້າໃຈ ("MOU") ສຳລັບໂຄງການເຂື່ອນໄຟຟ້າ ເຊກອງ 5.

ໃນວັນທີ 8 ກັນຍາ 2016, ບໍລິສັດ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບ Inter Rao Engineering, RUSSIA ແລະ A-RKSENA Limited Liability Company, ("RUSSIA"), ເພື່ອສ້າງຕັ້ງໂຄງການ ເຂື່ອນໄຟຟ້າ ເຊກອງ 5.

ສັນຍາຜູ້ຖືຮຸ້ນ ("SA") ສຳລັບໂຄງການເຂື່ອນໄຟຟ້າ ນ້ຳດີກ 1

ວັນທີ 5 ກັນຍາ 2016, ບໍລິສັດ ໄດ້ເຊັນສັນຍາຜູ້ຖືຮຸ້ນກັບບໍລິສັດ National Consulting Group Sole Company Limited of ໂຄງການເຂື່ອນໄຟຟ້າ ນ້ຳດີກ 1.

ການຮ່ວມມື ສຳລັບໂຄງການເຂື່ອນໄຟຟ້າພະລັງນ້ຳ ປາກແບງ

ວັນທີ 7 ກັນຍາ 2016, ບໍລິສັດໄດ້ເຊັນສັນຍາຮ່ວມມືກັບ ບໍລິສັດ China Datang Overseas Investment Co.,Ltd. ຂອງໂຄງການ ເຂື່ອນໄຟຟ້າພະລັງນ້ຳ ປາກແບງ.

25 ພາກສ່ວນທີ່ກ່ຽວຂ້ອງ

ຄວາມສຳພັນກັບກິດຈະການທີ່ກ່ຽວຂ້ອງ ມີດັ່ງນີ້:

ຊື່ຂອງສຳນັກງານ	ສ້າງຕັ້ງຂຶ້ນ ໃນປະເທດ/ສັນຊາດ	ລັກສະນະຄວາມສຳພັນ
ລັດວິສາຫະກິດ ໄຟຟ້າລາວ	ລາວ	ບໍລິສັດແມ່
ບໍລິສັດ ນ້ຳບີ ພາວເວີ້ ຈຳກັດ	ລາວ	ບໍລິສັດລູກ
ບໍລິສັດ ອີດີແອລ-ເຈັນ ໂຊລ່າ ພາວເວີ້	ລາວ	ບໍລິສັດລູກ
ບໍລິສັດ ໄຟຟ້າຫ້ວຍເຫາະ ຈຳກັດ	ລາວ	ບໍລິສັດຮຸ້ນສ່ວນ

ນະໂຍບາຍການກຳນົດລາຄາໂດຍສະເພາະການດຳເນີນງານ ສຳລັບແຕ່ລະລາຍການເປັນໄປ ດັ່ງລຸ່ມນີ້:

ລາຍການ	ນະໂຍບາຍລາຄາ
ຂາຍໄຟຟ້າ	ລາຄາຕາມສັນຍາ
ລາຍຮັບດອກເບ້ຍ / ລາຍຈ່າຍດອກເບ້ຍ	ອັດຕາດອກເບ້ຍຕາມສັນຍາ

ລາຍການເຄື່ອນໄຫວທີ່ສຳຄັນສຳລັບປີສິ້ນສຸດວັນທີ 31 ທັນວາ 2016 ແລະ 2015 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

	2016	2015
	(ລ້ານກີບ)	
ບໍລິສັດແມ່		
ຂາຍ	1.241.181	847.759
ເງິນປັນຜົນຈ່າຍ	352.653	436.840
ລາຍຈ່າຍດອກເບ້ຍ	16.576	11.509

ຍອດຄົງເຫຼືອໃນວັນທີ 31 ທັນວາ 2016 ແລະ 31 ທັນວາ 2015 ກັບພາກສ່ວນທີ່ກ່ຽວຂ້ອງມີ ດັ່ງລຸ່ມນີ້:

	2016	2015
	(ລ້ານກີບ)	
ລາຍຈ່າຍລ່ວງໜ້າສຳລັບການລົງທຶນ		
ບໍລິສັດແມ່		
ລັດວິສາຫະກິດ ໄຟຟ້າລາວ	3.109.676	3.642.566
ຊັບສິນບໍ່ໝຸນວຽນອື່ນໆ		
ບໍລິສັດແມ່		
ລັດວິສາຫະກິດ ໄຟຟ້າລາວ	35.000	65.943
ບໍລິສັດລູກ		
ບໍລິສັດ ອີດີແອວ-ເຈັນ ໂຊລ່າ ພາວເວີ້	35.955	-
ບໍລິສັດຮຸ້ນສ່ວນ		
ບໍລິສັດ ໄຟຟ້າຫ້ວຍເຫາະ ຈຳກັດ	3.232	3.255
ລວມ	**74.187**	**69.198**

	2016	2015
	(ລ້ານກີບ)	
ການຄ້າ ແລະ ລາຍຮັບອື່ນໆ		
ບໍລິສັດແມ່		
ລັດວິສາຫະກິດ ໄຟຟ້າລາວ	486.630	301.672
ບໍລິສັດລູກ		
ບໍລິສັດ ນ້ຳຍົ ພາວເວີ້ ຈຳກັດ	493	-
ລວມ	**487.123**	**301.672**
ໜີ້ຕ້ອງຈ່າຍພາຍໃຕ້ສັນຍາສຳປະທານ*		
ບໍລິສັດແມ່		
ລັດວິສາຫະກິດ ໄຟຟ້າລາວ	3.957.400	-
ເງິນກູ້ຍືມໄລຍະຍາວ		
ບໍລິສັດແມ່		
ລັດວິສາຫະກິດ ໄຟຟ້າລາວ		
- ໄລຍະສັ້ນ	132.173	100.247
- ໄລຍະຍາວ	444.651	402.672
ລວມ	**576.824**	**502.919**

ການປ່ຽນແປງເງິນກູ້ຢືມ ຈາກພາກສ່ວນທີ່ກ່ຽວຂ້ອງລະຫວ່າງປີສິ້ນສຸດ 31 ທັນວາ 2016 ແລະ 2015 ມີດັ່ງລຸ່ມນີ້:

	2016	2015
	(ລ້ານກີບ)	
ວັນທີ 1 ມັງກອນ	502.919	598.782
ເພີ່ມ	200.362	-
ຊຳລະຄືນ	(132.206)	(100.325)
ຜົນກະທົບຈາກການແປງສະກຸນເງິນ	5.749	4.372
ວັນທີ 31 ທັນວາ	**576.824**	**502.919**

* ຕາມບັນທຶກການຕົກລົງໃນການໂອນຊັບສິນຂອງໂຄງການໂຮງໄຟຟ້າ ຫ້ວຍລຳພັນໃຫຍ່ ແລະ ນ້ຳຄານ 2 ລະຫວ່າງບໍລິສັດ ແລະ ຜຟລ, ບໍລິສັດໄດ້ຮັບຮູ້ຊັບສິນເຫຼົ່ານັ້ນພາຍໃຕ້ສັນຍາສຳປະທານ ໃນເອກະສານລາຍງານການເງິນ ສຳລັບປີການບັນຊີ ສິ້ນສຸດ ວັນທີ 31 ທັນວາ 2016. ກ່ອນໜ້າວັນທີ່ໂອນຊັບສິນ, ບໍລິສັດໄດ້ຈ່າຍເງິນລົງທຶນລ່ວງໜ້າເປັນ ຈຳນວນ 664.721 ລ້ານ ກີບ. ຕົ້ນທຶນທີ່ຍັງເຫຼືອຂອງຊັບສິນ ຮັບຮູ້ເປັນໜີ້ສິນຕ້ອງຈ່າຍພາຍໃຕ້ສັນຍາສຳປະທານ. ໃນປະຈຸບັນ, ສັນຍາເງິນກູ້ ໄລຍະຍາວ ລະຫວ່າງ ຜ-ຜຟລ, ຜຟລ ແລະ ຜູ້ໃຫ້ກູ້ກຳລັງຢູ່ໃນຂັ້ນຕອນການກະກຽມ. ສັນຍາຈະໂອນຜາລະຜູກພັນ ໃນການຊຳລະ ຄືນເງິນກູ້ຢືມໄລຍະຍາວ ທີ່ກ່ຽວຂ້ອງກັບໂຄງການໂຮງໄຟຟ້າພະລັງນ້ຳ ຈາກ ຜຟລ ໄປຍັງ ຜ-ຜຟລ.

ສັນຍາທີ່ສຳຄັນຕ່າງໆກັບພາກສ່ວນທີ່ກ່ຽວຂ້ອງ

ສັນຍາຮັບຊື້ໄຟຟ້າ ("PPA")

ວັນທີ 15 ທັນວາ 2010 ແລະ ສະບັບປັບປຸງ ວັນທີ 9 ທັນວາ 2011, ບໍລິສັດໄດ້ເຮັດສັນຍາຊື້-ຂາຍ ໄຟຟ້າ ("PPA") ກັບ ຜຟລ. ສັນຍາດັ່ງກ່າວມີໄລຍະເວລາ 30 ປີ, ສາມາດຕໍ່ອາຍຸໄດ້ 10 ປີ ຄືກັນກັບສັນຍາສຳປະທານ.

ລາຍຮັບຕົ້ນຕໍຂອງບໍລິສັດ ແມ່ນການຂາຍກະແສໄຟຟ້າໃຫ້ກັບ ຜຟລ ຕາມສັນຍາຊື້ຂາຍໄຟຟ້າ ທີ່ຜະລິດຈາກຊັບສິນທີ່ມີຢູ່. ກະແສໄຟຟ້າທີ່ຂາຍແມ່ນອີງຕາມອັດຕາຄ່າໄຟຟ້າທີ່ໄດ້ຕົກລົງກັນ ເຊິ່ງກຳນົດໄວ້ໃນສັນຍາຊື້-ຂາຍໄຟຟ້າ ສຳລັບແຕ່ລະຊັບສິນ ທີ່ໃຊ້ໃນການຜະລິດໄຟຟ້າ.

ພາຍໃຕ້ສັນຍາຊື້-ຂາຍໄຟຟ້າ, ບໍລິສັດມີພັນທະຕ້ອງປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂ ດັ່ງຕໍ່ໄປນີ້ 1) ຮັບຜິດຊອບໃນການດຳເນີນງານ ແລະ ບຳລຸງຮັກສາ ກຳລັງການຜະລິດ ພາຍໃຕ້ການດຳເນີນງານປົກກະຕິ ທີ່ໄດ້ຕົກລົງໄວ້ຕະຫຼອດໄລຍະຂອງ ສັນຍາຊື້-ຂາຍໄຟຟ້າ, 2) ບໍ່ໃຫ້ພາກສ່ວນທີ່ສາມມີສິດໃນການສະໜອງ ຫຼື ໃຊ້ພະລັງງານໄຟຟ້າທີ່ເກີດຈາກສິ່ງອຳນວຍຄວາມສະດວກໃດໆ ໃນຕະຫຼອດໄລຍະເວລາ ສັນຍາຊື້-ຂາຍ ໄຟຟ້າ, 3) ມີພັນທະວາງແຜນຜະລິດໄຟຟ້າຈາກສະຖານີ ຫຼື ຕາຂ່າຍໄຟຟ້າ ຂອງ ຟຟລ ກ່ອນການຕົກລົງຊື້-ຂາຍໃນແຕ່ລະປີ ແລະ 4) ເກັບເງິນຈາກ ຟຟລ ຈາກການຈຳໜ່າຍໄຟຟ້າສຸດທິ, 5) ຟຟລ ສາມາດແບ່ງຈ່າຍເປັນຜຸດ ແລະ ຫັກທົດແທນກັບເງິນປັນຜົນທີ່ຕ້ອງຈ່າຍທີ່ບໍລິສັດປະກາດ ໃນແຕ່ລະປີ, 6) ເຫັນດີສະໜອງຄວາມສະດວກ ໃນການສະໜອງໄຟຟ້າໃຫ້ ຟຟລ ບໍ່ຕ່ຳກວ່າ 90% ທີ່ໄດ້ແຈ້ງໄວ້ໂດຍລວມເຖິງການຜະລິດໄຟຟ້າ ທັງໝົດຂອງການສົ່ງໄຟຟ້າ ແລະ ການລົ້ມແຫຼວຂອງຜົນຜະລິດໄຟຟ້າ ຟຟລ ໄດ້ຕົກລົງຊື້ ຈາກບໍລິສັດບໍ່ຕ່ຳກວ່າ 90%, 7) ຖ້າຫາກວ່າ ອັດຕາແລກປ່ຽນຕາມທີ່ໄດ້ຕົກລົງໃນສັນຍາມີການປ່ຽນແປງ ບໍລິສັດທັງສອງສາມາດຕົກລົງ ອັດຕາຄ່າໄຟຟ້າ ຄືນໃໝ່.

ການໂອນພະນັກງານຈາກ ຟຟລ

ພາຍຫຼັງຈາກວັນທີ່ຈົດທະບຽນເປັນບໍລິສັດ, ພະນັກງານຂອງ ຟຟລ ໂດຍສະເພາະແມ່ນຜູ້ທີ່ປະຕິບັດງານ ຊັບສິນໃນການຜະລິດ ທີ່ມີຢູ່ແລ້ວ ແມ່ນໄດ້ຮັບການຍົກຍ້າຍ ແລະ ເຮັດວຽກໃຫ້ກັບບໍລິສັດ. ໃນວັນທີ 28 ກຸມພາ 2011, ໄດ້ໂອນຍ້າຍພະນັກງານ ເຊັນສັນຍາໃໝ່ກັບບໍລິສັດ ແລະ ພັນທະຜົນປະໂຫຍດທີ່ພະນັກງານຈະໄດ້ຮັບຈາກ ຟຟລ ແມ່ນບໍລິສັດສືບຕໍ່ ໃຫ້ຄືກັນກັບທີ່ ຟຟລ ສະໜອງໃຫ້.

26 ເຫດການທີ່ເກີດຂຶ້ນພາຍຫຼັງວັນທີ່ເອກະສານລາຍງານການເງິນ

ໃນວັນທີ 9 ມັງກອນ 2017, ບໍລິສັດໄດ້ລົງທຶນໃນບໍລິສັດເຂື່ອນໄຟຟ້ານ້ຳດີກ 1 ຈຳກັດ, ເຊິ່ງເປັນບໍລິສັດຮຸ້ນສ່ວນ ສ້າງຕັ້ງໃນ ສປປ ລາວ, ໂດຍມີເງິນສົດເປັນຈຳນວນ 0,2 ລ້ານໂດລາ ຫຼື ທຽບເທົ່າກັບ 1.634 ລ້ານກີບ. ບໍລິສັດຮຸ້ນສ່ວນ ເປັນທຸລະກິດ ຜະລິດ ແລະ ຈຳໜ່າຍກະແສໄຟຟ້າ.

ໃນວັນທີ 3 ກຸມພາ 2017, ບໍລິສັດໄດ້ລົງນາມໃນສັນຍາຊຳລະໜີ້ຜິ່ມເຕີມ ("ສັນຍາ") ເປັນຈຳນວນເງິນທັງໝົດ 482 ລ້ານໂດລາ ຫຼື ທຽບເທົ່າ 3.957.400 ລ້ານກີບ ກັບ ຟຟລ. ຟຟລ ເປັນຜູ້ກູ້ເງິນຕາມໂຄງການເຂື່ອນໄຟຟ້າ ນ້ຳຄານ 2 ແລະ ໂຄງການເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ພາຍໃຕ້ສັນຍາເງິນກູ້ຍ່ອຍ ເລກທີ. 0227/ ຟຟລ ແລະ 0220/ຟຟລ, ລົງວັນທີ 21 ມັງກອນ 2013 ກັບລັດຖະບານຂອງ ສປປ ລາວ ("ລັດຖະບານ") ເຊິ່ງກອງທຶນຕົ້ນສະບັບແມ່ນສະໜອງໃຫ້ໂດຍ ທະນາຄານ ສົ່ງອອກ - ນຳເຂົ້າ ຂອງປະເທດ ຈີນ (ຜູ້ໃຫ້ກູ້) ແລະ ຖືກສ້າງຂຶ້ນໂດຍຜ່ານລັດຖະບານ. ນອກຈາກການໂອນຊັບສິນ ທັງສອງຝ່າຍຕົກລົງເຫັນດີວ່າ ບໍລິສັດຈະຊຳລະເງິນໃຫ້ກັບ ຟຟລ ເທົ່າກັນກັບທີ່ ຟຟລ ຈ່າຍເງິນໃຫ້ລັດຖະບານ, ເພື່ອຊຳລະໜີ້ໃຫ້ແກ່ຜູ້ໃຫ້ກູ້ຍືມ ຕາມສັນຍາເດີມ. ການກູ້ຍືມເຫຼົ່ານີ້ບໍ່ມີຫຼັກຄ้ำປະກັນ ແລະ ບໍ່ມີພາລະຜູກພັນອື່ນໆ ນອກຈາກການຊຳລະໜີ້ທີ່ຈຳເປັນຕາມ ກຳນົດເວລາທີ່ຕົກລົງໄວ້.

ໃນການປະຊຸມຄະນະກຳມະການຂອງບໍລິສັດເມື່ອວັນທີ 17 ມີນາ 2017, ຄະນະກຳມະການບໍລິສັດມີມັດຕິເຫັນດີໃຫ້ສະເໜີໃນກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຂອງບໍລິສັດເພື່ອພິຈາລະນາອະນຸມັດການຈ່າຍເງິນປັນຜົນກາງປີ ສຳລັບຫົກເດືອນຊ່ວງໄລຍະເວລາ 1 ກໍລະກົດ 2016 ເຖິງ 31 ທັນວາ 2016 ໃນອັດຕາ 160 ກີບຕໍ່ຮຸ້ນ ເຊິ່ງເປັນຈຳນວນເງິນທັງໝົດ 268.689 ລ້ານກີບ. ເງິນປັນຜົນ ດັ່ງກ່າວນີ້ຕ້ອງໄດ້ຮັບການອະນັດຈາກກອງປະຊຸມສາມັນຂອງຜູ້ຖືຮຸ້ນປະຈຳປີຂອງບໍລິສັດທີ່ຈັດຂຶ້ນໃນເດືອນເມສາ 2017.

27 ການຈັດປະເພດລາຍການໃໝ່ຂອງບັນຊີ

ບາງລາຍການໃນເອກະສານລາຍງານການເງິນສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2015 ໄດ້ມີການຈັດປະເພດໃໝ່ເພື່ອໃຫ້ສອດຄ່ອງກັບການສະແດງລາຍການໃນເອກະສານລາຍງານການເງິນສຳລັບປີການບັນຊີສິ້ນສຸດວັນທີ 31 ທັນວາ 2016 ດັ່ງນີ້:

	2015		
	ກ່ອນຈັດປະເພດ	ຈັດປະເພດ *(ລ້ານກີບ)*	ຫຼັງຈັດປະເພດ.
ໃບສະຫຼຸບຊັບສິນບັດ			
ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ	373.684	(69.199)	304.485
ຊັບສິນພາຍໃຕ້ສັນຍາສຳປະທານ	4.342.730	400	4.343.130
ຊັບສິນທີ່ບໍ່ໝຸນວຽນອື່ນໆ	47.444	69.199	116.643
ຊັບສິນໝຸນວຽນອື່ນໆ	7.086	(400)	6.686
		-	

ການຈັດປະເພດລາຍການໃໝ່ໄດ້ເຮັດຂຶ້ນ ເນື່ອງຈາກຜູ້ບໍລິຫານເຫັນວ່າ ການຈັດປະເພດຄືນໃໝ່ມີຄວາມເໝາະສົມກັບທຸລະກິດຂອງບໍລິສັດ.

28 ຂໍ້ມູນເພີ່ມເຕີມ

ບໍລິສັດໄດ້ນຳສະເໜີໃບລາຍງານຜົນໄດ້ຮັບ ທີ່ຍັງບໍ່ໄດ້ກວດສອບ ສຳລັບຮອບເວລາສາມເດືອນສິ້ນສຸດວັນທີ 31 ທັນວາ 2016 ພາຍໃຕ້ໝາຍເຫດເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2016. ເພື່ອປະຕິບັດຕາມລະບຽບໃນການລາຍງານ ແລະ ການເປີດເຜີຍຂໍ້ມູນ ທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບລາວ.

ສັງລວມໃບລາຍງານຜົນໄດ້ຮັບ (ທົບທວນຄືນ)
ສຳລັບຮອບເວລາ ສາມເດືອນສິ້ນສຸດວັນທີ 31 ທັນວາ 2016

	31 ທັນວາ 2016 *(ລ້ານກີບ)* *(ທົບທວນຄືນ)*
ຂາຍ	286.325
ຕົ້ນທຶນໃນການຂາຍ	(120.011)
ກຳໄລລວມ	166.314
ລາຍຮັບອື່ນໆ	4.737
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ	(54.477)
ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນ	(63.216)
ກຳໄລຂອງຮຸ້ນຈາກເງິນລົງທຶນ ໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	57.122
ກຳໄລຈາກການດຳເນີນງານ	**110.480**
ລາຍຈ່າຍທາງການເງິນ	(71.086)
ກຳໄລກ່ອນຫັກອາກອນກຳໄລ	**39.394**
ລາຍຈ່າຍອາກອນກຳໄລ	(4.454)
ກຳໄລສຸດທິໃນຮອບເວລາ	**34.940**

EDL-Generation Public Company

Financial statements for the year ended
31 December 2016
and
Independent auditors' report

KPMG Lao Co.,Ltd.
3rd - 4th Floor, 37 K.P. Tower
23 Singha Road, Ban Phonexay,
Saysettha District, P.O. Box 6978
Vientiane Capital, Lao PDR
Tel +856 (21) 454240-7

ບໍລິສັດ ເຄພີເອັມຈີລາວ ຈຳກັດ
ຊັ້ນ 3-4, 37 ຕຶກ ເຄພີທາວເວີ
ຖະໜົນ 23 ສິງຫາ, ບ້ານໂພນໄຊ,
ເມືອງໄຊເສດຖາ, ຕູ້ ປ.ນ. 6978,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ : +856 (21) 454240-7

Independent auditors' report

To Board of Directors and Shareholders of EDL-Generation Public Company

Opinion

We have audited the financial statements of EDL-Generation Public Company (the "Company"), which comprise the statement of financial position as at 31 December 2016, and the statements of income, changes in equity and cash flows for the year then ended, and notes to the financial statements, including significant accounting policies and other explanatory information.

In our opinion, the accompanying financial statements are prepared, in all material respects in accordance with the accounting policies as described in Notes 2 and 3 to the financial statements.

Basis of Opinion

We conducted our audit in accordance with International Standards on Auditing (ISAs). Our responsibilities under those standards are further described in the *Auditors' Responsibilities for the Audit of the Financial Statements* section of our report. We are independent of the Company in accordance with the ethical requirements that are relevant to our audit of the financial statements, and we have fulfilled our ethical responsibilities in accordance with these requirements. We believe that the audit evidence we have obtained is sufficient and appropriate to provide a basis for our opinion.

Key Audit Matters

Key audit matters are those matters that, in our professional judgment, were of most significance in our audit of the financial statements of the current period. These matters were addressed in the context of our audit of the financial statements as a whole, and in forming our opinion thereon, and we do not provide a separate opinion on these matters.

Completeness of provisions and liabilities	
The key audit matters	**How the matter was addressed in the audit**
The provisions for settlement of major overhaul expenses related to assets under concession involves complexity due to the various hydropower plant locations, decentralized procurement procedure and different in accounting systems. Management considers the probability and amount of the expected settlement provision based on the business projection plans, logs of maintenance agreements and third party settlement information to determine the completeness of provision and liabilities as at 31 December 2016. The completeness of provision and liabilities are an area of focus and key audit matter due to the materiality of transactions and the significant complexities involved in determining and obtaining supporting evidence.	Our audit procedures in this area included, among others: - Understanding and assessing risk the process of procurement and accounting activities including related internal controls and monitoring activities are in place; - Assessing accounting policy relevant to recognition of provisions and liabilities; - Inspecting payment documents subsequent after the reporting period until the date of auditor report; - Reconciliation between business projection plan which was approved by management, logs of maintenance agreements and actual project incurred during the year; and - Sending confirmation and checking original invoices charged from venders or contractors.

Emphasis of Matter

Without qualifying our opinion, we draw attention to Note 3 to the financial statements, which describes the basis of accounting. The accounting basis used in the preparation of these financial statements may differ from generally accepted accounting principles adopted in other countries and jurisdictions. The readers should therefore be aware that the accompanying financial statements are not intended to present the financial position and results of operations and cash flows in accordance with jurisdictions other than Lao PDR. Our opinion is not modified in respect of this matter.

Other Matter

The financial statements of the Company for the year ended 31 December 2015 were audited by another auditor who expressed an unmodified opinion on those financial statements on 28 March 2016.

Other Information

Management is responsible for the other information. The other information comprises the information included in the annual report, but does not include the financial statements and our auditor's report thereon. The annual report is expected to be made available to us after the date of this auditor's report.

Our opinion on the financial statements does not cover the other information and we will not express any form of assurance conclusion thereon.

In connection with our audit of the financial statements, our responsibility is to read the other information identified above when it becomes available and, in doing so, consider whether the other information is materially inconsistent with the financial statements or our knowledge obtained in the audit, or otherwise appears to be materially misstated.

Responsibilities of Management and Those Charged with Governance for the Financial Statements

